ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນດຳເນີນງານ
# ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ
# ຂອງ ສປປ ລາວ ປີ 2017-2022

## ກະຊວງອຸດສາຫະກຳ ແລະ ການຄ້າ

ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ

ວັນທີ 11 ສິງຫາ 2017

## ສາລະບານ


**ສະຫຼຸບຫຍໍ້ ...... 6**

**I. ພາກສະເໜີ ...... 9**

**II. ຂໍ້ມູນພື້ນຖານ ...... 11**

**III. ສະພາບລວມ ...... 13**

3.1 ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ...... 15

3.2 ບັນຫາ ແລະ ສິ່ງທ້າທາຍ ...... 16

**IV. ວິໄສທັດ ...... 18**

**V. ມາດຕະການຍຸດທະສາດ ...... 19**

5.1 ປັບປຸງກົນໄກການຈັດຕັ້ງ ເພື່ອເຮັດໃຫ້ການປະສານງານລະຫວ່າງ ຂະແໜງການກ່ຽວຂ້ອງໃຫ້ມີປະສິດທິຜົນ. 19

5.2 ການສ້າງຄວາມເຂັ້ມແຂງໃຫ້ແກ່ກົນໄກການຈັດຕັ້ງຂັ້ນທ້ອງຖິ່ນ ເພື່ອເພີ່ມທະວີການປະສານງານ, ການຕິດຕາມ ກວດກາ ແລະ ການຈັດຕັ້ງປະຕິບັດມາດຕະການວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ...... 19

5.3 ການເຊື່ອມໂຍງກັບພາກພື້ນ-ສາກົນ ແລະ ຮ່ວມມືກັບປະເທດທີ່ມີຊາຍແດນຕິດຈອດກັນ ...... 20

5.4 ການຮ່ວມມືປະສານງານກັບພາກທຸລະກິດ ...... 20

5.5 ການເຜີຍແຜ່ຂັ້ນຕອນການໃຫ້ບໍລິການທີ່ຕິດພັນກັບຂັ້ນຕອນການນຳເຂົ້າ-ສົ່ງອອກ ແລະ ການສ້າງລະບົບແຈ້ງພາສີທີ່ທັນສະໄໝ ...... 21

5.6 ການທົບທວນມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ...... 22

5.7 ການຈັດຕັ້ງປະຕິບັດສັນຍາການອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ ...... 23

**VI. ວິທີການຈັດຕັ້ງປະຕິບັດ ແລະ ຄາດໝາຍຜົນໄດ້ຮັບ ...... 24**

6.1 ວິທີການຈັດຕັ້ງປະຕິບັດ ...... 24

6.1.1 ເພີ່ມທະວີການປຶກສາຫາລື ໂດຍຜ່ານກອງປະຊຸມ ກຂອຄ ເພື່ອຕິດຕາມການຈັດຕັ້ງປະຕິບັດແຜນດຳເນີນງານຢ່າງໃກ້ຊິດ ...... 24

6.1.2 ສ້າງໜ່ວຍງານຈັດຕັ້ງປະຕິບັດແຜນດຳເນີນງານວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ຂະແໜງການທີ່ກ່ຽວຂ້ອງ ...... 24

6.1.3 ສ້າງຕັ້ງກົນໄກການປະສານງານວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ຂັ້ນແຂວງ ...... 24

6.1.4 ຂະຫຍາຍຊົ່ວໂມງບໍລິການກວດປ່ອຍສິນຄ້າຢູ່ດ່ານຊາຍແດນ ...... 25

6.1.5 ທົບທວນ ແລະ ການປະເມີນຜົນກະທົບຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ...... 25

6.1.6 ເຜີຍແຜ່ຂັ້ນຕອນການໃຫ້ບໍລິການທີ່ຕິດພັນກັບຂັ້ນຕອນນຳເຂົ້າ-ສົ່ງອອກ ...... 25

6.1.7 ລົບລ້າງດ່ານກວດກາທີ່ບໍ່ຈຳເປັນຕາມເສັ້ນທາງ ...... 25

6.1.8 ລວມສູນການຊຳລະຄ່າໃຊ້ຈ່າຍ ທີ່ຕິດພັນກັບຂັ້ນຕອນການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ຜ່ານທາງເອເລັກໂຕຣນິກ. ...... 26

6.1.9 ສ້າງນິຕິກຳວ່າດ້ວຍທຸລະກຳທາງດ້ານເອເລັກໂຕຣນິກ ແລະ ລາຍເຊັນເອເລັກໂຕຣນິກ ...... 26

6.1.10 ສ້າງຕັ້ງລະບົບແຈ້ງພາສີປະຕູດຽວ (NSW) ...... 26

6.1.11 ສ້າງຕັ້ງໂຄງການຜູ້ປະກອບການມາດຕະຖານເອອີໂອ (AEO) ...... 26

6.1.12 ຈັດຕັ້ງປະຕິບັດລະບົບແຈ້ງພາສີປະຕູດຽວອາຊຽນ ...... 26

6.1.13 ຈັດຕັ້ງປະຕິບັດມາດຕະການຂອງ ສັນຍາ ການອຳນວຍຄວາມສະດວກທາງດ້ານການຄ້າ ໃນຂອບອົງການການຄ້າໂລກ.. 27
6.2 ຄາດຄະເນຜົນໄດ້ຮັບ 29
6.2.1 ຫຼຸດຜ່ອນເວລາໃນການນຳເຂົ້າ ແລະ ສົ່ງອອກ 29
6.2.2 ຫຼຸດຜ່ອນຕົ້ນທຶນໃນການນຳເຂົ້າ ແລະ ສົ່ງອອກ 29
6.2.3 ຫຼຸດຜ່ອນຈຳນວນເອກະສານໃນການນຳເຂົ້າ ແລະ ສົ່ງອອກ 29
6.2.4 ປັບປຸງການຈັດລຳດັບຂອງ ສປປ ລາວ ໃນຕົວຊີ້ວັດການຄ້າຂ້າມແດນ 30
**VII. ໄລຍະການຈັດຕັ້ງປະຕິບັດ 31**
7.1 ໄລຍະເລີ່ມຕົ້ນ (ສິງຫາ 2017- ກຸມພາ 2018) 31
7.2 ໄລຍະສັ້ນ (ມີນາ-ທັນວາ 2018) 31
7.3 ໄລຍະກາງ (ມັງກອນ-ທັນວາ 2019) 31
7.4 ໄລຍະຍາວ (ມັງກອນ 2020 - ທັນວາ 2022) 32
**VIII. ແຜນການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ ປີ 2017-2022 33**
**IX. ການຕິດຕາມກວດກາ ການຈັດຕັ້ງປະຕິບັດ 36**
9.1 ການຕິດຕາມກວດກາ 36
ກ .ຕົວຊີ້ວັດການຄ້າຂ້າມແດນ (TAB) ພາຍໃຕ້ບົດລາຍງານຄວາມງ່າຍໃນການເຮັດທຸລະກິດ (EDB) 36
ຂ .ຕົວຊີ້ວັດການອຳນວຍຄວາມສະດວກທາງດ້ານການຄ້າຂອງ ອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ 37
9.2 ການລາຍງານ 37
9.3 ການປະເມີນຜົນ 38
**X. ກົນໄກການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ 39**
**XI. ງົບປະມານ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ 42**
**XII. ສະຫຼຸບ 43**
**ເອກະສານຊ້ອນທ້າຍ I :ຕາຕະລາງ ສະແດງ ກ່ຽວກັບ ມູນຄ່າການສົ່ງອອກຂອງ ສປປ ລາວ (ໂດລາສະຫະລັດ) ໃນລະຫວ່າງ ປີ 2010-2016 44**
**ເອກະສານຊ້ອນທ້າຍ II :ສະຫຼຸບຂໍ້ມູນການຄ້າຂ້າມແດນ (ຄວາມງ່າຍດາຍໃນການດຳເນີນທຸລະກິດ) ຂອງ ສປປ ລາວ ປີ 2016 45**
**ເອກະສານຊ້ອນທ້າຍ III :ສັນຍາການອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ 46**
**ເອກະສານຊ້ອນທ້າຍ IV : ລາຍລະອຽດໂຕຊີ້ວັດການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ 48**
**ເອກະສານຊ້ອນທ້າຍ V: ບັນດາມາດຕະການໃນສັນຍາການອຳນວຍຄວາມສະດວກທາງດ້ານການຄ້າຂອງ ສປປ ລາວ 50**

## ອັກສອນຫຍໍ້

| | |
|---|---|
| ADB | ທະນາຄານພັດທະນາອາຊີ |
| AEC | ປະຊາຄົມເສດຖະກິດອາຊຽນ |
| AEO | ໂຄງການຜູ້ປະກອບການມາດຕະຖານເອອີໂອ |
| AFAFGIT | ສັນຍາຂອບວຽກອາຊຽນວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າຜ່ານແດນ |
| ASEAN | ອາຊຽນ |
| ASW | ລະບົບແຈ້ງພາສີປະຕູດຽວອາຊຽນ |
| ASYCUDA | ລະບົບແຈ້ງພາສີແບບອີເລັກໂຕຣນິກ |
| ATIGA | ສັນຍາວ່າດ້ວຍການຄ້າສິນຄ້າອາຊຽນ |
| BPA | ການວິເຄາະຂັ້ນຕອນຂອງທຸລະກິດ |
| CBTA | ສັນຍາວ່າດ້ວຍການຂົນສົ່ງຂ້າມແດນ |
| DIMEX | ກົມການນຳເຂົ້າ ແລະ ສົ່ງອອກ |
| DTIS | ບົດສຶກສາວ່າດ້ວຍການເຊື່ອມໂຍງການຄ້າກັບສາກົນ |
| DTF | ຕົວຊີ້ວັດໄລຍະຫ່າງຂອງລຳດັບປະເທດທຽບກັບປະເທດທີ່ຈັດຕັ້ງປະຕິບັດໄດ້ດີທີ່ສຸດ |
| EDB | ຄວາມງ່າຍດາຍໃນການດຳເນີນທຸລະກິດ |
| ESCAP | ຄະນະກຳມາທິການດ້ານເສດຖະກິດ ແລະ ສັງຄົມສຳລັບອາຊີ ແລະ ປາຊີຟິກ |
| ETI | ດັດຊະນີຄວາມສາມາດດ້ານການຄ້າທີ່ພັດທະນາໂດຍ WEF |
| FDI | ການລົງທຶນຕ່າງປະເທດໂດຍທາງກົງ |
| GDP | ລວມຍອດຜະລິດຕະພັນພາຍໃນເບື້ອງຕົ້ນ |
| GMS | ເຂດອະນຸພາກພື້ນລຸ່ມແມ່ນ້ຳຂອງ |
| LCD | ກົມ ພາສີ ລາວ |
| LTP | ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ |
| MOIC | ກະຊວງ ອຸດສາຫະກຳ ແລະ ການຄ້າ |
| NCTPSD | ຄະນະກຳມະການແຫ່ງຊາດ ເພື່ອການພັດທະນາການຄ້າ ແລະ ພາກທຸລະກິດ |
| NSW | ລະບົບແຈ້ງພາສີປະຕູດຽວແຫ່ງຊາດ |
| NTM | ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ |
| OECD | ອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ |
| PDR | ສາທາລະນະລັດປະຊາທິປະໄຕປະຊາຊົນ |
| RIA | ການປະເມີນຜົນກະທົບຂອງລະບຽບການ |
| SME | ວິສາຫະກິດຂະໜາດນ້ອຍ ແລະ ກາງ |
| TAB | ການຄ້າຂ້າມແດນ |
| TBT | ສິ່ງກີດຂວາງທາງດ້ານເຕັກນິກຕໍ່ການຄ້າ |
| TF | ການອຳນວຍຄວາມສະດວກທາງດ້ານການຄ້າ |

| | |
|---|---|
| TFA | ສັນຍາການອຳນວຍຄວາມສະດວກທາງດ້ານການຄ້າ |
| TFI | ບັນດາຕົວຊີ້ວັດກ່ຽວກັບການອຳນວຍຄວາມສະດວກທາງດ້ານການຄ້າ |
| TFS | ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ |
| TFSP | ແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ |
| TIU | ໜ່ວຍງານຈັດຕັ້ງປະຕິບັດແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າຂັ້ນກົມ |
| TRS | ບົດສຶກສາເວລາໃນການປ່ອຍສິນຄ້າ ໂດຍພາສີ |
| WB | ທະນາຄານໂລກ |
| WCO | ອົງການພາສີໂລກ |
| WEF | ກອງປະຊຸມເສດຖະກິດໂລກ |
| WTO | ອົງການການຄ້າໂລກ |

# ສະຫຼຸບຫຍໍ້

ບັນດາປະເທດໃນພາກພື້ນອາຊຽນມີການຂະຫຍາຍຕົວຢ່າງຫຼວງຫຼາຍດ້ານການສົ່ງອອກໃນໄລຍະ 05 ປີຜ່ານມາ ແລະ ສປປ ລາວ ກໍ່ມີການສົ່ງອອກທີ່ເພີ່ມຂຶ້ນເຊັ່ນກັນ. ແຕ່ວ່າ, ເມື່ອເບິ່ງອັດຕາສ່ວນຂອງການສົ່ງອອກຕໍ່ GDP ແລ້ວ ເຫັນວ່າ ສປປ ລາວ ຍັງນອນຢູ່ໃນອັນດັບທ້າຍໆ ເມື່ອທຽບໃສ່ປະເທດອ້ອມຂ້າງ ໂດຍມີການຄ້າດ້ານສິນຄ້າກວມເອົາພຽງ 54% ຂອງ GDP, ເມື່ອທຽບກັບ ໄທ ແມ່ນ 126%, ກຳປູເຈຍ ແມ່ນ 127% ແລະ ສສ ຫວຽດນາມ ແມ່ນ 178%[1]. ເຖິງຢ່າງໃດກໍຕາມ, ອັດຕາສ່ວນດັ່ງກ່າວ ຍັງຄົງຊີ້ໃຫ້ເຫັນທ່າແຮງຂອງ ສປປ ລາວ ໃນການຂະຫຍາຍຕົວດ້ານການຄ້າ ໃນອະນາຄົດ ຖ້າມີການລົງທຶນໃສ່ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ.

ສປປ ລາວ ໄດ້ປະຕິບັດຕາມວາລະການອຳນວຍຄວາມສະດວກທາງດ້ານການຄ້າ ນັບແຕ່ໄລຍະຂ້າມຜ່ານ ເພື່ອກ້າວໄປສູ່ເສດຖະກິດຕະຫຼາດໃນຊຸມປີ 1990, ແຕ່ວ່າແນວທາງທີ່ເປັນຈຸດສຸມຕໍ່ກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ເລີ່ມຕົ້ນນັບແຕ່ປີ 2011 ໂດຍການຮັບຮອງເອົາແຜນຍຸດທະສາດອຳນວຍຄວາມສະດວກທາງດ້ານການຄ້າ ປີ 2011-2015, ຊຶ່ງຮັບຮູ້ເຖິງຄວາມສຳຄັນຂອງວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ໃນຖານະເປັນເຄື່ອງຈັກຂັບເຄື່ອນການເຕີບໂຕທາງດ້ານເສດຖະກິດ. ຈຸດປະສົງຫຼັກຂອງແຜນຍຸດທະສາດດັ່ງກ່າວແມ່ນ ເພື່ອເຮັດໃຫ້ຂັ້ນຕອນການນຳເຂົ້າ ແລະ ສົ່ງອອກຕ່າງໆທີ່ດ່ານຊາຍແດນມີຄວາມງ່າຍດາຍ ແລະ ຫຼຸດຜ່ອນຕົ້ນທຶນທາງດ້ານການຄ້າ ເພື່ອສົ່ງເສີມຄວາມໄດ້ປຽບໃນການແຂ່ງຂັນທາງດ້ານການຄ້າ. ແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າມີຈຸດມຸ່ງໝາຍ ເພື່ອບັນລຸວັດຖຸປະສົງທີ່ກ່າວມານັ້ນ ໂດຍການປະຕິບັດຕາມ 6 ມາດຕະການຍຸດທະສາດຄື: ການຍົກສູງວຽກງານອຳນວຍຄວາມສະດວກທາງດ້ານການຄ້າໃນບັນດາກະຊວງທີ່ກ່ຽວຂ້ອງ; ການສ້າງຄວາມງ່າຍດາຍຕໍ່ກັບຂັ້ນຕອນການຄ້າ ແລະ ພາສີ; ການຈັດຕັ້ງປະຕິບັດພັນທະອົງການການຄ້າໂລກ, ອາຊຽນ ແລະ ອະນຸພາກພື້ນແມ່ນ້ຳຂອງ; ການສ້າງຂີດຄວາມສາມາດໃຫ້ແກ່ພາກເອກະຊົນ; ແລະ ການສ້າງກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າແຫ່ງຊາດ.

ການທົບທວນຄືນແຜນຍຸດທະສາດອຳນວຍຄວາມສະດວກທາງດ້ານການຄ້າ ປີ 2011-2015 ສະແດງໃຫ້ເຫັນເຖິງຜົນໄດ້ຮັບໃນທາງບວກໂດຍລວມ ເພາະວ່າມາດຕະການຍຸດທະສາດສ່ວນໃຫຍ່ທີ່ກຳນົດໄວ້ໃນແຜນດັ່ງກ່າວ ແມ່ນສາມາດບັນລຸຜົນສຳເລັດໄດ້ ເປັນຕົ້ນແມ່ນການສ້າງຄວາມງ່າຍດາຍໃນຂັ້ນຕອນການແຈ້ງພາສີ, ການສະໜອງອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ, ແລະ ການສ້າງຕັ້ງກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າແຫ່ງຊາດ. ເຊິ່ງໄດ້ສ້າງຜົນກະທົບໃນທາງບວກ ແລະ ປະກອບສ່ວນເຂົ້າໃນການຫຼຸດຜ່ອນເວລາກວດປ່ອຍສິນຄ້ານຳເຂົ້າ ແລະ ສົ່ງອອກ.

ຂັ້ນຕອນການແຈ້ງພາສີໄດ້ຮັບການປັບປຸງໃຫ້ດີຂຶ້ນ ໂດຍການນຳໃຊ້ລະບົບແຈ້ງພາສີແບບອີເລັກໂຕຣນິກໃນທົ່ວປະເທດ ແລະ ນຳໃຊ້ກົນໄກການບໍລິຫານຄວາມສ່ຽງໃນການກວດກາສິນຄ້າ ໂດຍກຳນົດໄວ້ໃນຊ່ອງສີແດງ. ນອກນັ້ນ, ການປະສານງານການຄຸ້ມຄອງທີ່ດ່ານຊາຍແດນ, ການກວດສອບຄືນຫຼັງການແຈ້ງເສຍພາສີ, ການຢັ້ງຢືນຮັບຮອງລ່ວງໜ້າ ແລະ ອື່ນໆ ໄດ້ເຮັດໃຫ້ການແຈ້ງພາສີໄວຂຶ້ນກວ່າເກົ່າ ໂດຍເວລາສະເລ່ຍໃນການແຈ້ງພາສີຫຼຸດລົງຈາກ 11,5 ຊົ່ວໂມງ ໃນປີ 2012 ມາເປັນ 6,5 ຊົ່ວໂມງໃນປີ 2016. ເຖິງຢ່າງໃດກໍຕາມ, ການປັບປຸງຂັ້ນຕອນຕ່າງໆ ຂອງໜ່ວຍງານມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີຍັງຄົງເປັນບັນຫາທ້າທາຍ.

ພ້ອມດຽວກັນນັ້ນ, ກໍ່ມີຄວາມຄືບໜ້າຫຼາຍດ້ານໃນການປະຕິບັດພັນທະສັນຍາຕ່າງໆພາຍໃຕ້ອົງການການຄ້າໂລກ (WTO), ອາຊຽນ (ASEAN) ແລະ ອະນຸພາກພື້ນລຸ່ມແມ່ນ້ຳຂອງ (GMS) ລວມທັງ ການໃຫ້ສັດຕະຍາບັນແກ່ສັນຍາການອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ ໃນເດືອນກັນຍາ 2015 ແລະ ການເຊັນສັນຍາ ແລະ ອະນຸສັນຍາອື່ນໆ ພາຍໃຕ້ສັນຍາວ່າດ້ວຍການຂົນສົ່ງຂ້າມແດນ (CBTA). ການຈັດຕັ້ງປະຕິບັດການກວດກາຮ່ວມກັນຈຸດດຽວ (SSI & SWI) ທີ່ດ່ານແດນສະຫວັນ-ລາວບາວ ທີ່ເປັນດ່ານຊາຍແດນລາວ-ຫວຽດນາມ ພາຍໃຕ້ສັນຍາ ວ່າດ້ວຍ ການຂົນສົ່ງຂ້າມແດນ ແມ່ນຜົນສຳເລັດອັນສຳຄັນ ເນື່ອງຈາກເປັນສ່ວນໜຶ່ງຂອງພັນທະສັນຍາໃນຂອບອະນຸພາກພື້ນລຸ່ມແມ່ນ້ຳຂອງ.

[1] ຂໍ້ມູນຈາກ World Integrated Trade Solution, World Bank, 2015.

ພ້ອມນັ້ນ, ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ (ກຂອຄ) ກໍ່ໄດ້ຖືກສ້າງຂຶ້ນໃນປີ 2010 ເຊິ່ງເປັນກົນໄກໃນການຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າຂອງ ສປປ ລາວ ໂດຍໄດ້ສືບຕໍ່ເຮັດບົດບາດໃນການຂັບເຄື່ອນວາລະວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ນັບແຕ່ໄດ້ຮັບການສ້າງຕັ້ງເປັນຕົ້ນມາ. ເຖິງຢ່າງໃດກໍຕາມ, ກຂອຄ ຍັງບໍ່ສາມາດຈັດກອງປະຊຸມພົບປະປຶກສາຫາລືໄດ້ຢ່າງສະໝ່ຳສະເໝີ (ພຽງແຕ່ໜຶ່ງຄັ້ງຕໍ່ປີ), ເຮັດໃຫ້ການຕິດຕາມ-ກວດກາປະຈຳວັນຂອງ ກຂອຄ ຕົກເປັນຄວາມຮັບຜິດຊອບຂອງກົມການນຳເຂົ້າ ແລະ ສົ່ງອອກ (ກຂອ) ທີ່ມີໜ້າທີ່ພຽງແຕ່ເປັນຫ້ອງການປະຈຳກອງເລຂາໃຫ້ແກ່ ກຂອຄ ເທົ່ານັ້ນ ໂດຍບໍ່ໄດ້ຖືກມອບສິດອຳນາດໃຫ້ເຮັດບົດບາດຂັບເຄື່ອນ ຫຼື ຕິດຕາມ-ກວດກາໃນນາມຂອງ ກຂອຄ.

ການປະເມີນຜົນການຈັດຕັ້ງປະຕິບັດແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ປີ 2011-2015 ຍັງສະທ້ອນໃຫ້ເຫັນເຖິງຜົນໄດ້ຮັບໃນທາງບວກ ຕົວຢ່າງ, ການສົ່ງອອກສິນຄ້າຂອງ ສປປ ລາວ ມີການເຕີບໂຕສູງເຖິງ 125% ໃນລະຫວ່າງປີ 2011 ແລະ 2016. ພ້ອມນັ້ນ, ຈຳນວນເອກະສານ, ເວລາ ແລະ ຄ່າໃຊ້ຈ່າຍໃນການສົ່ງອອກ ແລະ ນຳເຂົ້າສິນຄ້າຍັງມີການຫຼຸດລົງ ອີງຕາມຫຼັກຖານໃນການປັບປຸງຕົວຊີ້ວັດທາງດ້ານການຄ້າລະຫວ່າງປະເທດ ຈາກບົດລາຍງານຄວາມງ່າຍດາຍໃນການດຳເນີນທຸລະກິດໃນໄລຍະເວລາດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ, ຄວາມຄືບໜ້າຂ້ອນຂ້າງຈະຊັກຊ້າ ອີງຕາມບົດລາຍງານສະບັບຫລ້າສຸດຂອງບົດສຳຫຼວດຄວາມງ່າຍດາຍໃນການດຳເນີນທຸລະກິດຂອງທະນາຄານໂລກປີ 2016.

ເປັນທີ່ຮູ້ນຳກັນດີແລ້ວວ່າ ການປັບປຸງທີ່ກ່າວມານັ້ນ ສ່ວນໃຫຍ່ແມ່ນ ກ່ຽວກັບ ຂັ້ນຕອນທີ່ດ່ານຊາຍແດນ ຊຶ່ງເຮັດໃຫ້ເວລາສະເລ່ຍໃນການແຈ້ງປ່ອຍສິນຄ້າຫຼຸດລົງຢ່າງຊັດເຈນ. ແຕ່ວ່າ ເວລາທີ່ໃຊ້ໃນການປະກອບເອກະສານເພື່ອໃຫ້ສອດຄ່ອງກັບລະບຽບການ ເຊັ່ນ: ການຂໍໃບຢັ້ງຢືນ, ໃບອະນຸຍາດ ແລະ ການອະນຸມັດດ້ານຄຸນນະພາບອື່ນໆ ທີ່ຕິດພັນກັບມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ແມ່ນຍັງໃຊ້ເວລາຫຼາຍ. ສະນັ້ນ, ການທົບທວນ ແລະ ການປະເມີນຜົນກະທົບຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ຕ້ອງໄດ້ດຳເນີນການຢ່າງຖືກຕ້ອງ ເພື່ອກຳນົດປະສິດທິຜົນຂອງການນຳໃຊ້ມາດຕະການດັ່ງກ່າວ ແລະ ຮູ້ໄດ້ວ່າ ຄວນຈະຮັກສາມາດຕະການເຫຼົ່ານັ້ນໄວ້ ຫຼື ບໍ່. ບັນດາຂະແໜງການທີ່ກ່ຽວຂ້ອງທີ່ຮັບຜິດຊອບມາດຕະການເຫຼົ່ານັ້ນຕ້ອງໄດ້ມີການຈັດຕັ້ງປະຕິບັດຂັ້ນຕອນດ້ານເອກະສານດ້ວຍຄວາມວ່ອງໄວ ແລະ ຫຼຸດຜ່ອນເວລາທີ່ໃຊ້ໂດຍລວມໃນການນຳເຂົ້າ ຫຼື ສົ່ງອອກ. ສະນັ້ນ, ຈຶ່ງຕ້ອງມີການຕິດຕາມ-ກວດກາ ຢ່າງມີປະສິດທິຜົນທາງດ້ານວັດຖຸປະສົງ ແລະ ຂອບເຂດເວລາຂອງການດຳເນີນເອກະສານ ອີງໃສ່ແນວທາງທີ່ວາງໄວ້ ແລະ ມີການປະສານງານກັບບັນດາຂະແໜງການທີ່ກ່ຽວຂ້ອງທີ່ດີຂຶ້ນ ເພື່ອຊຸກຍູ້ວາລະວຽກງານອຳນວຍຄວາມສະດວກທາງດ້ານການຄ້າໃຫ້ມີຄວາມພ້ອມພຽງ ແລະ ສອດຄ່ອງ.

ພ້ອມນັ້ນ, ການປະຊຸມປຶກສາຫາລື ແລະ ການສ້າງຂີດຄວາມສາມາດໃຫ້ແກ່ພາກທຸລະກິດ ໃນໄລຍະຜ່ານມາຍັງບໍ່ສາມາດປະຕິບັດໄດ້ຢ່າງຕໍ່ເນື່ອງເທົ່າທີ່ຄວນ ເນື່ອງຈາກວ່າ ກອງປະຊຸມຮ່ວມກັບພາກທຸລະກິດແມ່ນສາມາດຈັດເປັນບາງຄັ້ງຄາວເທົ່ານັ້ນ. ໂດຍສະເພາະໃນເວລາຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ແມ່ນບໍ່ມີການປະສານງານກັບພາກທຸລະກິດ. ດັ່ງນັ້ນ, ມີຄວາມຈຳເປັນທີ່ພາກທຸລະກິດເອງຕ້ອງໄດ້ມີສ່ວນຮ່ວມກັບບັນດາຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ເພາະວ່າຈະເປັນຜູ້ເຂົ້າໃຈບັນຫາ ແລະ ສິ່ງທ້າທາຍໃນທ້ອງຖິ່ນເພື່ອຈະສາມາດປັບປຸງການເຊື່ອມໂຍງດ້ານໂລຈິສຕິກ ແລະ ການຄ້າ ເຂົ້າກັບຕ່ອງໂສ້ມູນຄ່າເພີ່ມຂອງໂລກ ເພື່ອຊ່ວຍໃຫ້ບັນລຸທ່າແຮງທາງດ້ານເສດຖະກິດ ແລະ ສັງຄົມຢ່າງເຕັມສ່ວນ ຈາກການຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ.

ສຳລັບແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ປີ 2017-2022 ຈະສະເໜີກົນໄກການເຮັດວຽກ ແລະ ການປະສານງານລະຫວ່າງ ກຂອຄ ແລະ ກອງປະຊຸມທຸລະກິດລາວ ເພື່ອຍົກສູງການປຶກສາຫາລືຢ່າງມີປະສິດທິພາບລະຫວ່າງພາກລັດ ແລະ ພາກທຸລະກິດ.

ສປປ ລາວ ໄດ້ມີຄວາມຄືບໜ້າໃນການປັບປຸງພື້ນຖານໂຄງລ່າງ, ຖະໜົນຫົນທາງ ແລະ ດ່ານຊາຍແດນ, ແລະ ໄດ້ພະຍາຍາມສຸມໃສ່ຍົກສູງປະສິດທິພາບໃນການສະໜອງການບໍລິການ ເພື່ອໃຫ້ສາມາດນຳໃຊ້ປະໂຫຍດຈາກພື້ນຖານໂຄງລ່າງທີ່ໄດ້ຮັບການປັບປຸງນັ້ນ. ພ້ອມນັ້ນ, ແຜນດຳເນີນງານວຽກອຳນວຍຄວາມສະດວກທາງດ້ານການຄ້າ ປີ 2017-2022 ຈະຊອກຫາວິທີທາງເພື່ອແກ້ໄຂຊ່ອງວ່າງທີ່ຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ ເຊັ່ນ: ການປະສານງານກັບບັນດາຂະແໜງການທີ່ກ່ຽວຂ້ອງ, ການສື່ສານກັບບັນດາຫ້ອງການຂັ້ນແຂວງ, ການປະສານງານກັບພາກທຸລະກິດ ແລະ ການຫຼຸດຜ່ອນມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາ

ສີ ທີ່ບໍ່ຈຳເປັນ. ບັນຫາໃໝ່ທີ່ຍົກຂຶ້ນໃນແຜນດຳເນີນງານນີ້ ແມ່ນການຊຸກຍູ້ຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບ, ແລະ ສົ່ງເສີມການມີສ່ວນຮ່ວມກັບບັນດາຜູ້ມີສ່ວນກ່ຽວຂ້ອງ ເພື່ອເຮັດໃຫ້ທຸກແຜນດຳເນີນງານສຳເລັດ.

ແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ປີ 2017-2022 ໄດ້ສະເໜີ 07 ມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ລວມມີ ການພັດທະນາກົນໄກດ້ານສະຖາບັນການຈັດຕັ້ງ ເພື່ອປັບປຸງການປະສານງານກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ກັບກົນໄກການປະສານງານໃນຂັ້ນທ້ອງຖິ່ນ ທີ່ຕິດພັນກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ. ພ້ອມນັ້ນ, ແຜນດຳເນີນງານນີ້ ຍັງໄດ້ສະເໜີກົນໄກການຮ່ວມມືກັບພາກທຸລະກິດໃນການຈັດຕັ້ງປະຕິບັດບັນດາມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ໄດ້ສຸມໃສ່ການຮ່ວມມືລະຫວ່າງປະເທດ ແລະ ການເຊື່ອມໂຍງກັບພາກພື້ນ. ສິ່ງສຳຄັນ, ກໍ່ຍັງໄດ້ໃຫ້ຄວາມສຳຄັນກັບບັນຫາທ້າທາຍໃນການຈັດຕັ້ງປະຕິບັດທຸກມາດຕະການທີ່ລະບຸ ໃນສັນຍາການອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ ໃນການຈັດຕັ້ງປະຕິບັດພັນທະຂອງສັນຍາໃຫ້ທັນເວລາ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍດ້ານການຄ້າໃຫ້ໄດ້ຫຼາຍທີ່ສຸດ. ນອກນັ້ນ, ແຜນດຳເນີນງານນີ້ ຍັງຮັບປະກັນການປະເມີນເວລາ ແລະ ຄ່າໃຊ້ຈ່າຍຂອງບັນດາມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ທີ່ມີຢູ່ໃນປະຈຸບັນ ເພື່ອລົບລ້າງຂັ້ນຂອດທີ່ບໍ່ຈຳເປັນ. ແຜນດຳເນີນງານນີ້ ຍັງໄດ້ໃຫ້ຄຳແນະນຳບາງມາດຕະການທີ່ເປັນບູລິມະສິດ ເຊັ່ນ: ສຶກສາຄວາມເປັນໄປໄດ້ໃນການຂະຫຍາຍເວລາການໃຫ້ບໍລິການທີ່ດ່ານຊາຍແດນຫຼັກ, ການຢຸດຕິການກວດກາລົດຂົນສິ່ງຕາມເສັ້ນ ທາງທີ່ບໍ່ຈຳເປັນ, ການຊຳລະເງິນຈຸດດຽວ, ການພິມເຜີຍແຜ່ ກ່ຽວກັບ ມາດຕະຖານການໃຫ້ບໍລິການຂອງທຸກຂະແໜງການກ່ຽວຂ້ອງ ແລະ ການສ້າງຕັ້ງລະບົບແຈ້ງພາສີປະຕູດຽວ ຊຶ່ງຈະສົ່ງຜົນເຮັດໃຫ້ເວລາ ແລະ ຄ່າໃຊ້ຈ່າຍໃນການດຳເນີນການຄ້າຫຼຸດລົງ.

ໃນການປະເມີນຜົນ ການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານການອຳນວຍຄວາມສະດວກທາງດ້ານການຄ້ານີ້ ຈະນຳໃຊ້ຕົວຊີ້ວັດການປະຕິບັດງານ (Key Performance Indicators) ແບບປະສົມປະສານຈາກຫຼາຍແຫຼ່ງ ເຊັ່ນ: ຕົວຊີ້ວັດທີ່ເປັນຜົນໄດ້ຮັບຂອງດັດຊະນີຂອງການຄ້າຂ້າມແດນ ໃນບົດສຶກສາຄວາມງ່າຍດາຍຂອງການດຳເນີນທຸລະກິດ (Ease of Doing Business) ຂອງທະນາຄານໂລກ (ໂດຍສະເພາະຕົວຊີ້ວັດການອຳນວຍຄວາມສະດວກທາງດ້ານການຄ້າ) ທີ່ພັດທະນາຂຶ້ນໂດຍອົງການເພື່ອການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ (OECD) ທັງສອງຕົວຊີ້ວັດນີ້ ຈະເຮັດໃຫ້ພວກເຮົາສາມາດຕິດຕາມກວດກາຄວາມຄືບໜ້າຂອງແຕ່ລະວຽກງານ ແລະ ເປົ້າໝາຍຕ່າງໆທີ່ກຳນົດໄວ້ໃນແຜນດຳເນີນງານສະບັບນີ້. ພ້ອມດຽວກັນນັ້ນ, ການຕິດຕາມກວດກາຍັງຈະອີງໃສ່ຂໍ້ມູນເວລາການກວດປ່ອຍສິນຄ້າຈາກຂະແໜງພາສີ. ແຜນດຳເນີນງານນີ້, ຍັງໄດ້ອະທິບາຍເປັນແຕ່ລະກິດຈະກຳ ພ້ອມທັງກຳນົດເວລາຂອງການຈັດຕັ້ງປະຕິບັດໃນແຕ່ລະໄລຍະ. ເພື່ອເຮັດໃຫ້ການປະສານງານມີປະສິດທິພາບ ລະຫວ່າງ ບັນດາຂະແໜງການໃນຂັ້ນສູນກາງ ແລະ ທ້ອງຖິ່ນ, ກົນໄກການຈັດຕັ້ງ ແລະ ການປະສານງານການຄຸ້ມຄອງການບໍລິຫານຈະໄດ້ຮັບການປັບປຸງຄືນໃໝ່. ການສະເໜີຂໍການຊ່ວຍເຫຼືອດ້ານເຕັກນິກ ເພື່ອນຳໃຊ້ເຂົ້າ ໃນການຈັດຕັ້ງປະຕິບັດແຜນດຳເນີນງານນີ້ ແມ່ນຄາດວ່າຈະໄດ້ຮັບຈາກກອງທຶນ TDF-2 ໃນໄລຍະຕົ້ນຈົນກວ່າ ກົມການນຳເຂົ້າ ແລະ ສົ່ງອອກ ຈະໄດ້ຮັບການຈັດສັນງົບປະມານຈາກລັດຖະບານ ແລະ ຈາກການຊ່ວຍເຫຼືອຂອງບັນດາຄູ່ຮ່ວມພັດທະນາ.

# I. ພາກສະເໜີ

ໃນໄລຍະ 05 ປີຜ່ານມາ ເຖິງຈະມີຫຼາຍບັນຫາທ້າທາຍໃນເສດຖະກິດໂລກ, ແຕ່ເສດຖະກິດຂອງ ສປປ ລາວ ກໍ່ມີການຂະຫຍາຍຕົວຢ່າງຕໍ່ເນື່ອງໃນອັດຕາສະເລ່ຍ 7.9% ຕໍ່ປີ. ການຂະຫຍາຍຕົວທາງດ້ານເສດຖະກິດ ໄດ້ເຮັດໃຫ້ບໍລິມາດທາງດ້ານການຄ້າເພີ່ມຂຶ້ນຢ່າງຕໍ່ເນື່ອງໃນໄລຍະເວລາດັ່ງກ່າວ ເຊັ່ນ: ການສົ່ງອອກເພີ່ມຂຶ້ນຫຼາຍກວ່າ 02 ເທົ່າຈາກ 1.44 ຕື້ໂດລາສະຫະລັດ ໃນປີ 2011-2012 ມາເປັນ 3.25 ຕື້ໂດລາສະຫະລັດ ໃນປີ 2015-2016[2]. ການນຳເຂົ້າ ກໍ່ເພີ່ມຂຶ້ນຈາກ 2.32 ຕື້ໂດລາສະຫະລັດ ໃນປີ 2010-2011 ມາເປັນ 4 ຕື້ໂດລາສະຫະລັດ ໃນປີ 2015-2016. ການຂະຫຍາຍຕົວທາງດ້ານເສດຖະກິດໃນຄັ້ງນີ້ ແມ່ນເນື່ອງມາຈາກຫຼາຍປັດໃຈ ເປັນຕົ້ນ ແມ່ນການຈັດຕັ້ງປະຕິບັດແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ປີ 2011-2015, ຊຶ່ງໄດ້ເຮັດໃຫ້ເວລາ ແລະ ຄ່າໃຊ້ຈ່າຍໃນການດຳເນີນທຸລະກິດຫຼຸດລົງ ຢ່າງຕໍ່ເນື່ອງ.

ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ່ VIII ສົກປີ 2016-2020 ວາງເປົ້າໝາຍເພື່ອເຮັດໃຫ້ລາຍໄດ້ຕໍ່ຫົວຄົນເພີ່ມຂຶ້ນເປັນ 02 ເທົ່າ ພາຍໃນປີ 2020 ແລະ ໃຫ້ສາມາດຫຼຸດພົ້ນອອກຈາກສະຖານະພາບຄວາມເປັນປະເທດດ້ອຍພັດທະນາທີ່ກຳນົດໄວ້ໃນຊ່ວງທ້າຍຂອງແຜນດັ່ງກ່າວ.[3] ພູມີປະເທດ ກໍ່ເປັນສິ່ງທ້າທາຍໜຶ່ງ ເນື່ອງຈາກວ່າເກືອບໝົດທຸກແຂວງມີຊາຍແດນຕິດຈອດກັບປະເທດເພື່ອນບ້ານ ແລະ ມີບັນດາຕົວເມືອງຢູ່ໃກ້ກັບຈຸດໃຈກາງເມືອງໃຫຍ່ຂອງ ສປປ ລາວ. ເນື່ອງຈາກແຜນ VIII ໄດ້ເນັ້ນໜັກໃສ່ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ເພື່ອຫຼຸດຜ່ອນຊ່ອງວ່າງໃນການພັດທະນາກັບບັນດາປະເທດ ອື່ນໆ, ສະນັ້ນ ການພັດທະນາວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ໃນທຸກຂົງເຂດຂອງ ສປປ ລາວ ຕ້ອງໄດ້ຄຳນຶງເຖິງຄວາມຈຳເປັນໃນການເຊື່ອມໂຍງກັບປະເທດໃກ້ຄຽງ ແລະ ພາກພື້ນ ເພື່ອແນໃສ່ດຶງດູດການລົງທຶນຈາກຕ່າງປະເທດ[4].

ໃນຊ່ວງ 2-3 ທົດສະວັດທີ່ຜ່ານມາ, ບັນດາປະເທດໃກ້ຄຽງ ສປປ ລາວ ເຊັ່ນ: ສສ ຫວຽດນາມ ສາມາດດຶງດູດການລົງທຶນຈາກທົ່ວໂລກ ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວຢ່າງວ່ອງໄວ ໃນນັ້ນຫຼາຍບໍລິສັດ ເຊັ່ນ: ອາດິດາສ, ອິນເທລ, ໄມໂຄຣຊອຟ ແລະ ຊຳຊຸງ[5] ໄດ້ເຄື່ອນຍ້າຍຖານການຜະລິດຈາກ ສປ ຈີນ ມາຍັງ ສສ ຫວຽດນາມ. ນອກຈາກ ຄ່າແຮງຂັ້ນຕ່ຳ ອັນເປັນປັດໃຈສຳຄັນໃນການດຶງດູດການລົງທຶນຈາກຕ່າງປະເທດ (FDI) ໃນ ສສ ຫວຽດນາມ ແລ້ວ ຍັງມີສະພາບແວດລ້ອມທີ່ເອື້ອອຳນວຍໃນການດຳເນີນທຸລະກິດທີ່ດີ. ໃນລະຫວ່າງປີ 2011-2015, ການສົ່ງອອກຂອງ ສສ ຫວຽດນາມ ເພີ່ມຂຶ້ນຈາກ 96.9 ຕື້ໂດລາສະຫະລັດ ມາເປັນ 162 ຕື້ໂດລາສະຫະລັດ[6]. ພ້ອມດຽວກັນ, ເສດຖະກິດຂອງກຳປູເຈຍ ກໍດຳເນີນໄປດ້ວຍດີ ຊຶ່ງເຫັນໄດ້ຈາກການສົ່ງອອກມີການຂະຫຍາຍຕົວ ໂດຍສະເພາະໃນຂະແໜງການເຄື່ອງຕັດຫຍິບ. ໃນລະຫວ່າງປີ 2011-2015, ການສົ່ງອອກໂດຍລວມ ຂະຫຍາຍຕົວຈາກ 5 ຕື້ໂດລາສະຫະລັດ ມາເປັນ 8.54 ຕື້ໂດລາສະຫະລັດ[7]. ສ່ວນແບ່ງຂອງການສົ່ງອອກໃນ GDP ຂອງປະເທດ ມີການຂະຫຍາຍຕົວສູງເຖິງ 160% ສຳລັບ ລຊ ໄທ; 130% ສຳລັບ ສສ ຫວຽດນາມ; ແລະ 129% ສຳລັບ ກຳປູເຈຍ, ໃນຂະນະທີ່ ສປປ ລາວ[8] ມີພຽງປະມານ 68%. ສິ່ງເຫຼົ່ານີ້ ສະທ້ອນໃຫ້ເຫັນວ່າ ການເຕີບໂຕດ້ານການສົ່ງອອກໃນ ສປປ ລາວ ຍັງຈະມີທ່າແຮງຫຼາຍ ຖ້າຫາກມີການປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍຄວາມສະດວກທາງດ້ານການຄ້າ.

ໃນຂະນະທີ່ ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ເປັນວາລະໜຶ່ງທີ່ສຳຄັນນັບແຕ່ ສປປ ລາວ ກ້າວຂ້າມຜ່ານສູ່ເສດຖະກິດຕະຫຼາດໃນຕົ້ນຊຸມປີ 1990, ລັດຖະບານກໍ່ໄດ້ໃຫ້ຄວາມສຳຄັນຕໍ່ວຽກງານດັ່ງກ່າວ ຊຶ່ງໄດ້ສະແດງອອກໂດຍການ

---

[2] ອີງຕາມຂໍ້ມູນຈາກພະແນກຄົ້ນຄວ້າສັງລວມ, ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງ ອຸດສາຫະກຳ ແລະ ການຄ້າ, ສປປ ລາວ.

[3] ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຂອງ ສປປ ລາວ ຄັ້ງທີ VIII ສຳລັບປີ 2016-2020. ມິຖຸນາ 2016.

[4] ບົດສຶກສາ "ສປປ ລາວ ຢູ່ເທິງເສັ້ນທາງເລືອກ: ຍຸດທະສາດການພັດທະນາອຸດສາຫະກຳ 2016-2030"; ERIA, ຈາກາຕ້າ, ກໍລະກົດ 2016.

[5] ສສ ຫວຽດນາມ, ກຳປູເຈຍ & ສປປ ລາວ ຄາດວ່າຈະຂັບເຄື່ອນການເຕີບໂຕໃນອາຊີ; ແປຈາກສື່. https://www.translatemedia.com/us/blog-usa/vietnam-cambodia-laos-expected-drive-growth-asia/

[6] ບົດສຶກສາ " ແນວທາງດການເຊື່ອມໂຍງ ການຄ້າໂລກ, ທະນາຄານໂລກ; 2016.

[7] ບົດສຶກສາ " ແນວທາງດການເຊື່ອມໂຍງ ການຄ້າໂລກ, ທະນາຄານໂລກ; 2016.

[8] ບົດລາຍງານການເຊື່ອມໂຍງດ້ານລະບົບແຈ້ງພາສີຂອງອາຊຽນ, 2015.

ຮັບຮອງເອົາແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ (ແຜນຍຸດທະສາດ ອຄ) ປີ 2011-2015. ແຜນຍຸດທະສາດດັ່ງກ່າວ ຍັງໄດ້ກຳນົດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອເຮັດໃຫ້ຂັ້ນຕອນການຄ້າລະຫວ່າງປະເທດມີຄວາມງ່າຍດາຍ, ຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍທີ່ຕິດພັນກັບການຄ້າ ຊຶ່ງຖືໄດ້ວ່າເປັນປັດໄຈໜຶ່ງທີ່ສຳຄັນໃນການປະກອບສ່ວນເຂົ້າໃນຜົນສຳເລັດຂອງການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃນໄລຍະຜ່ານມາ. ນອກນັ້ນ, ຍັງເປັນການປະກອບສ່ວນເຂົ້າໃນແຜນນະໂຍບາຍ ເພື່ອຫຼຸດພົ້ນອອກຈາກຄວາມເປັນປະເທດດ້ອຍພັດທະນາ ພາຍໃນປີ 2020.

ແຜນຍຸດທະສາດ ອຄ ປີ 2011-2015 ໄດ້ກຳນົດ 6 ຍຸດທະສາດຫຼັກ ທີ່ປິ່ນອ້ອມວຽກງານອຳນວຍຄວາມສະດວກທາງດ້ານການຄ້າ, ແຜນຍຸດທະສາດ ອຄ ດັ່ງກ່າວ ແນໃສ່ເຮັດໃຫ້ມູນຄ່າການສົ່ງອອກເພີ່ມຂຶ້ນ 18% ຕໍ່ປີ ແລະ ການຄ້າຜ່ານແດນເພີ່ມຂຶ້ນ 10% ຕໍ່ປີ. ຫຼາຍໆມາດຕະການໃນແຜນຍຸດທະສາດ ອຄ ໄດ້ຖືກຈັດຕັ້ງປະຕິບັດສຳເລັດຕາມກຳນົດເວລາ ຊຶ່ງເຮັດໃຫ້ມູນຄ່າການສົ່ງອອກສິນຄ້າຂອງ ສປປ ລາວ ເພີ່ມຂຶ້ນເຖິງ 124% ໃນລະຫວ່າງປີ 2011-2015.

ເຖິງຢ່າງໃດກໍຕາມ ຍັງມີຄວາມຈຳເປັນທີ່ຈະຕ້ອງສືບຕໍ່ໃນການປັບປຸງຂັ້ນຕອນການນຳເຂົ້າ ແລະ ສົ່ງອອກ ໃຫ້ມີຄວາມສະດວກວ່ອງໄວຂຶ້ນຕື່ມ ເປັນຕົ້ນມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ຊຶ່ງໄດ້ສະແດງໃຫ້ເຫັນວ່າການຂໍອະນຸຍາດນຳເຂົ້າ ແລະ ການກຳນົດໂກຕ້າ ຍັງກວມເຖິງ 34% ຂອງຂະບວນການນຳເຂົ້າທັງໝົດ ເຊັ່ນ: ການອອກໃບຢັ້ງຢືນຄຸນນະພາບ ແລະ ໃບຢັ້ງຢືນມາດຕະຖານ ທີ່ພົວພັນເຖິງການນຳເຂົ້າສິນຄ້າ ເປັນສາເຫດເຮັດໃຫ້ເກີດມີການລ່າຊ້າໃນການກວດປ່ອຍສິນຄ້າ ແລະ ເພີ່ມຕົ້ນທຶນໃນການດຳເນີນທຸລະກິດ ຊຶ່ງເປັນບູລິມະສິດຕົ້ນຕໍຈຳເປັນຕ້ອງໄດ້ຮັບການແກ້ໄຂ ໂດຍໄວ.

ພ້ອມດຽວກັນນັ້ນ, ສປປ ລາວ ຍັງມີພັນທະໃນການຈັດຕັ້ງປະຕິບັດບັນດາມາດຕະການອຳນວຍຄວາມສະດວກທາງດ້ານການຄ້າຕາມຂອບເຂດ ແລະ ເວລາ ທີ່ລະບຸໄວ້ໃນສັນຍາ ອຄ ໃນຂອບອົງການການຄ້າໂລກ ຊຶ່ງສັນຍາດັ່ງກ່າວ ໄດ້ມີຜົນບັງຄັບໃຊ້ນັບແຕ່ວັນທີ 22 ກຸມພາ 2017 ເປັນຕົ້ນມາ. ໃນຂະນະທີ່ ສັນຍາດັ່ງກ່າວໄດ້ໃຫ້ຄວາມຍືດຍຸ່ນແກ່ບັນດາປະເທດດ້ອຍພັດທະນາ ເພື່ອການຈັດຕັ້ງປະຕິບັດບັນດາມາດຕະການຕ່າງໆ, ແຕ່ ສປປ ລາວ ຈຳເປັນຕ້ອງໄດ້ຈັດຕັ້ງປະຕິບັດພັນທະເຫຼົ່ານັ້ນໃຫ້ໄວເທົ່າທີ່ຈະເປັນໄປໄດ້ ເພື່ອປັບປຸງຄວາມໄດ້ປຽບໃນການແຂ່ງຂັນທາງດ້ານການຄ້າຂອງ ສປປ ລາວ.

## II. ຂໍ້ມູນພື້ນຖານ

ລັດຖະບານຂອງ ສປປ ລາວ ໄດ້ຮັບຮອງແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ປີ 2011-2015 ໃນວັນທີ 18 ກໍລະກົດ 2011. ຈຸດປະສົງຫຼັກຂອງແຜນຍຸດທະສາດດັ່ງກ່າວແມ່ນ:

- ເພື່ອເຮັດໃຫ້ການຄ້າລະຫວ່າງປະເທດ ແລະ ຂັ້ນຕອນການແຈ້ງພາສີສະດວກ ແລະ ງ່າຍດາຍ; ແລະ
- ເພື່ອຫຼຸດຜ່ອນຕົ້ນທຶນທາງດ້ານການຄ້າ ແລະ ສ້າງຂີດຄວາມສາມາດໃນການແຂ່ງຂັນຂອງທຸລະກິດລາວ.

ເພື່ອບັນລຸຈຸດປະສົງຂ້າງເທິງນັ້ນ, ແຜນຍຸດທະສາດ ອຄ ໄດ້ກຳນົດ 6 ມາດຕະການຍຸດທະສາດ ຄື:

1. ຍົກສູງວຽກງານອຳນວຍຄວາມສະດວກທາງດ້ານການຄ້າໃນບັນດາກະຊວງ ແລະ ຂະແໜງການກ່ຽວຂ້ອງ;
2. ເຮັດໃຫ້ຂັ້ນຕອນທາງດ້ານການຄ້າ ແລະ ພາສີ ມີຄວາມກະທັດຮັດ, ໂປ່ງໃສ, ສະດວກ, ວ່ອງໄວ ແລະ ກົມກຽວກັນ;
3. ຈັດຕັ້ງປະຕິບັດບັນດາພັນທະໃນຂອບສອງຝ່າຍ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ;
4. ປັບປຸງ ແລະ ສ້າງຂີດຄວາມສາມາດຂອງພາກທຸລະກິດ ໃຫ້ສາມາດດຳເນີນການຄ້າໄດ້ຢ່າງມີປະສິດທິຜົນ ໂດຍສອດຄ່ອງກັບລະບຽບຫຼັກການ;
5. ສະໜອງອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ທີ່ສອດຄ່ອງກັບຄວາມຕ້ອງການ ເພື່ອຮັບປະກັນການບໍລິຫານຄຸ້ມຄອງຂັ້ນຕອນດ້ານການຄ້າ ແລະ ພາສີ ໃຫ້ມີຄວາມຄ່ອງຕົວ ແລະ ມີປະສິດທິພາບ;
6. ສ້າງຕັ້ງກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ.

ຜ່ານການປະເມີນການຈັດຕັ້ງປະຕິບັດແຜນຍຸດທະສາດ ອຄ ເຫັນວ່າ ບັນດາກິດຈະກຳຕ່າງໆ ແລະ ຂອບເຂດເວລາ ຂອງແຕ່ລະຍຸດທະສາດ ທີ່ໄດ້ລະບຸໄວ້ໃນແຜນປະຕິບັດງານ ໄດ້ຮັບການຈັດຕັ້ງປະຕິບັດເກືອບສຳເລັດຕາມກຳນົດເວລາທັງໝົດ ເຊັ່ນ: ການສ້າງຄວາມງ່າຍດາຍໃນຂັ້ນຕອນການຄ້າ ແລະ ການແຈ້ງພາສີ, ການສະໜອງອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ, ການຈັດຕັ້ງປະຕິບັດພັນທະສັນຍາຂອງອົງການການຄ້າໂລກ, ອາຊຽນ, ອະນຸພາກພື້ນລຸ່ມແມ່ນ້ຳຂອງ ແລະ ຂອບສອງຝ່າຍ, ແລະການສ້າງຕັ້ງກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ. ນອກນັ້ນ, ຍັງໄດ້ຍົກສູງວຽກງານການອຳນວຍຄວາມສະດວກທາງດ້ານການຄ້າໃຫ້ຂະແໜງການທີ່ກ່ຽວຂ້ອງ ແລະ ການສ້າງຂີດຄວາມສາມາດໃຫ້ກັບພາກລັດ ແລະ ທຸລະກິດ.

ຂັ້ນຕອນພາສີໄດ້ຮັບການປັບປຸງຫຼາຍຢ່າງ[9] ໂດຍສະເພາະຂັ້ນຕອນແຈ້ງພາສີແບບເອເລັກໂຕຣນິກ ດ້ວຍການນຳໃຊ້ລະບົບ ASYCUDA (ລະບົບແຈ້ງພາສີແບບເອເລັກໂຕຣນິກ) ແລະ ການນຳໃຊ້ກົນໄກການບໍລິຫານຄວາມສ່ຽງໃນການຄວບຄຸມກວດກາສິນຄ້າ. ການນຳໃຊ້ລະບົບດັ່ງກ່າວໄດ້ເຮັດໃຫ້ ຜູ້ນຳເຂົ້າ-ສົ່ງອອກ ແລະ ຜູ້ບໍລິການແຈ້ງພາສີ ມີຄວາມສະດວກ ໃນການແຈ້ງພາສີຜ່ານທາງເອເລັກໂຕຣນິກ ແລະ ສາມາດດຳເນີນຂັ້ນຕອນການແຈ້ງພາສີ ໄດ້ໄວ ແລະ ສະດວກຂຶ້ນກ່ວາເກົ່າ. ອີງຕາມການສຶກສາຂອງຂະແໜງພາສີ ຮ່ວມກັບທະນາຄານໂລກ ກ່ຽວກັບ ເວລາໃນການກວດປ່ອຍສິນຄ້າ (TRS) ສະບັບຫຼ້າສຸດ[10], ສະແດງໃຫ້ເຫັນວ່າ ເວລາໃນການແຈ້ງພາສີ/ກວດປ່ອຍສິນຄ້າ ໂດຍສະເລ່ຍສຳລັບການນຳເຂົ້າແມ່ນປະມານ 6,5 ຊົ່ວໂມງ ໃນປີ 2016 ຊຶ່ງຫຼຸດລົງເກືອບເທົ່າຕົວ ຈາກເວລາສະເລ່ຍໃນການແຈ້ງສິນຄ້ານຳເຂົ້າປະມານ 11,5 ຊົ່ວໂມງ ໃນປີ 2012. ນອກຈາກນັ້ນ, ຂະແໜງພາສີເອງ ຍັງດຳເນີນການການຈັດຕັ້ງປະຕິບັດບັນດາມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ໂດຍການປັບປຸງຂັ້ນຕອນຕ່າງໆທີ່ດ່ານຊາຍແດນ ພາຍໃຕ້ຂໍ້ລິເລີ່ມຂອງອະນຸສັນຍາພາກພື້ນລຸ່ມແມ່ນ້ຳຂອງ ແລະ ອາຊຽນ ໂດຍສະເພາະພາຍໃຕ້ສັນຍາການຄ້າດ້ານສິນຄ້າໃນຂອບອາຊຽນ (ATIGA), ແລະ ສັນຍາຂອບອາຊຽນ ເພື່ອອຳນວຍຄວາມສະດວກແກ່ການຂົນສົ່ງສິນຄ້າຜ່ານແດນ (AFAFGIT) ຊຶ່ງແມ່ນເງື່ອນໄຂ ແລະ ຂໍ້ຮຽກຮ້ອງຕົ້ນຕໍໃນການເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ (AEC).

---

[9] ການປະເມີນດ້ານການອຳນວຍຄວາມສະດວກທາງດ້ານການຄ້າ & ການຂົນສົ່ງຂອງ ສປປ ລາວ. ພະແນກ ການຫຼຸດຜ່ອນຄວາມທຸກຍາກ ແລະ ຂະແໜງຄຸ້ມຄອງເສດຖະກິດ, ພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ, ທະນາຄານໂລກ, ເດືອນ ເມສາ 2014.

[10] ການສຶກສາເວລາໃນການປ່ອຍສິນຄ້າ (TRS) ປີ 2016 ດຳເນີນການໂດຍ ກົມພາສີລາວ ໃນ ໂດຍໄດ້ຮັບການຊ່ວຍເຫຼືອຈາກບໍລິສັດສາກົນ ຄື ບໍລິສັດ ອີເມີຈິງ ມາເກັດ (EMC). ຂໍ້ມູນເບື້ອງຕົ້ນ ສະໜອງໂດຍ ກົມພາສີ, ບົດລາຍງານ ຍັງບໍ່ທັນໄດ້ຮັບການພິມເຜີຍແຜ່ເທື່ອ.

ຂະແໜງພາສີ ຍັງໄດ້ດຳເນີນການຢ່າງຕັ້ງໜ້າ ເພື່ອສືບຕໍ່ສ້າງຄວາມງ່າຍດາຍ ແລະ ຄວາມເປັນເອກະພາບທາງດ້ານຂັ້ນຕອນການແຈ້ງພາສີ ເພື່ອເຂົ້າເປັນພາຄີຂອງສົນທິສັນຍາກຽວໂຕ ສະບັບປັບປຸງ (RKC) ຊຶ່ງ ສປປ ລາວ ໄດ້ເຂົ້າເປັນພາຄີໃນເດືອນມິຖຸນາ ປີ 2016. ການເຂົ້າເປັນພາຄີຂອງສົນທິສັນຍາດັ່ງກ່າວ ໄດ້ນຳໄປສູ່ການປັບປຸງ ແລະ ການສ້າງນິຕິກຳທີ່ຈຳເປັນ ໂດຍອີງໃສ່ມາດຕະຖານສາກົນທີ່ກຳນົດໄວ້ໃນສົນທິສັນຍາກຽວໂຕ ເຊັ່ນ: ຂັ້ນຕອນການແຈ້ງພາສີດ້ວຍລະບົບເອເລັກໂຕຣນິກ, ການຢັ້ງຢືນຮັບຮອງການແຈ້ງພາສີລ່ວງໜ້າ ແລະ ກົນໄກການຂໍອຸທອນຕໍ່ຄຳຕັດສິນຂອງເຈົ້າໜ້າທີ່ພາສີ ກ່ຽວກັບ ການປະເມີນມູນຄ່າແຈ້ງພາສີ, ການຈັດລະຫັດສິນຄ້າ, ການຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ການກຳນົດລະບອບແຈ້ງພາສີ, ການນຳໃຊ້ການບໍລິຫານຄວາມສ່ຽງ, ການກວດສອບຄືນພາຍຫຼັງການແຈ້ງພາສີ ແລະ ອື່ນໆ[11]. ບັນດາຂະແໜງການທີ່ກ່ຽວຂ້ອງ ຍັງໄດ້ດຳເນີນບາດກ້າວໃນການປັບປຸງຂັ້ນຕອນທາງດ້ານການຄ້າ ຊຶ່ງເປັນສ່ວນໜຶ່ງຂອງພັນທະໃນຂອບອາຊຽນ ແລະ ອະນຸພາກພື້ນລຸ່ມແມ່ນ້ຳຂອງ ເຊັ່ນ: ຂະແໜງຂົນສົ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງລິເລີ່ມຈັດຕັ້ງປະຕິບັດກິດຈະກຳ ກ່ຽວກັບ ການອຳນວຍຄວາມສະດວກທາງດ້ານການຂົນສົ່ງ ພາຍໃຕ້ສັນຍາການຂົນສົ່ງສິນຄ້າຂ້າມແດນ (CBTA).

ພ້ອມດຽວກັນ, ຂະແໜງຂົນສົ່ງ ຍັງໄດ້ຮັບການສະໜັບສະໜູນໃນການສ້າງຕັ້ງຈຸດກວດກາບ່ອນດຽວ (SSI, SWI) ທີ່ສອງດ່ານຊາຍແດນຕົ້ນຕໍ ໂດຍການຮ່ວມມືກັນລະຫວ່າງ ຂະແໜງພາສີ, ກວດຄົນເຂົ້າເມືອງ ແລະ ກັກກັນພືດ ແລະ ສັດ. ໂຄງການທົດລອງ ການສ້າງຕັ້ງຈຸດກວດກາບ່ອນດຽວ ໄດ້ຖືກຈັດຕັ້ງປະຕິບັດທີ່ດ່ານຊາຍແດນ ແດນສະຫວັນ-ລາວບາວ ຊຶ່ງຕິດກັບ ສສ ຫວຽດນາມ ແລະ ອີກບ່ອນໜຶ່ງ ແມ່ນຢູ່ດ່ານ ສະຫວັນນະເຂດ-ມຸກດາຫານ ຊຶ່ງຕິດກັບ ລຊ ໄທ ຍັງຢູ່ລະຫວ່າງການລໍຖ້າການສະໜອງອຸປະກອນ ແລະ ພື້ນຖານໂຄງລ່າງ ແລະ ຄາດວ່າຈະສາມາດຈັດຕັ້ງປະຕິບັດໃນໄລຍະອັນໃກ້ນີ້. ສິ່ງເຫຼົ່ານີ້ ເປັນບາດ ກ້າວພື້ນຖານອັນສຳຄັນ ເນື່ອງຈາກວ່າ ຈະຕິດພັນກັບການຊ່ວຍສະໜັບສະໜູນ ແລະ ການຮ່ວມມືຢ່າງເຕັມສ່ວນຂອງບັນດາໜ່ວຍງານທີ່ເປັນຄູ່ຮ່ວມມືຂອງປະເທດໃກ້ຄຽງ. ດັ່ງນັ້ນ, ມັນຈຶ່ງຮຽກຮ້ອງໃຫ້ມີການເຮັດບົດບັນທຶກຄວາມເຂົ້າໃຈ ເພື່ອຄວາມສະດວກໃນການປະສານງານຮ່ວມມືກັນໃນລະດັບວິຊາການຜູ້ປະຕິບັດວຽກງານຕົວຈິງ.

[11] ຂະແໜງພາສີ ລິເລີ່ມໂຄງການຜູ້ປະກອບການລະດັບມາດຕະຖານເອອີໂອ ເລີ່ມແຕ່ ເດືອນ ກັນຍາ 2017.

## III. ສະພາບລວມ

ໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ດ່ານຊາຍແດນ ຕໍ່ກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ຮັບການປັບປຸງຢ່າງຕໍ່ເນື່ອງໃນໄລຍະ 03 ປີຜ່ານມາ ພາຍໃຕ້ຂໍ້ລິເລີ່ມໃນຂອບສັນຍາສອງຝ່າຍ ແລະ ຫຼາຍຝ່າຍ. ສິ່ງທີ່ກ່າວມານັ້ນ ໄດ້ບັນລຸຜົນສຳເລັດຫຼາຍສົມຄວນ ໂດຍສະເພາະພາຍໃຕ້ຂອບການຮ່ວມມືຂອງອະນຸພາກພື້ນລຸ່ມແມ່ນ້ຳຂອງ ໃນການຫັນປ່ຽນເສັ້ນທາງການຂົນສົ່ງໃຫ້ກາຍເປັນແລວທາງເສດຖະກິດລະຫວ່າງປະເທດ ໂດຍການສ້າງສິ່ງອຳນວຍຄວາມສະດວກຕາມເສັ້ນທາງຫຼັກທີ່ເຊື່ອມຕໍ່ບັນດາຕົວເມືອງ ແລະ ທ່າເຮືອ ທີ່ສຳຄັນໃນບັນດາປະເທດອະນຸພາກພື້ນລຸ່ມແມ່ນ້ຳຂອງ. ສະນັ້ນ, ເສັ້ນທາງທີ່ລະບຸໄວ້ໃນຂອບອະນຸພາກພື້ນລຸ່ມແມ່ນ້ຳຂອງ ໄດ້ຮັບການຍົກລະດັບ ແລະ ຂົວມິດຕະພາບຫຼາຍແຫ່ງໃນ ສປປ ລາວ ກໍ່ຖືກສ້າງຂຶ້ນພາຍໃຕ້ການໃຫ້ທຶນສະໜັບສະໜູນຂອງຄູ່ຮ່ວມພັດທະນາ ເປັນຕົ້ນແມ່ນ ອົດສະຕຣາລີ ແລະ ຍີ່ປຸ່ນ. ພ້ອມນັ້ນ, ບັນດາປະເທດໃກ້ຄຽງ ເຊັ່ນ: ສປ ຈີນ, ລຊ ໄທ ແລະ ສສ ຫວຽດນາມ ກໍ່ໄດ້ໃຫ້ການສະໜັບສະໜູນໃນຂອບສອງຝ່າຍເຂົ້າໃນການສ້າງສິ່ງອຳນວຍຄວາມສະດວກທີ່ດ່ານຊາຍແດນຫຼາຍແຫ່ງ ແລະ ຫຼາຍເສັ້ນທາງ. ໃນໄລຍະເວລາທີ່ມີການຈັດຕັ້ງປະຕິບັດຍຸດທະສາດ ອຄ ກໍ່ມີຄວາມຄືບໜ້າໃນການສະໜອງອຸປະກອນ ແລະ ໂຄງລ່າງພື້ນຖານເຂົ້າໃນການຄຸ້ມຄອງບໍລິຫານທີ່ມີປະ ສິດທິພາບຂອງຂັ້ນຕອນພາສີ ແລະ ການຄ້າທີ່ດ່ານຊາຍແດນ. ນອກຈາກນັ້ນ, ພາຍໃຕ້ຂອບການຮ່ວມມືໃນຂອບອະນຸພາກພື້ນລຸ່ມແມ່ນ້ຳຂອງ ສປປ ລາວ ຍັງໄດ້ຮັບການສະໜັບສະໜູນໃນຫຼາຍກິດຈະກຳທີ່ເປັນຂໍ້ລິເລີ່ມດ້ານການອຳນວຍຄວາມສະດວກທາງດ້ານການຄ້າ ຊຶ່ງເປັນການສ້າງສະພາບແວດລ້ອມທາງດ້ານນະໂຍບາຍ ທີ່ເອື້ອອຳນວຍໃຫ້ແກ່ການຄ້າລະຫວ່າງປະເທດ, ການລົງທຶນ ແລະ ການຮ່ວມມືທາງດ້ານເສດຖະກິດ.

ຜົນສຳເລັດທີ່ພົ້ນເດັ່ນອີກຢ່າງໜຶ່ງ ຊຶ່ງຕ້ອງໄດ້ກ່າວໄວ້ໃນນີ້ແມ່ນ ການສ້າງຕັ້ງສູນຂໍ້ມູນຂ່າວສານທາງດ້ານການຄ້າ ຂອງ ສປປ ລາວ (LTP) ໃນກາງປີ 2012. ສູນຂໍ້ມູນດັ່ງກ່າວ ໄດ້ສະໜອງຂໍ້ມູນຂ່າວສານທາງດ້ານການຄ້າຢ່າງກວ້າງຂວາງ ເຊັ່ນ: ນິຕິກຳ, ຂັ້ນຕອນ ແລະ ເອກະສານຕ່າງໆ ແລະ ບັນດາຂໍ້ມູນອື່ນໆ ທີ່ຕິດພັນກັບການນຳເຂົ້າ, ສົ່ງອອກ ແລະ ການຄ້າຜ່ານແດນ. ການເຜີຍແຜ່ຂໍ້ມູນທີ່ສຳຄັນນີ້ຜ່ານທາງເອເລັກໂຕຣນິກ ຈະເປັນປະໂຫຍດຢ່າງຍິ່ງຕໍ່ກັບຜູ້ດຳເນີນທຸລະກິດ ໃນຕ່ອງໂສ້ການສະໜອງສິນຄ້າສາກົນ ສຳລັບການວາງແຜນ ແລະ ການປະຕິບັດງານຂອງຕ່ອງໂສ້ການຜະລິດໃນ ສປປ ລາວ. ເຖິງຢ່າງໃດກໍ່ຕາມ, ເນື້ອໃນ ແລະ ຮູບແບບການນຳສະເໜີຂອງສູນຂໍ້ມູນຂ່າວສານດັ່ງກ່າວ ຍັງມີຄວາມຈຳເປັນຕ້ອງໄດ້ຮັບການປັບປຸງ ເພື່ອເຮັດໃຫ້ຂໍ້ມູນທັນກັບສະພາບການ ແລະ ເປັນຈຸດສູນກາງໃນການສະໜອງຂໍ້ມູນໃຫ້ທັງພາກລັດ ແລະ ທຸລະກິດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ໃນຂະນະທີ່ຫຼາຍກິດຈະກຳໃນແຜນຍຸດທະສາດ ອຄ ໄດ້ຖືກຈັດຕັ້ງປະຕິບັດ ແລະ ບັນລຸຕາມຈຸດປະສົງ ແລະ ເປົ້າໝາຍແລ້ວ, ແຕ່ຍັງມີບາງກິດຈະກຳຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ ເຊັ່ນ: ການປັບປຸງຂັ້ນຕອນການນຳເຂົ້າ-ສົ່ງອອກ ຢູ່ດ່ານຊາຍແດນ ແລະ ການປັບປຸງເອກະສານຂອງຂະແໜງການທີ່ບໍ່ແມ່ນພາສີ. ນອກນັ້ນ, ແຜນຍຸດທະສາດ ອຄ ຍັງບໍ່ສາມາດປະຕິບັດໄດ້ດີເທົ່າທີ່ຄວນ ໂດຍສະເພາະການຜັນຂະຫຍາຍເນື້ອໃນຈິດໃຈແໜງການຂອງຕົນ. ພ້ອມດຽວກັນ ຍັງບໍ່ມີຂະແໜງການໃດເປັນຕົວແບບໃນການພັດທະນາມາດຖານການໃຫ້ບໍລິການແກ່ພາກທຸລະກິດ ທີ່ສາມາດກຳນົດຂອບເຂດເວລາໃນການກວດປ່ອຍສິນຄ້າ ແລະ ການປະສານງານກັນລະຫວ່າງຂະແໜງການກ່ຽວຂ້ອງຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ ເຊັ່ນ: ການແຈ້ງຄວາມຄືບໜ້າໃນການແກ້ໄຂບັນຫາທີ່ໄດ້ປຶກສາຫາລື ແລະ ຕົກລົງໃນກອງປະຊຸມກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ.

ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ (ກຂອຄ) ຍັງໄດ້ຮັບການມອບໝາຍໃຫ້ເຮັດໜ້າທີ່ຂັບເຄື່ອນບັນດາກິດຈະກຳທີ່ລະບຸໄວ້ໃນແຜນຍຸດທະສາດ ອຄ ແຕ່ ກຂອຄ ຍັງບໍ່ສາມາດຈັດກອງປະຊຸມພົບປະປຶກສາຫາລືໄດ້ຢ່າງສະໝໍ່າສະເໝີ (ພຽງແຕ່ໜຶ່ງຄັ້ງຕໍ່ປີ) ແລະ ບໍ່ສາມາດແກ້ໄຂບັນຫາທີ່ຍົກຂຶ້ນຈາກພາກທຸລະກິດໄດ້ທັນຕາມເວລາ. ດັ່ງນັ້ນ, ກົມການນຳເຂົ້າ ແລະ ສົ່ງອອກ ຈຶ່ງໄດ້ປະຕິບັດໜ້າທີ່ແທນສະມາຊິກກອງເລຂາ ອຄ ເຖິງແມ່ນວ່າຈະບໍ່ມີພາລະບົດບາດໃນການຕິດຕາມກວດກາບັນດາໜ້າວຽກຂອງຂະແໜງການອື່ນໆ. ໃນຖານະທີ່ກົມການນຳເຂົ້າ ແລະ ສົ່ງອອກ ເປັນຫ້ອງການປະຈຳຂອງກອງເລຂາ ອຄ ບໍ່ມີອຳນາດທີ່ຈະລາຍງານໃຫ້ຂັ້ນເທິງຂອງຂະແໜງການກ່ຽວຂ້ອງຊາບໂດຍກົງໄດ້. ສະນັ້ນ, ເຮັດໃຫ້ ກຂອຄ ບໍ່ສາມາດຮັບປະກັນໄດ້ວ່າ ບັນດາຂະແໜງການທີ່ກ່ຽວຂ້ອງ ໄດ້ຈັດຕັ້ງປະຕິບັດຕາມແຜນກິດຈະກຳ ກ່ຽວກັບ ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ໂດຍສອດຄ່ອງກັບວັດຖຸປະສົງລວມທີ່ລະບຸໄວ້ໃນແຜນຍຸດທະສາດ ອຄ.

ພ້ອມນັ້ນ, ຍັງບໍ່ທັນໄດ້ຮັບການຮ່ວມມືຈາກບັນດາຂະແໜງການທີ່ເປັນສະມາຊິກ ກຂອຄ ໃນການເຂົ້າຮ່ວມປະຊຸມປຶກສາຫາລືຕໍ່ກັບການຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ການແກ້ໄຂບັນຫາທີ່ພາກທຸລະກິດປະເຊີນ. ພ້ອມດຽວກັນ, ກອງປະຊຸມຂອງ

ກຂອຄ ຍັງບໍ່ສາມາດເຊີນເອົາບັນດາຂະແໜງການກ່ຽວຂ້ອງຈາກຕ່າງແຂວງເຂົ້າຮ່ວມປຶກສາຫາລື ກ່ຽວກັບ ການຈັດຕັ້ງປະຕິບັດກິດຈະກຳຂອງແຜນຍຸດທະສາດ ອຄ ນຳໄດ້ຢ່າງຕໍ່ເນື່ອງ ເພາະວ່າຍັງມີຄວາມຈຳກັດທາງດ້ານງົບປະມານ. ແຕ່ບັນຫາທີ່ເກີດຂຶ້ນ ແລະ ເປັນອຸປະສັກໃນການປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ສ່ວນຫຼາຍພັດເກີດຂຶ້ນຢູ່ທ້ອງຖິ່ນ. ບັນຫາເຫຼົ່ານີ້ເຮັດໃຫ້ເກີດຊ່ອງວ່າງໃນການປະສານງານລະຫວ່າງຂະແໜງການຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ເຮັດໃຫ້ການປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ບໍ່ໄປຕາມທິດທາງດຽວກັນເທົ່າທີ່ຄວນ.

ການຂາດການປະສານງານທີ່ດີລະຫວ່າງຂະແໜງການທີ່ກ່ຽວຂ້ອງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຊຶ່ງປັດໃຈໜຶ່ງທີ່ເປັນສາເຫດເຮັດໃຫ້ການຈັດຕັ້ງປະຕິບັດນິຕິກຳຂອງຂະແໜງການບໍ່ເປັນເອກະພາບກັນໃນຂອບເຂດທົ່ວປະເທດ ເປັນຕົ້ນແມ່ນການເກັບຄ່າທຳນຽມ ແລະ ຄ່າບໍລິການ, ຂັ້ນຕອນອະນຸຍາດນຳເຂົ້າ ແລະ ສົ່ງອອກ ຊຶ່ງມັນໄດ້ສະແດງອອກຢ່າງຊັດເຈນໃນການປະເມີນບັນດາມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs).

ການສ້າງຂີດຄວາມສາມາດໃຫ້ພາກທຸລະກິດ ທີ່ຕິດພັນກັບໜ້າວຽກຂອງຂະແໜງການກ່ຽວຂ້ອງ ກໍ່ແມ່ນອີກບັນຫາໜຶ່ງ ທີ່ຂະແໜງການກ່ຽວຂ້ອງຍັງບໍ່ທັນໄດ້ໃຫ້ການການສະໜັບສະໜູນເທົ່າທີ່ຄວນ ເນື່ອງຈາກວ່າຍັງບໍ່ມີເວທີພົບປະກັບພາກທຸລະກິດຢ່າງເປັນປົກກະຕິ ເພື່ອສ້າງຄວາມຮັບຮູ້ ກ່ຽວກັບ ບັນດາກິດຈະກຳຂອງວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ທີ່ຖືກປະຕິບັດໃນຫຼາຍຂະແໜງການທີ່ກ່ຽວຂ້ອງ. ເຖິງແມ່ນວ່າຈະມີເວທີກອງປະຊຸມທຸລະກິດລາວ (LBF) ແຕ່ກໍ່ບໍ່ແມ່ນກອງປະຊຸມການສ້າງຂີດຄວາມສາມາດໃຫ້ພາກທຸລະກິດ. ການຈັດກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມກັບພາກສ່ວນກ່ຽວຂ້ອງຢ່າງປົກກະຕິ ຂອງຫ້ອງການ ກຂອຄ ແລະ ຂະແໜງການກ່ຽວຂ້ອງ ກໍ່ຍັງບໍ່ພົ້ນເດັ່ນເທົ່າທີ່ຄວນ ເນື່ອງຈາກບໍ່ໄດ້ຮັບການຮ່ວມມືຢ່າງເຕັມສ່ວນ ໃນການເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມໃນວຽກງານທີ່ຕິດພັນກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຈາກພາກສ່ວນທຸລະກິດ.

ເຖິງແມ່ນວ່າ ການເຊື່ອມໂຍງເສດຖະກິດກັບສາກົນ ຈະບໍ່ໄດ້ຖືກລະບຸຢູ່ແຜນຍຸດທະສາດ ອຄ ແຕ່ກໍ່ເປັນວາລະໜຶ່ງທີ່ສຳຄັນຂອງ ສປປ ລາວ ບົດສຶກສາ DTIS ສະບັບປັບປຸງປີ 2012 ໄດ້ເນັ້ນໃຫ້ເຫັນຢ່າງຈະແຈ້ງເຖິງຄວາມຈຳເປັນໃນການນຳໃຊ້ກົນໄກການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ເປັນຕົວຂັບເຄື່ອນ ເພື່ອປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດ ແລະ ການລົງທຶນ ໃນ ສປປ ລາວ. ດັ່ງນັ້ນ, ການຈັດຕັ້ງປະຕິບັດພັນທະສາກົນ, ພາກພື້ນ ແລະ ອະນຸພາກພື້ນ ພາຍໃຕ້ຂອບ WTO, ASEAN ແລະ GMS ເຊັ່ນ: ການເຂົ້າເປັນສະມາຊິກອົງການການຄ້າໂລກຂອງ ສປປ ລາວ ໃນປີ 2013 ແລະ ການໃຫ້ສັດຕະຍາບັນຂອງ ສປປ ລາວ ຕໍ່ກັບສັນຍາການອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ ກ່ອນໜ້າບັນດາປະເທດອ້ອມຂ້າງ ແລະ ປະເທດດ້ອຍພັດທະນາອື່ນໆ ກໍ່ແມ່ນສ່ວນໜຶ່ງໃນການຈັດຕັ້ງປະຕິບັດແຜນຍຸດທະສາດ ອຄ.

ເຂດການຄ້າເສລີອາຊຽນ ກໍ່ແມ່ນໜຶ່ງໃນຜົນສຳເລັດໃນການລົບລ້າງອຸປະສັກທາງດ້ານພາສີໃນພາກພື້ນ ພາຍໃຕ້ຄວາມພະຍາຍາມຂອງປະຊາຄົມເສດຖະກິດອາຊຽນ ທີ່ຈະຫັນປ່ຽນທົ່ວທັງພາກພື້ນໃຫ້ກາຍເປັນຕະຫຼາດ ແລະ ຖານການຜະລິດດຽວ, ຊຶ່ງສິນຄ້າ ແລະ ການບໍລິການສາມາດເຄື່ອນຍ້າຍລະຫວ່າງປະເທດໂດຍປາສະຈາກອຸປະສັກ ຊຶ່ງມັນໄດ້ສະແດງອອກໃນການລົງນາມ ໃນສັນຍາການຄ້າວ່າດ້ວຍສິນຄ້າອາຊຽນ (ATIGA) ແລະ ສັນຍາຂອບວຽກອາຊຽນ ວ່າດ້ວຍ ການອຳນວຍຄວາມສະດວກທາງດ້ານສິນຄ້າຜ່ານແດນ (AFAFGIT) ຄຽງຄູ່ໄປກັບສັນຍາການຄ້າສອງຝ່າຍ ທີ່ໄດ້ມີການລະບຸຂັ້ນຕອນ ແລະ ພິທີການເຄື່ອນຍ້າຍສິນຄ້າ ແລະ ຍານພາຫະນະ. ສັນຍາການຂົນສົ່ງຂ້າມແດນ (CBTA) ພາຍໃຕ້ຂໍ້ລິເລີ່ມໃນຂອບອະນຸພາກພື້ນລຸ່ມແມ່ນ້ຳຂອງກໍ່ເປັນເຄື່ອງມືໜຶ່ງໃນການຜັນຂະຫຍາຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນຍ້າຍຍານພາຫະນະ ແລະ ຄົນ. ສັນຍາການຂົນສົ່ງຂ້າມແດນປະກອບມີເອກກະສານຊ້ອນທ້າຍ ແລະ ບັນດາອະນຸສັນຍາທັງໝົດ 20 ສະບັບ ທີ່ກຳນົດລາຍລະອຽດ ກ່ຽວກັບ ການເຄື່ອນຍ້າຍຍານພາຫະນະ, ຄົນ, ສິດໃນການຈໍລະຈອນ, ການຄ້ຳປະກັນ, ພັນທະບັດ ແລະ ອື່ນໆ. ບາງເອກະສານຊ້ອນທ້າຍ ແລະ ອະນຸສັນຍາທີ່ຖືກເຊັນຮັບຮອງຈາກບັນດາປະເທດສະມາຊິກຍັງມີຄວາມລ່າຊ້າຢູ່ ເນື່ອງຈາກວ່າຫຼາຍປະເທດສະມາຊິກຍັງມີຄວາມລັງເລທີ່ຈະອະນຸຍາດໃຫ້ຜູ້ປະກອບການທາງດ້ານການຂົນສົ່ງຂອງປະເທດອື່ນເຂົ້າມາໃຫ້ການບໍລິການໃນປະເທດຕົນ. ບັນຫານີ້ ກຳລັງໄດ້ຮັບການແກ້ໄຂຜ່ານຮູບແບບສັນຍາສອງຝ່າຍ, ບົດບັນທຶກຊ່ວຍຈຳ ແລະ ການມີສ່ວນຮ່ວມຂອງພາກທຸລະກິດ ໂດຍສະເພາະບັນຫາການຄ້ຳປະກັນການຂົນສົ່ງສິນຄ້າຜ່ານແດນ.

ໜຶ່ງໃນຜົນສຳເລັດຂອງວຽກງານ ສັນຍາການຂົນສົ່ງຂ້າມແດນ ແມ່ນການພັດທະນາສິ່ງອຳນວຍຄວາມສະດວກທີ່ກວດກາຈຸດດຽວ (SSI, SWI) ເຊັ່ນ: ດ່ານຊາຍແດນ ແດນສະຫວັນ-ລາວບາວ ຊຶ່ງເປັນດ່ານທຳອິດໃນການຈັດຕັ້ງປະຕິບັດທົດລອງການກວດກາສິນຄ້າທີ່ຈຸດດຽວລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ ໄດ້ຖືກຈັດຕັ້ງປະຕິບັດຢ່າງເຕັມຮູບແບບໃນປີ 2016. ການຈັດຕັ້ງປະຕິບັດກວດກາຈຸດດຽວນີ້ ເປັນການລົບລ້າງສິ່ງກີດຂວາງທາງດ້ານການຄ້າທີ່ບໍ່ຈຳເປັນ ໂດຍສະເພາະແມ່ນການເຮັດໃຫ້ເວລາໃນການແຈ້ງປ່ອຍສິນຄ້າສັ້ນລົງ. ເພື່ອສືບຕໍ່ສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າທີ່ມີລັກສະນະດຽວກັນ, ກົນໄກ ແລະ ວິທີການດັ່ງກ່າວ ໄດ້ຮັບການຜັນຂະຫຍາຍມານຳໃຊ້ທີ່ດ່ານຊາຍແດນສະຫວັນນະເຂດ-ມຸກດາຫານ ຊຶ່ງກຳລັງຢູ່ໃນຂັ້ນຕອນການລໍຖ້າການສະໜັບສະໜູນທາງດ້ານອຸປະກອນ ແລະ ໂຄງລ່າງພື້ນຖານທີ່ຈຳເປັນ. ພ້ອມດຽວກັນ, ເພື່ອຕອບສະໜອງນະໂຍບາຍໃນການພັດທະນາແລວທາງເສດຖະກິດໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ, ຫຼາຍເສັ້ນທາງ ແລະ ຂົວຂ້າມແມ່ນ້ຳຂອງໄດ້ຮັບການປັບປຸງ ແລະ ສ້າງຂຶ້ນ ເຊັ່ນ: ຂົວມິດຕະພາບແຫ່ງທີ່ສາມ ທີ່ດ່ານຊາຍແດນນະຄອນພະນົມ-ທ່າແຂກ ແລະ ຂົວມິດຕະພາບແຫ່ງທີ່ 4 ທີ່ດ່ານຊາຍແດນຢູ່ແຂວງບໍ່ແກ້ວ ຊຽງຄານ-ບ້ານຫ້ວຍຊາຍ. ສິ່ງເຫຼົ່ານີ້ຈະສາມາດຊ່ວຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ການຄ້າໄດ້ຢ່າງຫຼວງຫຼາຍ. ນອກນັ້ນ, ການພັດທະນາພື້ນຖານໂຄງລ່າງ ແລະ ໂລຈິດສຕິກ ຍັງໄດ້ຊ່ວຍອຳນວຍຄວາມສະດວກໃຫ້ແກ່ຂະແໜງພາສີ ແລະ ຂະແໜງອື່ນໆ ທີ່ໃຫ້ບໍລິການຕາມດ່ານຊາຍແດນ ໃນການເຄື່ອນຍ້າຍສິນຄ້າ ຕາມເສັ້ນທາງຂົນສົ່ງຫຼັກ ເພື່ອໃຫ້ຫຼຸດເວລາ ແລະ ຕົ້ນທຶນໃນການດຳເນີນທຸລະກິດລົງ.

### 3.1 ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs)

ເຖິງແມ່ນວ່າ ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ມີການປັບປຸງຫຼາຍດ້ານ ດັ່ງທີ່ກ່າວມາຂ້າງເທິງນັ້ນ ແຕ່ການປັບປຸງບາງດ້ານທີ່ເປັນອຸປະສັກກີດຂວາງວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຍັງມີຄວາມຈຳເປັນ ໃນ ສປປ ລາວ ຊຶ່ງເຮົາເຫັນໄດ້ວ່າ ຄະແນນດັດຊະນີການຂ້າມແດນ ຂອງ ສປປ ລາວ ເຊັ່ນ: ເວລາທີ່ໃຊ້ໃນການສົ່ງອອກ ຫຼື ນຳເຂົ້າ ພາຍໃຕ້ຕົວຊີ້ວັດຕ່າງໆ ເປັນຕົ້ນ ຄວາມງ່າຍດາຍໃນການດຳເນີນທຸລະກິດຂອງທະນາຄານໂລກ ຫຼື ດັດຊະນີຄວາມສາມາດດ້ານການຄ້າຂອງກອງປະຊຸມເສດຖະກິດໂລກ ແມ່ນຂ້ອນຂ້າງສູງ ຊຶ່ງສົ່ງຜົນກະທົບທາງລົບຕໍ່ການຈັດລຳດັບຂອງ ສປປ ລາວ ໃນໂລກ. ໃນບົດລາຍງານສະບັບຫຼ້າສຸດທາງດ້ານຄວາມງ່າຍດາຍໃນການດຳເນີນທຸລະກິດ[12] ຊີ້ໃຫ້ເຫັນວ່າ ເວລາທັງໝົດທີ່ໃຊ້ໃນການສົ່ງອອກແມ່ນ 228 ຊົ່ວໂມງ ໃນນັ້ນໃຊ້ເວລາພຽງແຕ່ 12 ຊົ່ວໂມງ ໃນການແຈ້ງປ່ອຍສິນຄ້າທີ່ດ່ານຊາຍແດນ, ໃນຂະນະທີ່ການໃຊ້ເວລາໃນການດຳເນີນເອກະສານໃຫ້ຖືກຕ້ອງຕາມລະບຽບຫຼັກການ ແມ່ນ 216 ຊົ່ວໂມງ. ສ່ວນການໃຊ້ເວລາດຳເນີນການນຳເຂົ້າທັງໝົດ ແມ່ນ 230 ຊົ່ວໂມງ, ໃນນັ້ນ 12 ຊົ່ວໂມງ ແມ່ນນຳໃຊ້ເຂົ້າໃນການແຈ້ງເອກະສານທີ່ດ່ານຊາຍແດນ ແລະ ສ່ວນອີກ 218 ຊົ່ວໂມງ ແມ່ນນຳໃຊ້ເຂົ້າໃນການດຳເນີນເອກະສານນຳເຂົ້າ ເພື່ອໃຫ້ສອດຄ່ອງກັບລະບຽບການ ເຊັ່ນ: ໃບອະນຸຍາດນຳເຂົ້າ, ການຢັ້ງຢືນແຫຼ່ງກຳເນີດສິນຄ້າ, ການອະນຸມັດ ແລະ ການຮັບຮອງດ້ານຄຸນນະພາບ ແລະ ອື່ນໆ.

ອີງຕາມຜົນການສຶກສາຂອງທະນາຄານໂລກໃນ ປີ 2016 ກ່ຽວກັບ ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ທີ່ສົ່ງຜົນກະທົບຕໍ່ການຄ້າໃນ ສປປ ລາວ,[13] ມູນຄ່າສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າແບບອັດຕະໂນມັດ ແລະ ບໍ່ອັດຕະໂນມັດກວມເອົາເກືອບ 34% ຂອງມູນຄ່າການນຳເຂົ້າທັງໝົດ. ພ້ອມດຽວກັນ, ການເກັບຄ່າທຳນຽມອອກໃບອະນຸຍາດ ແມ່ນເທົ່າກັບ 5.4% ຂອງອັດຕາພາສີທຽບຖານ ຊຶ່ງສູງກວ່າຄ່າສະເລ່ຍຂອງພາກພື້ນ ແລະ ຂອງໂລກ. ຄ່າໃຊ້ຈ່າຍໃນການດຳເນີນທຸລະກິດຈະເພີ່ມຂຶ້ນຕື່ມ ຖ້າວິທີການ ແລະ ຂັ້ນຕອນການຂໍອະນຸຍາດນຳເຂົ້າ ຍັງໃຊ້ເວລາຫຼາຍ. ບົດສຶກສາຍັງໄດ້ຊີ້ໃຫ້ເຫັນວ່າ ຖ້າຫາກບໍ່ມີການເຜີຍແຜ່ຂັ້ນຕອນຕ່າງໆ ແລະ ການກຳນົດເວລາໃນການອອກອະນຸຍາດທີ່ຊັດເຈນ ຈະກໍ່ໃຫ້ເກີດການລ່າຊ້າທີ່ບໍ່ສາມາດຫຼີກລ່ຽງໄດ້ ແລະ ມີຊ່ອງວ່າງໃນການສໍ້ລາດບັງຫຼວງ. ເປັນເລື່ອງປົກກະຕິທີ່ຄ່າທຳນຽມທີ່ກ່ຽວຂ້ອງກັບການນຳໃຊ້ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ແມ່ນຂ້ອນຂ້າງສູງ ເນື່ອງຈາກວ່າຂະແໜງການຕ່າງໆໄດ້ນຳໃຊ້ເປັນເຄື່ອງມືໃນການສ້າງລາຍຮັບເພື່ອໃຊ້ຈ່າຍເຂົ້າໃນວຽກງານຂອງຕົນ. ດັ່ງນັ້ນ ຈຶ່ງກາຍເປັນຜົນກະທົບທາງລົບໂດຍການເພີ່ມລາຄາສິນຄ້າໃຫ້ກັບຜູ້ຊົມໃຊ້.

[12] ຕາຕະລາງໃນເອກະສານຊ້ອນທ້າຍ-II ໄດ້ລະບຸລາຍລະອຽດ

[13] ບົດລາຍງານ "ພາບລວມມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີຕໍ່ກັບການຄ້າໃນ ສປປ ລາວ"; ບົດລາຍງານເລກທີ No. AUS9097; ທະນາຄານໂລກ, ເດືອນກຸມພາ 2016

ໃນປີ 2016 ໄດ້ສຳເລັດການຈັດປະເພດມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ຈຳນວນ 253 ມາດຕະການ. ປະມານ 25% ຂອງມາດຕະການເຫຼົ່ານັ້ນແມ່ນມາດຕະການທາງດ້ານເຕັກນິກ, 17% ແມ່ນມາດຕະການສຸຂະນາໄມພືດ ແລະ ສັດ (SPS) ແລະ 22% ແມ່ນຕິດພັນກັບການສົ່ງອອກ. ສ່ວນທີ່ຍັງເຫຼືອແມ່ນຕິດພັນກັບການຂໍໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ, ແລະ ມາດຕະການຄວບຄຸມລາຄາ. ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ບໍ່ໝາຍຄວາມວ່າຕ້ອງໄດ້ຖືກລຶບລ້າງທັງໝົດ, ສະນັ້ນ ຈຶ່ງມີຄວາມຈຳເປັນໃນການທົບທວນ ແລະ ວິເຄາະມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ເພື່ອໃຫ້ສາມາດຈຳແນກໄດ້ວ່າມາດຕະການໃດທີ່ເປັນອຸປະສັກຕໍ່ການຄ້າ ແລະ ຕ້ອງໄດ້ປັບປຸງ ຫຼື ລຶບລ້າງ. ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ທີ່ມີຄວາມຈຳເປັນຈະຮັກສາໄວ້ຕ້ອງມີຄວາມສົມເຫດສົມຜົນ ແລະ ຂັ້ນຕອນການບັງຄັບໃຊ້ຕ້ອງກະທັດຮັດ ແລະ ໂປ່ງໃສ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍ ແລະ ຄວາມບໍ່ແນ່ນອນ. ກຂອຄ ໄດ້ສ້າງຕັ້ງໜ່ວຍງານທີ່ຮັບຜິດຊອບວຽກງານມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ຂຶ້ນໃນວັນທີ 31/08/2016 ໂດຍມີຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ ເປັນຫົວໜ້າໜ່ວຍງານດັ່ງກ່າວ ແລະ ສະມາຊິກທີ່ຖືກແຕ່ງຕັ້ງຈາກຂະແໜງການກ່ຽວຂ້ອງ ທັງພາກລັດ ແລະ ທຸລະກິດ.

### 3.2 ບັນຫາ ແລະ ສິ່ງທ້າທາຍ

ໂດຍລວມ, ກຂອຄ ສາມາດປະຕິບັດແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ປີ 2011-2015 ໃຫ້ບັນລຸຫຼາຍເປົ້າໝາຍທີ່ກຳນົດໄວ້ ແຕ່ກໍ່ຍັງມີຫຼາຍບັນຫາ ແລະ ສິ່ງທ້າທາຍທີ່ຈຳເປັນທີ່ຈະຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດ ແລະ ຕ້ອງໄດ້ຮັບການແກ້ໄຂໃນອະນາຄົດ ຊຶ່ງມີລາຍລະອຽດ ດັ່ງນີ້:

(i) **ຂາດການປະສານງານລະຫວ່າງບັນດາຂະແໜງການທີ່ກ່ຽວຂ້ອງ**: ການຂາດການປະສານງານທີ່ດີລະຫວ່າງ ຂະແໜງການກ່ຽວຂ້ອງ ຍັງເປັນບັນຫາ ແລະ ສິ່ງທ້າທາຍຫຼັກທີ່ໄດ້ສະແດງອອກໃນການຈັດຕັ້ງປະຕິບັດແຜນຍຸດທະສາດ ອຄ ປີ 2011-2015. ຍິ່ງໄປກ່ວານັ້ນ ການປະສານງານລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຕໍ່ກັບວາລະວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ດີ ເພາະຍັງຂາດກົນໄກການປະສານງານ ຕໍ່ກັບວຽກດັ່ງກ່າວ.

(ii) **ການຈັດຕັ້ງປະຕິບັດນິຕິກຳຂອງບັນດາຂະແໜງການກ່ຽວຂ້ອງຍັງບໍ່ສອດຄ່ອງ**: ຍັງຂາດການປະສານງານໃນການຈັດຕັ້ງປະຕິບັດບັນດານິຕິກຳຂອງບັນດາຂະແໜງການທີ່ກ່ຽວຂ້ອງ ຊຶ່ງເປັນອຸປະສັກໜຶ່ງທີ່ເຄີຍລະບຸໄວ້ໃນແຜນຍຸດທະສາດ ອຄ ປີ 2011-2015 ແລະ ຍັງເປັນບັນຫາທ້າທາຍມາຮອດປະຈຸບັນ. ຄຽງຄູ່ກັນນັ້ນ, ການຈັດຕັ້ງປະຕິບັດບັນດານິຕິກຳຕ່າງໆຍັງບໍ່ເປັນເອກະພາບ ໂດຍສະເພາະຢູ່ຂັ້ນທ້ອງຖິ່ນ.

(iii) **ການກວດກາເອກະສານ ແລະ ການເກັບຄ່າທຳນຽມຕາມດ່ານເສັ້ນທາງຍັງຊໍ້າຊ້ອນກັນ**: ບັນຫາການກວດກາເອກະສານ ແລະ ການເກັບຄ່າທຳນຽມຊໍ້າຊ້ອນຕາມດ່ານເສັ້ນທາງ ຍັງຄົງເປັນບັນຫາຊໍ້າເຮື້ອທີ່ກໍ່ໃຫ້ເກີດມີຄວາມລ່າຊ້າ ແລະ ຄ່າໃຊ້ຈ່າຍໃນຕ່ອງໂສ້ການສະໜອງ.

(iv) **ການປະສານງານ ແລະ ການຮ່ວມມືກັບພາກທຸລະກິດຍັງ ປະຕິບັດບໍ່ໄດ້ດີເທົ່າທີ່ຄວນ:** ສັງເກດເຫັນໄດ້ວ່າ ເວທີພົບປະລະຫວ່າງ ພາກລັດ ແລະ ພາກທຸລະກິດ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ກ່ຽວກັບ ການເຜີຍແຜ່ຂໍ້ມູນຂ່າວສານ, ແກ້ໄຂບັນຫາ ແລະ ການມີສ່ວນຮ່ວມຂອງພາກທຸລະກິດ ຕໍ່ການຈັດຕັ້ງປະຕິບັດບັນດາມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ຍັງຈຳກັດ.

(v) **ກົນໄກການກວດກາ ແລະ ຕິດຕາມຍັງບໍ່ປະຕິບັດໄດ້ດີເທົ່າທີ່ຄວນ:** ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດ ອຄ ຈຳເປັນຕ້ອງໄດ້ມີກົນໄກການກວດກາ ແລະ ຕິດຕາມ ຢ່າງໃກ້ຊິດ, ແຕ່ວ່າ ຜ່ານມາ ກຂອຄ ບໍ່ສາມາດຈັດກອງປະຊຸມໄດ້ຢ່າງເປັນປົກກະຕິ ຈຶ່ງບໍ່ສາມາດເຮັດບົດບາດດັ່ງກ່າວ ໃນການຂັບເຄື່ອນການຈັດຕັ້ງປະຕິບັດແຜນຍຸດທະສາດ ອຄ ໄດ້ດີເທົ່າທີ່ຄວນ.

(vi) **ຂາດຄວາມໂປ່ງໃສ ແລະ ຄວາມແນ່ນອນ:** ໃນຂະນະທີ່ຂັ້ນຕອນຕ່າງໆທີ່ດ່ານຊາຍແດນໄດ້ຮັບການປັບປຸງໃຫ້ດີຂຶ້ນ, ບັນດາຂະແໜງການທີ່ກ່ຽວຂ້ອງຍັງໃຊ້ເວລາສົມຄວນໃນການອອກໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ. ໂດຍສ່ວນໃຫ່ຍຂະແໜງການກ່ຽວຂ້ອງ ບໍ່ໄດ້ເຜີຍແຜ່, ຈັດພິມ ແລະ ແຈ້ງໃຫ້ສາທາລະນະຊົນຮັບຮູ້ ຢ່າງທົ່ວເຖິງ ຕໍ່ກັບຂັ້ນຕອນ ແລະ ເອກະສານໃນການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ.

(vii) **ເວລາໃນການກວດປ່ອຍສິນຄ້າຢູ່ດ່ານຍັງຈຳກັດ:** ດ່ານຊາຍແດນສາກົນຫຼັກແມ່ນເປີດບໍລິການ 16 ຊົ່ວໂມງ ນັບແຕ່6 ໂມງເຊົ້າ ເຖິງ 10 ກາງຄືນ. ແຕ່ການກວດປ່ອຍລົດຂົນສົ່ງສິນຄ້າແມ່ນດຳເນີນການພຽງແຕ່ 8 ໂມງເຊົ້າ ເຖິງ 5 ໂມງແລງ. ເຫັນໄດ້ວ່າ ການກວດປ່ອຍສິນຄ້າແມ່ນມີການຈຳກັດທາງດ້ານເວລາ. ຜ່ານມາ ບໍລິສັດຂົນສົ່ງ ແລະ ພາກທຸລະ

ກິດ ໄດ້ມີການສະເໜີຫາສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ໃຫ້ມີການຂະຫຍາຍເວລາຂອງການບໍລິ ການຢູ່ດ່ານ.

(viii) **ການຕັ້ງດ່ານກວດກາຊ້ຳຊ້ອນຕາມເສັ້ນທາງ:** ເຖິງວ່າໜ່ວຍງານປະຈຳດ່ານຈະຖືກຫຼຸດລົງເຫຼືອພຽງ 3 ໜ່ວຍງານ ຄື: ຕຳຫຼວດ, ພາສີ ແລະ ກັກກັນພືດ-ສັດ ຕາມແຈ້ງການຂອງຫ້ອງວ່າການລັດຖະບານ. ແຕ່ຍັງພົບເຫັນການຕັ້ງດ່ານກວດກາຊ້ຳຊ້ອນກັນຕາມເສັ້ນທາງຂົນສົ່ງ ແລະ ສ່ວນໃຫ່ຍແມ່ນມີການຮຽກເກັບເງິນຢູ່ຕາມດ່ານກວດຕ່າງໆ.[14] ພ້ອມດຽວກັນ, ດ່ານກວດກາຕາມເສັ້ນທາງຂົນສົ່ງຫຼາຍຈຸດຍັງເຮັດໃຫ້ເກີດຄວາມລ່າຊ້າທີ່ບໍ່ຈຳເປັນ.

(ix) **ການຈ່າຍຄ່າທຳນຽມຊ້ຳຊ້ອນ:** ໜຶ່ງໃນບັນຫາທາງດ້ານການຄ້າແມ່ນການຈ່າຍຄ່າທຳນຽມທີ່ຕິດພັນກັບການນຳເຂົ້າ-ສົ່ງອອກ ທີ່ຊ້ຳຊ້ອນກັນ ເຊັ່ນ: ການຈ່າຍຄ່າກວດກາ ຫຼື ການກວດກາຄຸນນະພາບສິນຄ້າ ຂອງຫຼາຍຂະແໜງການ ທີ່ຮຽກຮ້ອງໃຫ້ພາກທຸລະກິດຕ້ອງໄດ້ໄປຊຳລະຢູ່ຫຼາຍບ່ອນ ເຮັດໃຫ້ຊັກຊ້າເສຍເວລາ.

(x) **ຂາດສິ່ງອຳນວຍຄວາມສະດວກໃນການຊຳລະເງິນຜ່ານທາງລະບົບເອເລັກໂຕຣນິກ:** ປະຈຸບັນ ສິ່ງອຳນວຍຄວາມສະດວກໃນການຈ່າຍຄ່າພາສີ, ອາກອນ ແລະ ຄ່າທຳນຽມຜ່ານທາງລະບົບເອເລັກໂຕຣນິກ ມີຢູ່ພຽງບາງດ່ານຊາຍແດນເທົ່ານັ້ນ. ບາງດ່ານ ຍັງຊຳລະພາສີ, ອາກອນ ແລະ ຄ່າທຳນຽມອື່ນໆ ໃນຮູບແບບເງິນສົດ ຊຶ່ງກໍ່ໃຫ້ເກີດຄວາມຊັກຊ້າໃນການດຳເນີນການແຈ້ງພາສີ.

ຜ່ານການປະເມີນການຈັດຕັ້ງປະຕິບັດແຜນຍຸດທະສາດ ອຄ ເຫັນວ່າ: ແຜນດຳເນີນງານວຽກງານ ອຄ ປີ 2017-2022 ມີຄວາມຈຳເປັນຕ້ອງສຸມໃສ່ບາງຂົງເຂດວຽກງານຫຼັກ ດັ່ງນີ້: ປັບປຸງການປະສານງານ ໂດຍການສ້າງຄວາມເຂັ້ມແຂງໃຫ້ກົນໄກການປະສານງານທັງຂັ້ນສູນກາງ ແລະ ທ້ອງຖິ່ນ; ສ້າງແຜນດຳເນີນງານຂອງຂະແໜງການກ່ຽວຂ້ອງ ໃຫ້ສອດຄ່ອງກັບແຜນ ດຳເນີນງານວຽກ ອຄ ແລະ ມີການຕິດຕາມກວດກາ ໂດຍ ກຂອຄ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ; ການລົບລ້າງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ທີ່ບໍ່ຈຳເປັນ; ການສ້າງຄວາມງ່າຍດາຍທາງດ້ານຂັ້ນຕອນຂອງຂະແໜງການຄ້າທີ່ບໍ່ແມ່ນພາສີ ແລະ ຂະຫຍາຍເວລາໃນການໃຫ້ບໍລິການຕາມດ່ານຊາຍແດນ; ສະໜອງສິ່ງອຳນວຍຄວາມສະດວກ ຜ່ານການຊຳລະສະສາງຢູ່ຈຸດດຽວ; ສ້າງຈຸດກວດກາຢູ່ຈຸດດຽວ ໂດຍຫຼາຍຂະແໜງການກວດກາຮ່ວມກັນໃນເວລາດຽວກັນ. ມາດຕະການເຫຼົ່ານີ້ ຍັງຈະປະກອບສ່ວນເຂົ້າໃນການຫຼຸດຜ່ອນຈຳນວນເອກະສານ, ເວລາ ແລະ ຄ່າໃຊ້ຈ່າຍ ໃນການດຳເນີນການນຳເຂົ້າ ແລະ ສົ່ງອອກ ທີ່ນັບມື້ນັບເພີ່ມຂຶ້ນ.

[14] ບົດລາຍງານ "ການສົ່ງເສີມການພັດທະນາຄວາມຮູ້ ສຳລັບ ການສຶກສາກ່ຽວກັບ ໂລຈິດສຕິກໃນ ອາຊີຕາເວັນອອກສ່ຽງໃຕ້, ຂອງຊ່ຽວຊານທະນາຄານພັດທະນາອາຊີ, ໂຄງການເລກທີ TA 8977-REG", ທະນາຄານພັດທະນາອາຊີ, ຕຸລາ 2016.

## IV. ວິໄສທັດ

ແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ປີ 2017-2022 ແມ່ນແນໃສ່ເຮັດໃຫ້ຂັ້ນຕອນການຄ້າ ແລະ ພາສີມີຄວາມກະທັດຮັດ, ງ່າຍດາຍ, ຫຼຸດຂັ້ນຂອດ, ແລະ ປັບປຸງການໃຫ້ບໍລິການ. ຈຸດສຸມຂອງແຜນດຳເນີນງານນີ້ ແມ່ນຈະເພີ່ມຄວາມສາມາດແຂ່ງຂັນທາງດ້ານການຄ້າຂອງ ສປປ ລາວ ໂດຍຫຼຸດຜ່ອນເວລາລົງ (ຢ່າງຕ່ຳ 50%) ແລະ ຕົ້ນທຶນທີ່ໃຊ້ໃນການນຳເຂົ້າ ແລະ ສົ່ງອອກ (ຢ່າງຕ່ຳ 30%) ໃຫ້ຢູ່ໃນລະດັບໃກ້ຄຽງກັບປະເທດເພື່ອນບ້ານ ເພື່ອສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ. ເປົ້າໝາຍ ແມ່ນເພື່ອເຮັດໃຫ້ການຈັດລຳດັບຕົວຊີ້ວັດການຄ້າຂ້າມແດນຂອງທະນາຄານໂລກ ຕໍ່ກັບ ສປປ ລາວ ໃຫ້ຢູ່ໃນລະດັບສອງຕົວເລກ ຈາກປະຈຸບັນທີ່ຖືກຈັດຢູ່ໃນລຳດັບທີ 120 ໃຫ້ຫລຸດຕ່ຳກວ່າ 100 ຫຼືດີກວ່ານັ້ນ. ການປັບປຸງດັ່ງກ່າວ ຈະນຳໄປສູ່ການເພີ່ມຂຶ້ນຂອງປະລິມານການຄ້າ ແລະ ການເຕີບໂຕທາງດ້ານເສດຖະກິດ, ແລະ ປະກອບສ່ວນເຂົ້າໃນເປົ້າໝາຍການຫຼຸດພົ້ນອອກຈາກສະຖານະພາບຂອງປະເທດດ້ອຍພັດທະນາ.

ເພື່ອສ້າງຄວາມສາມາດແຂ່ງຂັນທາງດ້ານການຄ້າ, ແຜນດຳເນີນງານນີ້ ຕ້ອງສຸມໃສ່ການປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍຄວາມສະດວກໃນການດຳເນີນທຸລະກິດ ໂດຍຫຼຸດຜ່ອນບັນດາມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ທີ່ບໍ່ຈຳເປັນລົງ ແລະ ຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ຢ່າງມີປະສິດທິຜົນ ລວມທັງການຈັດຕັ້ງປະຕິບັດ ສັນຍາການອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ ຢ່າງເຕັມສ່ວນ. ການຈັດຕັ້ງປະຕິບັດສັນຍາດັ່ງກ່າວ ມີທ່າແຮງເຮັດໃຫ້ຕົ້ນທຶນທາງດ້ານການຄ້າຫຼຸດລົງຫຼາຍເຖິງ 19%. ສິ່ງເຫຼົ່ານີ້ ຈະສຳເລັດໄດ້ດ້ວຍການປັບປຸງການປະສານງານ ແລະ ການຮ່ວມມືກັນຈາກສູນກາງ ແລະ ທ້ອງຖິ່ນຢ່າງໃກ້ຊິດ ຄຽງຄູ່ໄປກັບພາກທຸລະກິດ ເພື່ອຮັບປະກັນວ່າ ພວກເຂົາຈະໄດ້ຮັບຜົນປະໂຫຍດຈາກມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ທີ່ວາງຄາດໝາຍໄວ້.

ເພື່ອຈັດຕັ້ງປະຕິບັດວິໄສທັດທີ່ກ່າວມາຂ້າງເທິງນັ້ນ, ແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ປີ 2017-2022 ຈະສະເໜີມາດຕະການຍຸດທະສາດ ເພື່ອຈັດຕັ້ງປະຕິບັດຕາມຂອບກຳນົດເວລາ. ບາງມາດຕະການໄດ້ມາຈາກຜົນການທົບທວນຄືນແຜນຍຸດທະສາດ ອຄ ສະບັບກ່ອນ ເພື່ອສືບຕໍ່ແກ້ໄຂບັນຫາ ແລະ ສິ່ງທ້າທາຍ ທີ່ເກີດຈາກການເປີດເສລີທາງດ້ານການຄ້າ ແລະ ການເຊື່ອມໂຍງເສດຖະກິດກັບສາກົນພາຍໃຕ້ຂອບອາຊຽນ ແລະ ຂໍ້ລິເລີ່ມຂອງ ອະນຸສັນຍາລຸ່ມແມ່ນ້ຳຂອງ ແລະ ອົງການການຄ້າໂລກ.

# V. ມາດຕະການຍຸດທະສາດ

ອີງໃສ່ບັນຫາສິ່ງທ້າທາຍ ແລະ ຊ່ອງວ່າງ ທີ່ກ່າວມາຂ້າງເທິງນັ້ນ, ແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ປີ 2017-2022 ໄດ້ກຳນົດ 07 ມາດຕະການຍຸດທະສາດ ເພື່ອຈັດຕັ້ງປະຕິບັດດັ່ງຕໍ່ໄປນີ້:

## 5.1 ປັບປຸງກົນໄກການຈັດຕັ້ງ ເພື່ອເຮັດໃຫ້ການປະສານງານລະຫວ່າງ ຂະແໜງການກ່ຽວຂ້ອງໃຫ້ມີປະສິດທິຜົນ

ເພື່ອຮັບປະກັນການປະສານງານລະຫວ່າງ ຂະແໜງການກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງດ້ານການຄ້າໃຫ້ມີປະສິດທິຜົນ, ຕ້ອງໄດ້ປັບປຸງກົນໄກການຈັດຕັ້ງສະເພາະວຽກງານ ອຄ ເພື່ອເຮັດໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງມີການຈັດຕັ້ງປະຕິບັດວຽກງານດັ່ງກ່າວໄປຕາມແຜນດຳເນີນງານ. ທຸກຂະແໜງການທີ່ປິ່ນອ້ອມວຽກງານ ອຄ ຄວນສ້າງຕັ້ງໜ່ວຍງານຈັດຕັ້ງປະຕິບັດແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອຮັບຜິດຊອບການຈັດຕັ້ງປະຕິບັດວຽກງານ ອຄ ເພື່ອຮັບປະກັນຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ໃນຂະແໜງການຂອງຕົນ. ໜ່ວຍງານ ທີ່ຖືກແຕ່ງຕັ້ງຈະປະກອບມີພະນັກງານຂັ້ນພະແນກ ແລະ ວິຊາການ ຢູ່ພາຍໃຕ້ການຊີ້ນຳຂອງຫົວໜ້າກົມ ຫຼື ຮອງຫົວໜ້າກົມທີ່ເປັນສາມະຊິກຂອງ ກຂອຄ[15]. ໜ່ວຍງານທີ່ຖືກແຕ່ງຕັ້ງທີ່ຈະຮັບຜິດຊອບວຽກງານທັງໝົດທີ່ກ່ຽວຂ້ອງກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ລວມທັງການກະກຽມແຜນປະຕິບັດງານຂອງຂະແໜງການຕົນເອງ ເພື່ອໃຫ້ສອດຄ່ອງກັບແຜນດຳເນີນງານວຽກ ອຄ ປີ 2017-2022 ທີ່ຖືກຮັບຮອງໂດຍ ກຂອຄ. ຫ້ອງການປະຈຳ ກຂອຄ ຈະໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ເພື່ອຊ່ວຍຂະແໜງການໃນການກະກຽມແຜນປະຕິບັດງານດັ່ງກ່າວ.

ນອກຈາກນັ້ນ, ການສະເໜີສ້າງຕັ້ງຄະນະກຳມະການແຫ່ງຊາດ ເພື່ອການພັດທະນາການຄ້າ ແລະ ພາກທຸລະກິດ (NCTPSD) ພາຍໃຕ້ການຊີ້ນຳຂອງ ທ່ານ ນາຍົກລັດຖະມົນຕີ ຄວນມີບົດບາດໃນການຊີ້ນຳການຈັດຕັ້ງປະຕິບັດແຜນດຳເນີນງານວຽກ ອຄ. ກຂອຄ ຈະກາຍເປັນອະນຸກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ທີ່ລາຍງານຄະນະກຳມະການດັ່ງກ່າວໂດຍກົງ. ການສ້າງຕັ້ງຄະນະກຳມະການດັ່ງກ່າວ ຈະກາຍເປັນຂີດໝາຍອັນສຳຄັນໃນການສະໜັບສະໜູນຂອງລັດຖະບານ ຕໍ່ການແກ້ໄຂບັນຫາວຽກງານອຳນວຍຄວາມສະດວກທາງດ້ານການຄ້າ.

ກອງປະຊຸມຄະນະກຳມະການດັ່ງກ່າວ ຈະຈັດຂຶ້ນທຸກໆ 6 ເດືອນ. ສະນັ້ນ, ກຂອຄ ຕ້ອງຈັດກອງປະຊຸມຢ່າງໜ້ອຍໄຕມາດລະຄັ້ງ, ການເພີ່ມຄວາມຖີ່ຂອງກອງປະຊຸມ ກຂອຄ ແມ່ນມີຄວາມຈຳເປັນ ເພື່ອຕິດຕາມກວດກາວຽກງານອຳນວຍຄວາມສະດວກທາງດ້ານການຄ້າ. ດັ່ງນັ້ນ, ມີຄວາມຈຳເປັນຕ້ອງໄດ້ປັບປຸງພາລະບົດບາດຂອງ ກຂອຄ ເພື່ອເພີ່ມຄວາມຖີ່ຂອງກອງປະຊຸມ ແລະ ຄົ້ນຄ້ວາເອົາການສະໜັບສະໜູນທາງດ້ານການເງິນ ແລະ ເຕັກນິກ ຈາກຄູ່ຮ່ວມພັດທະນາ ຫຼື ອົງການຈັດຕັ້ງສາກົນອື່ນໆ ໃນໄລຍະການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ.

## 5.2 ການສ້າງຄວາມເຂັ້ມແຂງໃຫ້ແກ່ກົນໄກການຈັດຕັ້ງຂັ້ນທ້ອງຖິ່ນ ເພື່ອເພີ່ມທະວີການປະສານງານ, ການຕິດຕາມກວດກາ ແລະ ການຈັດຕັ້ງປະຕິບັດມາດຕະການວຽກງານອຳນວຍຄວາມສະດວກທາງດ້ານການຄ້າ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ່ VIII ສົກປີ 2016-2020 ຊີ້ໃຫ້ເຫັນວ່າການປະສານງານພາຍໃນລະຫວ່າງຂະແໜງການກ່ຽວຂ້ອງຂັ້ນແຂວງ ແມ່ນປັດໄຈຕົ້ນຕໍຂອງການບັນລຸເປົ້າໝາຍຂອງແຜນພັດທະນາ. ດັ່ງນັ້ນ, ຈຶ່ງຈຳເປັນຕ້ອງໄດ້ສ້າງຄວາມເຂັ້ມແຂງທາງດ້ານກົນໄກການປະສານງານ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ. ສະນັ້ນ, ຈຶ່ງສະເໜີສ້າງຕັ້ງ ກົນໄກການປະສານງານ/ຈຸດປະສານງານ ຂັ້ນທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານ ອຄ ເຊັ່ນ: ກົນໄກການປະສານງານ/ຈຸດປະສານງານ ວຽກງານ ອຄ ໃນຂັ້ນແຂວງ/ນະຄອນຫຼວງ.

ກົນໄກການປະສານງານ/ຈຸດປະສານງານ ວຽກງານ ອຄ ໃນຂັ້ນແຂວງ/ນະຄອນຫຼວງ ມີໜ້າທີ່ຮັບຜິດຊອບການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາທຸກມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ຈັດປະຊຸມພົບປະເປັນປົກກະຕິທຸກໆ 6 ເດືອນ. ທ່ານ ຮອງເຈົ້າແຂວງ/ຮອງເຈົ້າຄອງນະຄອນຫຼວງ ຜູ້ຊີ້ນຳວຽກງານເສດຖະກິດ ຫຼື ບຸກຄົນທີ່ຖືກມອບໝາຍຈະເປັນປະທານຂອງ ຫ້ອງການ ຫຼື ຈຸດປະສານງານດັ່ງກ່າວ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ/ນະຄອນຫຼວງ ເປັນເສນາ

[15] ການແຕ່ງຕັ້ງຈຸດປະສານງານ ແລະ ບຸກຄົນ ທີ່ຮັບຜິດຊອບການຈັດຕັ້ງປະຕິບັດແຜນດຳເນີນງານ ອຄ ປີ 2017-2022 ຊຶ່ງບໍ່ໄດ້ເປັນການຈ້າງຄົນເພີ່ມ ແຕ່ ໂດຍການມອບໝາຍພາລະບົດບາດພິເສດໃຫ້ແກ່ພະນັກງານພາຍໃນກົມ.

ທີການຫຼັກໃນການຂັບເຄື່ອນວຽກງານ ອຄ ພາຍໃນແຂວງ ພ້ອມທັງມີທຸກຂະແໜງການທັງພາກລັດ ແລະ ພາກເອກະຊົນທີ່ກ່ຽວຂ້ອງປະກອບເປັນສາມະຊິກ. ພ້ອມນັ້ນ, ພະແນກ ອຄ ແຂວງ/ນະຄອນຫຼວງ ຍັງມີຄວາມຮັບຜິດຊອບໃນການສົ່ງບົດລາຍງານໃຫ້ ກຂອຄ ຂັ້ນສູນກາງ ຢ່າງເປັນປົກກະຕິ. ບົດລາຍງານດັ່ງກ່າວ ຈະຊີ້ໃຫ້ເຫັນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານ ອຄ ແລະ ຍົກບັນຫາທີ່ຕ້ອງການໃຫ້ ກຂອຄ ຂັ້ນສູນກາງ ພິຈາລະນາແກ້ໄຂຊ່ວຍ. ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ/ນະຄອນຫຼວງ ຈະຕ້ອງມີການປະສານງານກັບຂະແໜງການອື່ນໆ ຢູ່ພາຍໃນແຂວງ/ນະຄອນຫຼວງ ແລະ ກຂອຄ ຂັ້ນສູນກາງ ຢ່າງເປັນປົກກະຕິ.

### 5.3 ການເຊື່ອມໂຍງກັບພາກພື້ນ-ສາກົນ ແລະ ຮ່ວມມືກັບປະເທດທີ່ມີຊາຍແດນຕິດຈອດກັນ

ການຮ່ວມມືກັບປະເທດທີ່ມີຊາຍແດນຕິດຈອດກັນ ແມ່ນມີຄວາມສຳຄັນຢ່າງຍິ່ງ ທີ່ຈະເຮັດໃຫ້ການຄຸ້ມຄອງບໍລິຫານດ່ານຊາຍແດນມີປະສິດທິພາບ ແລະ ເຮັດໃຫ້ມີການແລກປ່ຽນຂໍ້ມູນຂ່າວສານ ໃນລາຍລະອຽດໃນລະດັບຜູ້ຈັດຕັ້ງປະຕິບັດ (ລະຫວ່າງຂະແໜງພາສີ ແລະ ຂະແໜງການອື່ນໆ ທີ່ດ່ານຊາຍແດນ) ເພື່ອຊ່ວຍໃຫ້ການແຈ້ງພາສີ ແລະ ກວດປ່ອຍສິນຄ້ານຳເຂົ້າ ແລະ ສົ່ງອອກ, ແລະ ສິນຄ້າຜ່ານແດນ ໃຫ້ໄວຂຶ້ນ. ໃນໄລຍະຜ່ານມາ ລັດຖະບານ ໄດ້ລົງນາມໃນສັນຍາການຮ່ວມມືສອງຝ່າຍ ຫຼາຍສະບັບ ຊຶ່ງໄດ້ກາຍເປັນນິຕິກຳຄຸ້ມຄອງການຮ່ວມມືຂ້າມແດນຂອງສອງຝ່າຍ. ດັ່ງນັ້ນ, ເພື່ອຜັນຂະຫຍາຍສັນຍາທີ່ລັດຖະບານທັງສອງຝ່າຍໄດ້ລົງນາມ, ຂະແໜງການກ່ຽວຂ້ອງ ຈຶ່ງມີຄວາມຈຳເປັນຕ້ອງໄດ້ຮີບຮ້ອນສ້າງບົດບັນທຶກຄວາມເຂົ້າໃຈ ຫຼື ນິຕິກຳຮ່ວມກັບບັນດາປະເທດໃກ້ຄຽງ ຫຼື ຄູ່ຮ່ວມສັນຍາໃນການຈັດຕັ້ງປະຕິບັດເນື້ອໃນດັ່ງກ່າວ ໃຫ້ເປັນເອກະພາບໃນການແລກປ່ຽນຂໍ້ມູນຂ່າວສານທາງດ້ານວຽກງານການກວດກາ, ການນຳໃຊ້ສິ່ງອຳນວຍຄວາມສະດວກຮ່ວມກັນ, ການກຳນົດຂະຫຍາຍເວລາໃນຂອດບໍລິການກວດແຈ້ງປ່ອຍສິນຄ້າ ແລະ ອື່ນໆ ຢູ່ດ່ານຊາຍແດນ ແນໃສ່ສ້າງສິ່ງອຳນວຍຄວາມສະດວກໃນການເຄື່ອນຍ້າຍສິນຄ້າຂ້າມແດນ ໂດຍສອດຄ່ອງກັບເປົ້າໝາຍແຜນດຳເນີນງານວຽກງານ ອຄ.

ການເຊື່ອມໂຍງລະດັບພາກພື້ນ ແລະ ສາກົນ ເປັນໜຶ່ງໃນເປົ້າໝາຍສຳຄັນ ຂອງລັດຖະບານ ທີ່ລະບຸໄວ້ໃນວິໄສທັດການພັດທະນາຮອດປີ 2030 ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມໄລຍະ 10 ປີ (2016-2025). ເພື່ອຜັນຂະຫຍາຍວິໄສທັດ ແລະ ຍຸດທະສາດດັ່ງກ່າວ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງ 8 (2016-2020) ໄດ້ກຳນົດການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ເປັນວຽກໜຶ່ງທີ່ສຳຄັນເພື່ອບັນລຸການຂະຫຍາຍຕົວທາງດ້ານເສດຖະກິດແບບຍືນຍົງ. ແຜນພັດທະນາດັ່ງກ່າວ ໄດ້ກຳນົດທິດທາງການພັດທະນາໂຄງສ້າງທາງດ້ານນິຕິກຳທີ່ເໝາະສົມ ເພື່ອອຳນວຍຄວາມສະດວກທາງດ້ານການຄ້າ[16].

ຫົວຂໍ້ການຄ້າ ແລະ ການຄ້າຜ່ານແດນສ່ວນໃຫຍ່ ຖືກສະເໜີ ແລະ ຮັບຮອງໃນການແກ້ໄຂບັນຫາພາຍໃຕ້ຂອບສັນຍາຂອງປະຊາຄົມເສດຖະກິດອາຊຽນ ແລະ ສັນຍາອະນຸພາກພື້ນລຸ່ມແມ່ນ້ຳຂອງ ຊຶ່ງເປັນການຊ່ວຍຜັນຂະຫຍາຍແນວທາງການເຊື່ອມໂຍງເສດຖະກິດກັບພາກພື້ນ ຢ່າງແທ້ຈິງ. ເຖິງຢ່າງໃດກໍ່ຕາມ, ສປປ ລາວ ຕ້ອງໄດ້ຮີບຮ້ອນຈັດຕັ້ງປະຕິບັດພັນທະສັນຍາພາຍໃຕ້ສັນຍາອະນຸພາກພື້ນລຸ່ມແມ່ນ້ຳຂອງ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດກວດກາຢູ່ຈຸດດຽວ (SSI, SWI) ທີ່ດ່ານຊາຍແດນສະຫວັນນະເຂດ-ມຸກດາຫານ ພາຍໃນປີ 2018. ຄຽງຄູ່ກັນນັ້ນ, ຕ້ອງໄດ້ຮີບຮ້ອນຈັດຕັ້ງປະຕິບັດລະບົບແຈ້ງພາສີປະຕູດຽວອາຊຽນພາຍໃນປີ 2018 ຕາມພັນທະຂອງ ສປປ ລາວ ຕໍ່ປະເທດສະມາຊິກອາຊຽນ ຊຶ່ງລະບົບດັ່ງກ່າວຈະຊ່ວຍໃຫ້ມີການແລກປ່ຽນຂໍ້ມູນຂ່າວສານ, ການແຈ້ງພາສີ ແລະ ກວດປ່ອຍສິນຄ້າຂ້າມແດນໄດ້ຢ່າງມີປະສິດທິຜົນ ແລະ ວ່ອງໄວ.

### 5.4 ການຮ່ວມມືປະສານງານກັບພາກທຸລະກິດ

ພາກທຸລະກິດ ແມ່ນຜູ້ໄດ້ຮັບຜົນປະໂຫຍດຫຼັກຈາກບັນດາມາດຕະການຍຸດທະສາດອຳນວຍຄວາມສະດວກທາງດ້ານການຄ້າ. ສະນັ້ນ, ຈຶ່ງຈຳເປັນຢ່າງຍິ່ງ ທີ່ພວກເຂົາຕ້ອງໄດ້ມີສ່ວນຮ່ວມໃນການຈັດຕັ້ງບັດຍຸດທະສາດດັ່ງກ່າວ ໂດຍການສະເໜີບັນຫາ, ສິ່ງທ້າທາຍ ແລະ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອສົ່ງເສີມການເຊື່ອມໂຍງທາງດ້ານໂລຈິສຕິກ ແລະ ການຄ້າ ໃຫ້ເປັນຕ່ອງໂສ້ການສະໜອງສິນຄ້າຂອງສາກົນ ແລະ ຊ່ວຍເຮັດໃຫ້ເກີດທ່າແຮງຂະຫຍາຍຕົວທາງດ້ານເສດຖະກິດ ແລະ ສັງຄົມ. ອີງຕາມບົດລາຍງານຂອງອົງການການຄ້າໂລກໄດ້ຊີ້ໃຫ້ເຫັນວ່າ ການມີສ່ວນຮ່ວມຢ່າງແທ້ຈິງຂອງພາກທຸລະກິດ ເຊັ່ນ: ສະພາການຄ້າ ແລະ ອຸດສາຫະກຳ ແລະ ສະມາຄົມທຸລະກິດອື່ນໆ ແມ່ນເປັນໜຶ່ງໃນປັດໄຈຫຼັກຂອງຜົນສຳເລັດ ໃນການປັບປຸງວຽກງານ ອຄ. ການຮ່ວມມື ແລະ ປະສານງານກັບພາກທຸລະກິດອາດເປັນອີກຮູບ

[16] ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ່ VIII ປີ 2016-2020; ກະຊວງ ແຜນການ ແລະ ການລົງທຶນ, ສປປ ລາວ; 2016 (ໜ້າ 101-105).

ແບບໜຶ່ງ ໃນການສ້າງຂີດຄວາມສາມາດແຂ່ງຂັນທາງການຄ້າໃຫ້ແກ່ພວກເຂົາ ໃຫ້ໄດ້ຮັບຜົນປະໂຫຍດຈາກການຈັດຕັ້ງປະຕິບັດບັນດາມາດຕະການ ອຄ ເຫຼົ່ານີ້.

ພາກທຸລະກິດ ຍັງເປັນຜູ້ທີ່ສາມາດປະກອບຄຳຄິດເຫັນ ຕໍ່ຜົນການຈັດຕັ້ງປະຕິບັດມາດຕະການຕ່າງໆຂອງບັນດາຂະແໜງການທີ່ກ່ຽວຂ້ອງໄດ້ດີທີ່ສຸດ. ຕົວຢ່າງ: ພາກລັດລາຍງານວ່າມາດຕະການໃນໝວດ A ພາຍໃຕ້ສັນຍາການອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ ໄດ້ຖືກຈັດຕັ້ງປະຕິບັດແລ້ວ, ພາກທຸລະກິດເອງກໍ່ຕ້ອງຢັ້ງຢືນຮັບຮອງວ່າການຈັດຕັ້ງປະຕິບັດຕົວຈິງສາມາດຈັດຕັ້ງໄດ້ແທ້ ຫຼື ບໍ່. ກົນໄກການປະສານງານລະຫວ່າງ ກຂອຄ ກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ຫຼື ບັນດາສະມາຄົມທຸລະກິດທີ່ກ່ຽວຂ້ອງ ຕ້ອງໄດ້ຮັບການພັດທະນາເພີ່ມຕື່ມ ເພື່ອຢັ້ງຢືນຮັບຮອງການຈັດຕັ້ງປະຕິບັດບັນດາມາດຕະການການອຳນວຍຄວາມສະດວກທາງດ້ານການຄ້າ. ສິ່ງທີ່ກ່າວມານັ້ນ ຄວນໄດ້ຮັບການຈັດຕັ້ງປະຕິບັດໃນຂັ້ນສູນ ແລະ ທ້ອງຖິ່ນ ໃຫ້ເປັນເອກະພາບກັນ. ສະນັ້ນ, ສະພາການຄ້າ ແລະ ອຸດສາຫະກຳ ຂັ້ນແຂວງ/ນະຄອນຫຼວງ ຄວນມີສ່ວນຮ່ວມໃນການປະກອບສ່ວນສະເໜີບັນຫາ, ສິ່ງທ້າທາຍ ແລະ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ.

ການປະສານງານຮ່ວມມື ຄວນໄດ້ຮັບການປັບປຸງເພື່ອເຮັດໃຫ້ ກຂອຄ ສາມາດລາຍງານຄວາມຄືບໜ້າ ແລະ ບັນຫາສິ່ງທ້າທາຍໃນການຈັດຕັ້ງປະຕິບັດແຜນດຳເນີນງານວຽກ ອຄ ໃຫ້ແກ່ກອງປະຊຸມທຸລະກິດລາວ ເພື່ອພິຈາລະນາແກ້ໄຂເມື່ອມີຄວາມຈຳເປັນ. ໃນຂັ້ນທຳອິດ ກຂອຄ ຄວນສະໜອງບົດລາຍງານປະຈຳໄຕມາດໃຫ້ແກ່ກອງປະຊຸມທຸລະກິດລາວ ແລະ ຄວນເຊີນຜູ້ຕາງໜ້າຈາກກອງເລຂາກອງປະຊຸມທຸລະກິດລາວ ເຂົ້າຮ່ວມທຸກກອງປະຊຸມຂອງ ກຂອຄ. ໃນຂະນະດຽວກັນ ຕ້ອງຮຽກຮ້ອງໃຫ້ກອງປະຊຸມທຸລະກິດລາວ ຮັບປະກັນການຍົກບັນຫາສະເພາະໃດໜຶ່ງທີ່ຕິດພັນກັບການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ ທີ່ສະເໜີໂດຍ ກຂອຄ ຫຼື ຂະແໜງການອື່ນໆ ໃນທຸກໆກອງປະຊຸມຂອງຕົນ (ທັງກອງປະຊຸມທຸລະກິດລາວ ແລະ ກອງປະຊຸມຄະນະກຳມະການຊີ້ນຳ). ກົນໄກດັ່ງກ່າວ ຈະເປັນການຮັບປະກັນການປະສານງານທີ່ມີປະສິດທິຜົນ ໃນການແກ້ໄຂບັນຫາການອຳນວຍຄວາມສະດວກທາງດ້ານການຄ້າລະຫວ່າງພາກລັດ ແລະ ພາກທຸລະກິດ.

### 5.5 ການເຜີຍແຜ່ຂັ້ນຕອນການໃຫ້ບໍລິການທີ່ຕິດພັນກັບຂັ້ນຕອນການນຳເຂົ້າ-ສົ່ງອອກ ແລະ ການສ້າງລະບົບແຈ້ງພາສີທີ່ທັນສະໄໝ

ເພື່ອເຮັດໃຫ້ມີຄວາມໂປ່ງໃສ ແລະ ຄວາມແນ່ນອນໃນການປະຕິບັດໜ້າທີ່ຂອງບັນດາຂະແໜງການທີ່ກ່ຽວຂ້ອງ ສິ່ງສຳຄັນບັນດາຂະແໜງການກ່ຽວຂ້ອງ ຕ້ອງເຜີຍແຜ່ (ຈັດພິມ, ສຳມະນາ, ຝຶກອົບຮົມ...) ລາຍລະອຽດ ກ່ຽວກັບ ເອກະສານທີ່ຈຳເປັນ, ຄ່າທຳນຽມທີ່ຕ້ອງຈ່າຍ ແລະ ຂັ້ນຕອນທີ່ເປັນມາດຖານການໃຫ້ບໍລິການ ເພື່ອໃຫ້ພາກທຸລະກິດປະຕິບັດຕາມນິຕິກຳທີ່ມີ ເຊັ່ນ: ການອອກອະນຸຍາດ, ການຢັ້ງຢືນສຸຂະນາໄມພືດ-ສັດ, ການຮັບຮອງຄຸນະພາບ ແລະ ອື່ນໆ. ບັນດາຂະແໜງ ການທີ່ກ່ຽວຂ້ອງຕ້ອງຈັດພິມເຜີຍແຜ່ຂໍ້ມູນເຫຼົ່ານັ້ນລົງໃນເວັບໄຊ້ຂອງຕົນເອງ ແລະ/ຫຼື ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ (LTP) ເພື່ອໃຫ້ສາທາລະນະຊົນຮັບຊາບຕໍ່ລະບຽບການທີ່ຈຳເປັນ ແລະ ປະຕິບັດຕາມຂັ້ນຕອນໃຫ້ຖືກຕ້ອງ. ການເຜີຍແຜ່ມາດຖານການໃຫ້ບໍລິການດັ່ງກ່າວ ຍັງເຮັດໃຫ້ພະນັກງານຢູ່ບັນດາຂະແໜງການກ່ຽວຂ້ອງ ມີຄວາມຮັບຜິດຊອບໃນການປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

ການສ້າງລະບົບແຈ້ງພາສີປະຕູດຽວເປັນໜຶ່ງໃນມາດຕະການທີ່ສຳຄັນ ໃນການຊ່ວຍຫຼຸດຜ່ອນຂັ້ນຂອດ ແລະ ຄ່າໃຊ້ຈ່າຍໃນການດຳເນີນການຄ້າ ພາຍໃຕ້ສັນຍາອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອາຊຽນ ແລະ ສັນຍາການອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ ຊຶ່ງໄດ້ກຳນົດໃຫ້ມີການຈັດຕັ້ງປະຕິບັດມາດຕະການດັ່ງກ່າວເປັນ ບູລິມະສິດ. ສຳລັບ ສປປ ລາວ, ລະບົບການແຈ້ງພາສີປະຕູດຽວ (Lao National Single Window) ແມ່ນສ້າງຕັ້ງຂຶ້ນແຕ່ຕົ້ນປີ 2013 ຊຶ່ງສຳປະທານການຈັດຕັ້ງປະຕິບັດໂດຍບໍລິສັດ ບູໂຣເວີຣີຕັດ. ມາເຖິງປະຈຸບັນ, ຂະແໜງພາສີ ຮ່ວມກັບຂະແໜງການນຳເຂົ້າ ແລະ ສົ່ງອອກ ໄດ້ທົດລອງນຳໃຊ້ລະບົບການແຈ້ງພາສີປະຕູດຽວໃນການອະນຸຍາດນຳເຂົ້າພາຫະນະ ຊຶ່ງເຮັດໃຫ້ຜູ້ນຳເຂົ້າສາມາດຍື່ນຂໍໃບອະນຸຍາດຜ່ານທາງເອເລັກໂຕຣນິກ ຜ່ານລະບົບແຈ້ງພາສີປະຕູດຽວທີ່ເຊື່ອມຕໍ່ກັບກົມພາສີ. ການທົດລອງດັ່ງກ່າວມີແຜນຈະເຊື່ອມຕໍ່ກັບກົມຂົນສົ່ງ ແລະ ເຊື່ອມເຂົ້າກັບລະບົບ ASYCUDA. ແຕ່ການອອກອະນຸຍາດນຳເຂົ້າ ແລະ ສົ່ງອອກ, ການຢັ້ງຢືນສຸຂະນາໄມພືດ-ສັດ, ການຮັບຮອງຄຸນະພາບ ແລະ ອື່ນໆ ບາງລາຍການສິນຄ້າທີ່ບັງຄັບໃຊ້ຈາກຫຼາຍຂະແໜງການກ່ຽວຂ້ອງອື່ນ ແມ່ນຍັງບໍ່ສາມາດຈັດຕັ້ງປະຕິບັດໂດຍຜ່ານລະບົບການແຈ້ງປະຕູດຽວ. ດັ່ງນັ້ນ, ໃນຂັ້ນຕອນດຳເນີນການຂໍອະນຸ

ຍາດນຳເຂົ້າ ແລະ ສົ່ງອອກສິນຄ້າ, ມາດຕະຖານເຕັກນິກ, ມາດຕະຖານສຸຂານາໄມ ແລະ ສຸຂານາໄມພືດ (SPS), ແລະ ມາດຕະຖານ ແລະ ວັດແທກ. ຜູ້ດຳເນີນທຸລະກິດຕ້ອງໄດ້ພົວພັນກັບຫຼາຍຂະແໜງການ ເພື່ອຂໍໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ຜ່ານທາງລະບົບປົກກະຕິ (ລະບົບເຈ້ຍສໍ). ການປະກອບເອກະສານໂດຍຜ່ານຫຼາຍຂະແໜງການໃນຮູບແບບລະບົບປົກກະຕິດັ່ງກ່າວ ເປັນສາເຫດເຮັດໃຫ້ມີຄວາມລ່າຊ້າ ແລະ ມີຄ່າໃຊ້ຈ່າຍສູງ. ບັນຫາດັ່ງກ່າວສາມາດແກ້ໄຂໄດ້ໂດຍລະບົບການອອກອະນຸຍາດ ໂດຍຜ່ານລະບົບການແຈ້ງພາສີປະຕູດຽວໃນຮູບແບບເອເລັກໂຕຣນິກ. ລະບົບດັ່ງກ່າວ, ຈະເຮັດໃຫ້ສາມາດດຳເນີນຂັ້ນຕອນການ ຂໍ ແລະ ອອກອະນຸຍາດໄດ້ຢ່າງວ່ອງໄວ ໂດຍຜູ້ດຳເນີນທຸລະກິດ ບໍ່ຈຳເປັນຕ້ອງໄປຫຼາຍບ່ອນ.

ໃນຂະນະທີ່ ຂະແໜງພາສີໄດ້ນຳໃຊ້ລະບົບອັດຕະໂນມັດເຂົ້າໃນການແຈ້ງພາສີ, ແຕ່ຍັງຄົງມີການຮຽກຮ້ອງໃຫ້ຍື່ນເອກະສານແຈ້ງພາສີ ແລະ ເອກະສານປະກອບອື່ນໆ ໃນຮູບແບບປົກກະຕິ ເນື່ອງຈາກວ່າ ທຸລະກຳທາງເອເລັກໂຕຣນິກຍັງບໍ່ທັນມີຜົນບັງຄັບໃຊ້ທາງດ້ານກົດໝາຍເທື່ອ ເຖິງວ່າຈະຖືກຮັບຮອງໃນປີ 2013 ກໍ່ຕາມ. ໂຄງການຕົວແບບຂອງການແຈ້ງພາສີປະຕູດຽວ ທີ່ຂະແໜງພາສີ ແລະ ຂະແໜງນຳເຂົ້າ ແລະ ສົ່ງອອກ ລິເລີ່ມ ຍັງບໍ່ມີຄວາມຄືບໜ້າເທົ່າທີ່ຄວນ ເພາະຍັງຂາດລະບຽບການທາງດ້ານເຕັກນິກ ເພື່ອອະນຸຍາດໃນການນຳໃຊ້ລາຍເຊັນທາງເອເລັກໂຕຣນິກໃນໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ. ກຊອຄ ຈະຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ ໃນການອອກລະບຽບການທາງດ້ານເຕັກນິກ ກ່ຽວກັບ ທຸລະກຳທາງດ້ານເອເລັກໂຕຣນິກ ແລະ ລາຍເຊັນເອເລັກໂຕຣນິກ ໃຫ້ສາມາດນຳໃຊ້ໄດ້.

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ໄດ້ລາຍງານ ກ່ຽວກັບ ບັນຫາການກວດກາຕາມເສັ້ນທາງ ແລະ ການກວດສອບລົດບັນທຸກສິນຄ້າຂອງຫຼາຍຂະແໜງການ ເຊັ່ນ: ຕຳຫຼວດຈາລະຈອນ, ກົມຂົນສົ່ງ, ກົມປ່າໄມ້, ແລະ ອື່ນໆ. ທຸກການຢຸດກວດແມ່ນຕ້ອງມີການຈ່າຍເງິນເພື່ອໃຫ້ສາມາດຜ່ານໄປໄດ້ ຊຶ່ງບໍ່ພຽງແຕ່ເພີ່ມຄ່າໃຊ້ຈ່າຍໃຫ້ແກ່ຜູ້ດຳເນີນທຸລະກິດ ແຕ່ກໍ່ເປັນສາເຫດໃຫ້ເກີດຄວາມລ່າຊ້າ ແລະ ຄວາມບໍ່ແນ່ນອນ. ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ໄດ້ຮ້ອງຂໍໃຫ້ຢຸດການກວດກາດັ່ງກ່າວ ແລະ ສະເໜີອະນຸຍາດໃຫ້ມີພຽງແຕ່ "ບ່ອນກວດກາຈຸດດຽວ" ຢູ່ທີ່ດ່ານຊາຍແດນ. ພ້ອມນັ້ນ, ຍັງມີຂໍ້ສະເໜີໃຫ້ມີ "ບ່ອນຈ່າຍເງິນຈຸດດຽວ" ທີ່ຮັບການຈ່າຍຄ່າທຳນຽມກວດກາຄຸນະພາບ, ຄ່າທຳນຽມຂົນສົ່ງ, ຄ່າທຳນຽມທາງ ແລະ ອື່ນໆ ຄຽງຄູ່ກັບການຈ່າຍພາສີ, ອາກອນ ແລະ ອາກອນມູນຄ່າເພີ່ມ ຊຶ່ງສາມາດຈ່າຍໄດ້ທີ່ດ່ານຊາຍແດນຈຸດດຽວ ໂດຍຜ່ານຫຼາຍຮູບແບບ ເຊັ່ນ: ບັດສະມາດແທັກ (Smart Tax). ການລວມສູນການຈ່າຍຄ່າທຳນຽມການນຳເຂົ້າ-ສົ່ງອອກ ແລະ ສິນຄ້າຜ່ານແດນ ສາມາດດຳເນີນໄດ້ໂດຍຂະແໜງການທີ່ກ່ຽວຂ້ອງ ໂດຍສົມທົບກັບທະນາຄານ. ດັ່ງນັ້ນ, ປ່ອງບໍລິການທະນາຄານຢູ່ທີ່ດ່ານຊາຍແດນ ຄວນສາມາດຮັບຮອງການຈ່າຍຄ່າທຳນຽມອື່ນໆ ເຊັ່ນ: ຄ່າທຳນຽມການກວດກາຄຸນະພາບ, ຄ່າທຳນຽມການກວດກາເຄມີ, ແລະ ຄ່າທຳນຽມອື່ນໆ ເຮັດໃຫ້ຜູ້ນຳເຂົ້າ-ສົ່ງອອກ ບໍ່ຈຳເປັນຕ້ອງດຳເນີນທຸລະກຳທາງດ້ານການເງິນຫຼາຍບ່ອນ ຊຶ່ງມັນຮຽກຮ້ອງໃຫ້ທະນາຄານຮັບຊຳລະຄ່າທຳນຽມເຫຼົ່ານັ້ນຜ່ານລະບົບເອເລັກໂຕຣນິກ ຫຼື ຜ່ານບັດສະມາດກາດ (Smart Card) ຄືກັນກັບການຊຳລະຄ່າພາສີ-ອາກອນ.

### 5.6 ການທົບທວນມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs)

ຂະແໜງອຸດສາຫະກຳ ແລະ ການຄ້າ ຮ່ວມກັບຂະແໜງການກ່ຽວຂ້ອງ ໄດ້ທົບທວນມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ຢູ່ ສປປ ລາວ ແລະ ສາມາດສັງລວມໄດ້ວ່າມີ 253 ມາດຕະການ. ໃນນັ້ນ, ປະມານ 34% ແມ່ນຕິດພັນກັບການຂໍອະນຸຍາດນຳເຂົ້າ ແລະ ການກຳນົດໂກຕ້າ ຂອງຂະບວນການນຳເຂົ້າທັງໝົດ. ພ້ອມນັ້ນ, ຍັງມີຫຼາຍມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ເຊັ່ນ: ການອອກໃບຢັ້ງຢືນຄຸນນະພາບ ແລະ ໃບຢັ້ງຢືນມາດຕະຖານ ທີ່ພົວພັນເຖິງການນຳເຂົ້າສິນຄ້າ ໄດ້ກໍ່ໃຫ້ເກີດມີຄວາມລ່າຊ້າຂອງການແຈ້ງປ່ອຍສິນຄ້າ ແລະ ເພີ່ມຕົ້ນທຶນໃນການດຳເນີນທຸລະກິດ ຊຶ່ງຈຳເປັນຕ້ອງໄດ້ຮັບການແກ້ໄຂເປັນບູລິມະສິດຕົ້ນຕໍ. ສະນັ້ນ, ເພື່ອຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍ ກ່ຽວກັບການນຳເຂົ້າ ແລະ ສົ່ງອອກ ທີ່ບໍ່ຈຳເປັນ, ບັນດາມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ຕ້ອງໄດ້ຮັບການທົບທວນຄືນ ເພື່ອພິຈາລະນາລົບລ້າງບັນດາມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ທີ່ບໍ່ຈຳເປັນ ແລະ ບໍ່ສົມເຫດສົມ.

ໃນແຜນດຳເນີນງານວຽກ ອຄ ໄດ້ມີການກຳນົດໃຫ້ສຳເລັດການທົບທວນ ແລະ ການປະເມີນຜົນກະທົບຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ຕົ້ນຕໍ ພາຍໃນປີ 2017-2018 ແລະ ລົບລ້າງ ຫຼື ຫຼຸດຜ່ອນມາດຕະການດັ່ງກ່າວພາຍໃນປີ 2018 ຕາມຂໍ້ສະເໜີແນະຈາກການທົບທວນດັ່ງກ່າວ. ແຜນດຳເນີນງານໄດ້ວາງເປົ້າໝາຍສຳເລັດການທົບທວນ ແລະ ປະເມີນຜົນກະທົບຂອງ 22 ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ພາຍໃນເດືອນສິງຫາ 2018 ແລະ ຈັດຕັ້ງປະຕິບັດຕາມຄຳແນະນຳ

ພາຍໃນທ້າຍປີ 2018 ແລະ ສືບຕໍ່ທົບທວນ ແລະ ປະເມີນຜົນກະທົບຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ທີ່ຍັງມີຢູ່. ແຜນດັ່ງກ່າວແມ່ນສອດຄ່ອງກັບການທົບທວນ ແລະ ການລຶບລ້າງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ທີ່ກຳນົດໃນສັນຍາການຄ້າທາງດ້ານສິນຄ້າອາຊຽນ ຊຶ່ງຈະຊ່ວຍໃຫ້ ສປປ ລາວ ສາມາດບັນລຸພັນທະພາຍໃຕ້ສັນຍາດັ່ງກ່າວ ຊ້າສຸດພາຍໃນປີ 2018[17]. ດັ່ງນັ້ນ, ເພື່ອເຮັດໃຫ້ວຽກງານດັ່ງກ່າວສອດຄ່ອງກັບເປົ້າໝາຍການທົບທວນ ແລະ ປະເມີນຜົນກະທົບດັ່ງກ່າວ ຕ້ອງໄດ້ມີການຕິດຕາມກວດກາຈາກ ກຂອຄ ແລະ ຫ້ອງການ ກຂອຄ ຢ່າງຕໍ່ເນື່ອງ. ພ້ອມດຽວກັນ, ຂະແໜງການທີ່ກ່ຽວຂ້ອງ ຄວນມີການທົບທວນຜົນກະທົບຈາກມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ໃນການສ້າງນິຕິກຳທີ່ກຳລັງຈະອອກມາໃໝ່ ເພື່ອຫຼຸດຜ່ອນຜົນກະທົບທາງລົບຕໍ່ການຄ້າ.

### 5.7 ການຈັດຕັ້ງປະຕິບັດສັນຍາການອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ

ສັນຍາການອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ ໄດ້ກຳນົດຂອບເຂດຂອງໜ້າວຽກ ອຄ ເພື່ອແນໃສ່ການຫຼຸດຄ່າໃຊ້ຈ່າຍ ແລະ ສ້າງຂີດຄວາມສາມາດໃນການແຂ່ງຂັນທາງດ້ານການຄ້າ ບົນພື້ນຖານການຈັດຕັ້ງປະຕິບັດທີ່ດີທີ່ສຸດ. ສັນຍາດັ່ງກ່າວໄດ້ກຳນົດໝວດຂອງມາດຕະການ ອຄ ຊຶ່ງປະເທດສະມາຊິກສາມາດເລືອກ ແລະ ກຳນົດເວລາໃນການຈັດຕັ້ງປະຕິບັດໝວດຂອງມາດຕະການ ອຄ ຂອງສັນຍາໃນໄລຍະຂ້າມຜ່ານຕາມຄວາມຕ້ອງການ ແລະ ຄວາມສາມາດຂອງຕົນເອງ. ອີງຕາມຂໍ້ກຳນົດໃນສັນຍາ ບັນດາສະມາຊິກປະເທດດ້ອຍພັດທະນາຈະຕ້ອງຈັດຕັ້ງປະຕິບັດມາດຕະການໃນໝວດ A ພາຍໃນ 1 ປີ ພາຍຫຼັງສັນຍາມີຜົນບັງຄັບໃຊ້. ສຳລັບມາດຕະການໃນໝວດ B ຈະມີເວລາຂ້າມຜ່ານໃນການຈັດຕັ້ງປະຕິບັດພາຍໃນ 3-5 ປີ ຕາມກຳນົດເວລາທີ່ປະເທດສະມາຊິກໄດ້ໃຫ້ພັນທະໄວ້. ພ້ອມດຽວກັນ, ມາດຕະການໃນໝວດ C ແມ່ນຈະຕ້ອງຈັດຕັ້ງປະຕິບັດຕາມໄລຍະເວລາຂ້າມຜ່ານ ພາຍຫຼັງທີ່ໄດ້ຮັບການຊ່ວຍເຫຼືອທາງດ້ານວິຊາການ ແລະ ການສ້າງຂີດຄວາມສາມາດຈາກຄູ່ຮ່ວມພັດທະນາ[18] ເພື່ອໃຫ້ມີຄວາມສາມາດໃນການຈັດຕັ້ງປະຕິບັດຕາມພັນທະຂອງສັນຍາດັ່ງກ່າວ. ສັນຍາການອຳນວຍຄວາມສະດວກທາງດ້ານການຄ້າ ໃນຂອບອົງການການຄ້າໂລກ ໄດ້ມີຜົນບັງຄັບໃຊ້ໃນວັນທີ 22 ກຸມພາ 2017, ສະນັ້ນ ສປປ ລາວ ຍັງມີເວລາເຖິງວັນທີ 21 ກຸມພາ 2018 ເພື່ອຈັດຕັ້ງປະຕິບັດມາດຕະການໃນໝວດ A.

ເຖິງແມ່ນວ່າ ໄລຍະເວລາໃນການຈັດຕັ້ງປະຕິບັດບາງໝວດຂອງມາດຕະການໃນສັນຍາດັ່ງກ່າວ ຈະສາມາດຜ່ອນຜັນດ້ານເວລາໄດ້, ສປປ ລາວ ກໍ່ຄວນເອົາໃຈໃສ່ປັບປຸງຂີດຄວາມສາມາດໃນການຈັດຕັ້ງປະຕິບັດບັນດາມາດຕະການໃຫ້ໄດ້ທັນຕາມເວລາທີ່ລະບຸໄວ້ໃນສັນຍາ ເພາະທຸກປະເທດໃນໂລກແມ່ນໄດ້ຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ແລະ ວາງຄາດໝາຍທີ່ຄ້າຍຄືກັນ ເພື່ອກ້າວໄປຂ້າງໜ້າ. ສະນັ້ນ, ມາດຕະການທີ່ມີນອນໃນສັນຍາການອຳນວຍຄວາມສະດວກທາງດ້ານການຄ້າ ຈຳເປັນຕ້ອງໄດ້ຖືກຈັດຕັ້ງປະຕິບັດໂດຍໄວ ແລະ ບໍ່ຈຳເປັນຕ້ອງຄຳນຶງເຖິງຂອບເວລາທີ່ສາມາດຜ່ອນຜັນໄດ້ພາຍໃຕ້ບົດບັນຍັດຂອງສັນຍາດັ່ງກ່າວ.

[17] ພາກທີ IV ຂອງສັນຍາການຄ້າດ້ານສິນຄ້າຂອງອາຊຽນ (ATIGA) ກຳນົດການທົບທວນ ແລະ ລຶບລ້າງສິ່ງກີດຂວາງທາງດ້ານການຄ້າທີ່ບໍ່ແມ່ນພາສີ ຫຼື NTBs ໃນ 3 ໄລຍະ. ອີງຕາມ ມາດຕາ 42 ຂອງສັນຍາດັ່ງກ່າວ, ກຳປູເຈຍ, ສປປ ລາວ , ສ ມຽນມາ ແລະ ສສ ຫວຽດນາມ ຕ້ອງລຶບລ້າງສິ່ງກີດຂວາງດັ່ງກ່າວ ໃນ 3 ໄລຍະຄື ພາຍໃນປີ 2013, 2014, ແລະ ປີ 2015, ຊຶ່ງສາມາດເລື່ອນອອກໄປຮອດປີ 2018.

[18] ລາຍລະອຽດຂອງສັນຍາການອຳນວຍຄວາມສະດວກທາງດ້ານການຄ້າຂອງອົງການການຄ້າໂລກ ພ້ອມທັງ ບົດບັນຍັດວ່າດ້ວຍການປະຕິບັດທີ່ພິເສດ ແລະ ແຕກຕ່າງ ແລະ ກຳນົດເວລາໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ-III

# VI. ວິທີການຈັດຕັ້ງປະຕິບັດ ແລະ ຄາດໝາຍຜົນໄດ້ຮັບ

ເພື່ອໃຫ້ບັນລຸເປົ້າໝາຍດັ່ງທີ່ກ່າວມານັ້ນ, ມີຄວາມຈຳເປັນຕ້ອງໄດ້ຈັດຕັ້ງປະຕິບັດຢ່າງມີຈຸດສຸມ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ. ການຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ຄາດວ່າຈະເປັນສ່ວນໜຶ່ງທີ່ຈະສົ່ງຜົນກະທົບດ້ານບວກຕໍ່ການພັດທະນາເສດຖະກິດຂອງ ສປປ ລາວ. ສະນັ້ນ, ຈຶ່ງຕ້ອງມີການຊຸກຍູ້ ແລະ ສ້າງຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍ ແລະ ເວລາທີ່ບໍ່ຈຳເປັນໃນການດຳເນີນທຸລະກິດ ເພື່ອດຶງດູດເອົາການລົງທຶນ ແລະ ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວໄວຂຶ້ນກວ່າເກົ່າ. ບາງມາດຕະການ ເຊັ່ນ: ການຫຼຸດຜ່ອນການກວດກາຕາມເສັ້ນທາງ, ການຊຳລະສະສາງຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ແບບລວມສູນທີ່ຕິດພັນກັບຂະບວນການນຳເຂົ້າ ແລະ ສົ່ງອອກ, ແລະ ການສ້າງຕັ້ງລະບົບແຈ້ງພາສີປະຕູດຽວ ເພື່ອໃຫ້ເຫັນຜົນຕອບຮັບໂດຍໄວ. ພ້ອມດຽວກັນນັ້ນ, ການທົບທວນ ແລະ ປະເມີນຜົນກະທົບມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ເພື່ອລົບລ້າງມາດຕະການທີ່ບໍ່ຈຳເປັນ ຫຼື ຫຼຸດຜ່ອນຂັ້ນຂອດ ໂດຍອີງໃສ່ຂໍ້ສະເໜີແນະຂອງການປະເມີນຜົນນັ້ນ ຕ້ອງໄດ້ຈັດຕັ້ງປະຕິບັດເປັນບູລິມະສິດຕົ້ນຕໍ. ວິທີການຈັດຕັ້ງປະຕິບັດ ແລະ ຄາດໝາຍ ທີ່ມອບໃນແຜນດຳເນີນງານວຽກງານ ອຄ ປີ 2017-2022 ມີລາຍລະອຽດດັ່ງລຸ່ມນີ້:

## 6.1 ວິທີການຈັດຕັ້ງປະຕິບັດ

### 6.1.1 ເພີ່ມທະວີການປຶກສາຫາລື ໂດຍຜ່ານກອງປະຊຸມ ກຂອຄ ເພື່ອຕິດຕາມການຈັດຕັ້ງປະຕິບັດແຜນດຳເນີນງານ ຢ່າງໃກ້ຊິດ

ເພື່ອຮັບປະກັນຄຸນນະພາບໃນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນດຳເນີນງານ ອຄ, ກຂອຄ ຕ້ອງມີການປະຊຸມກັນຢ່າງໜ້ອຍໄຕມາດລະຄັ້ງ ຊຶ່ງສອດຄ່ອງກັບວາລະການປະຊຸມຂອງຄະນະກຳມະການແຫ່ງຊາດໃນການພັດທະນາການຄ້າ ແລະພາກທຸລະກິດ ທີ່ຈະຈັດຂຶ້ນທຸກ 6 ເດືອນ, ຊຶ່ງ ກຂອຄ ຕ້ອງລາຍງານຕໍ່ກອງປະຊຸມດັ່ງກ່າວ. ດັ່ງນັ້ນ, ຕ້ອງມີການປັບພາລະບົດບາດຂອງ ກຂອຄ ໃຫ້ສອດຄ່ອງ ແລະ ປັບປຸງກົນໄກການຕິດຕາມກວດກາພາຍໃນເດືອນມັງກອນ 2018.

### 6.1.2 ສ້າງໜ່ວຍງານຈັດຕັ້ງປະຕິບັດແຜນດຳເນີນງານວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ຂະ ແໜງການທີ່ກ່ຽວຂ້ອງ

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ, ມີຄວາມຈຳເປັນຕ້ອງສ້າງຕັ້ງໜ່ວຍງານຈັດຕັ້ງປະຕິບັດແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ທຸກຂະແໜງການທີ່ກ່ຽວຂ້ອງ ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນດຳເນີນງານ, ການກວດກາ ແລະ ຕິດຕາມຢ່າງມີປະສິດທິພາບ. ໜ່ວຍງານດັ່ງກ່າວຕ້ອງໄດ້ສ້າງຂຶ້ນໃນທຸກຂະແໜງການທີ່ກ່ຽວຂ້ອງ ພາຍໃນເດືອນມັງກອນ 2018 ເພື່ອສະໜັບສະໜູນການສ້າງແຜນຈັດຕັ້ງປະຕິບັດວຽກ ອຄ ໃນທຸກຂະແໜງການຊຶ່ງເປັນສ່ວນໜຶ່ງຂອງແຜນດຳເດີນງານວຽກ ອຄ ແລະ ຮັບປະກັນການຈັດຕັ້ງປະຕິບັດຕາມໄລຍະເວລາທີ່ກຳນົດໄວ້. ໜ່ວຍງານດັ່ງກ່າວ ຈະໄດ້ຮັບການມອບໝາຍໃນການເກັບກຳຂໍ້ມູນ, ຕົວຊີ້ວັດທີ່ສຳຄັນຈາກໜ່ວຍງານຂັ້ນທ້ອງຖິ່ນ ເພື່ອນຳໃຊ້ເຂົ້າໃນການປະເມີນການຈັດຕັ້ງປະຕິບັດ ແລະ ຜົນໄດ້ຮັບ. ການສ້າງຕັ້ງໜ່ວຍງານດັ່ງກ່າວ ແມ່ນມີຄວາມສຳຄັນຕໍ່ການຈັດຕັ້ງປະຕິບັດແຜນດຳເນີນງານໃນທຸກຂະແໜງການທີ່ກ່ຽວຂ້ອງ.

### 6.1.3 ສ້າງຕັ້ງກົນໄກການປະສານງານວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ຂັ້ນແຂວງ

ບັນຫາສ່ວນໃຫຍ່ແມ່ນເກີດຂຶ້ນຢູ່ ຂັ້ນທ້ອງຖິ່ນ ໃນໄລຍະຜ່ານມາຍັງບໍ່ມີການກຳນົດກົນໄກການປະສານງານ ລະຫວ່າງ ກຂອຄກັບຂັ້ນທ້ອງຖິ່ນ. ສະນັ້ນ, ຈຳເປັນຕ້ອງສ້າງຕັ້ງກົນໄກການປະສານງານ/ຈຸດປະສານງານ ໃນແຕ່ລະແຂວງ/ນະຄອນຫຼວງ ເພື່ອປັບປຸງການປະສານງານລະຫວ່າງຂະແໜງການ ທີ່ກ່ຽວຂ້ອງໃນຂັ້ນແຂວງ. ກົນໄກການປະສານງານ/ຈຸດປະສານງານ ໃນຂັ້ນແຂວງ/ນະຄອນຫຼວງ ມີໜ້າທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດທຸກມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ໃນຂັ້ນແຂວງ/ນະຄອນຫຼວງ ແລະ ມີການປະຊຸມເປັນປະຈຳທຸກໆ 6 ເດືອນ ຍົກເວັ້ນ ກໍລະນີທີ່ມີບັນຫາຈຳເປັນຕ້ອງໄດ້ມີການປະຊຸມຢ່າງຮີບດ່ວນ. ກົນໄກການປະສານງານ/ຈຸດປະສານງານດັ່ງກ່າວ ຈະປະກອບດ້ວຍຈຸດປະສານງານຂອງຂະແໜງການທີ່ກ່ຽວຂ້ອງ ແລະ ຕົວແທນຈາກພາກທຸລະກິດໃນແຂວງໂດຍການເປັນປະທານຂອງ ທ່ານ ຮອງເຈົ້າແຂວງ/ເຈົ້າຄອງ ຜູ້ຊີ້ນຳວຽກງານເສດຖະກິດ ຫຼື ບຸກຄົນທີ່ຖືກມອບໝາຍຈະເປັນປະທານຂອງ ກົນໄກການປະສານງານ/ຈຸດປະສານງານດັ່ງກ່າວ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ/ນະຄອນຫຼວງ ເປັນເສນາທິການຫຼັກໃນການຂັບເຄື່ອນວຽກ

ງານ ອຄ ພາຍໃນແຂວງ. ກົນໄກການປະສານງານ/ຈຸດປະສານງານຂັ້ນແຂວງ ຄວນໄດ້ຮັບການສ້າງຕັ້ງພາຍໃນເດືອນກຸມພາ 2018. (ລາຍລະອຽດຈະມີການປະຊຸມປຶກສາຫາລືໃນລະດັບກອງເລຂາ ອຄ ຕື່ມ).

### 6.1.4 ຂະຫຍາຍຊົ່ວໂມງບໍລິການກວດປ່ອຍສິນຄ້າຢູ່ດ່ານຊາຍແດນ

ຄະນະຮັບຜິດຊອບຈັດຕັ້ງປະຕິບັດແຜນດໍາເນີນງານວຽກ ອຄ ຈໍາເປັນຕ້ອງສຶກສາ ແລະ ພັດທະນາກົນໄກທີ່ເໝາະສົມ ເພື່ອອໍານວຍຄວາມສະດວກໃນການກວດປ່ອຍສິນຄ້າຕະຫຼອດໄລຍະເວລາເປີດບໍລິການຢູ່ດ່ານຊາຍແດນ ແນໃສ່ເພີ່ມປະສິດທິພາບໃນການກວດປ່ອຍສິນຄ້າ. ເຖິງແມ່ນວ່າ ຂະແໜງພາສີຈະພິຈາລະນາຂະຫຍາຍເວລາໃນການໃຫ້ບໍລິການກວດປ່ອຍສິນຄ້າຢູ່ດ່ານທີ່ມີບໍລິມາດການຄ້າຫລາຍ ເຊັ່ນ: ວຽງຈັນ-ໜອງຄາຍ, ສະຫວັນນະເຂດ-ມຸກດາຫານ ແລະ ຄໍາມ່ວນ-ນະຄອນພະນົມ ເປັນຕົ້ນ. ແຕ່ຜ່ານການປຶກສາຫາລືກັບຂະແໜງການອື່ນ ເຫັນວ່າຄວນມີການສຶກສາຄວາມຕ້ອງການໃນການຂະຫຍາຍເວລາເຮັດວຽກຢູ່ດ່ານຊາຍແດນທີ່ສໍາຄັນແຫ່ງອື່ນໆຕື່ມ ໂດຍສະເພາະການວິເຄາະຄວາມຈໍາເປັນໃນການຂະຫຍາຍເວລາໃຫ້ບໍລິການກວດປ່ອຍສິນຄ້າ ເມື່ອປຽບທຽບໃສ່ບໍລິມາດຂອງສິນຄ້າຂ້າມແດນຢູ່ແຕ່ລະດ່ານ. ວຽກງານດັ່ງກ່າວຄວນສໍາເລັດພາຍໃນທ້າຍປີ 2018.

### 6.1.5 ທົບທວນ ແລະ ການປະເມີນຜົນກະທົບຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs)

ໜ່ວຍງານມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ຕ້ອງຮີບຮ້ອນການທົບທວນມາດຕະການການຄ້າທີ່ບໍ່ແມ່ນພາສີ ໃຫ້ສໍາເລັດໂດຍໄວ ເພື່ອຮັບປະກັນໃຫ້ບັນລຸວັດຖຸປະສົງທີ່ວາງໄວ້. ການທົບທວນດັ່ງກ່າວຕ້ອງຖືກດໍາເນີນການ ໂດຍໜ່ວຍມາດຕະການການຄ້າທີ່ບໍ່ແມ່ນພາສີ ທີ່ສ້າງຕັ້ງຂຶ້ນ ແລະ ການປະເມີນຜົນກະທົບຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ໃຫ້ສໍາເລັດຢ່າງໜ້ອຍ 11 ມາດຕະການໃນປີ 2018, ຊຶ່ງລວມເອົາຢ່າງຕໍ່າ 02 ມາດຕະການຈາກແຕ່ລະຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ, ກົມອາຫານ ແລະ ຢາ, ກົມຂົນສົ່ງ, ກົມມາດຕະຖານ ແລະ ວັດແທກ, ກົມບໍ່ແຮ່, ແລະ ກົມການນໍາເຂົ້າ ແລະ ສົ່ງອອກ. ການທົບທວນອີກ 11 ມາດຕະການແມ່ນຈະສືບຕໍ່ດໍາເນີນການໃຫ້ສໍາເລັດພາຍໃນກາງປີ 2019. ພາຍໃນປີ 2018 ແລະ 2019, ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ທີ່ບໍ່ຈໍາເປັນ ແລະ ບໍ່ສົມເຫດສົມຜົນທີ່ກ່າວມາຂ້າງເທິງນັ້ນ ຕ້ອງໄດ້ຖືກລົບລ້າງ ຫຼື ຫຼຸດຜ່ອນຂັ້ນຂອດ ແລະ ເຮັດໃຫ້ມີຄວາມໂປ່ງໃສ ຊຶ່ງອາດຕິດພັນກັບການປັບປຸງນິຕິກໍາ ຫຼື ປັບປຸງຂັ້ນຕອນ ຊຶ່ງລາຍລະອຽດ ຈະອີງຕາມຂໍ້ແນະນໍາຂອງການທົບທວນ ແລະ ການປະເມີນຜົນດັ່ງກ່າວ. ພ້ອມນັ້ນ, ການເກັບຄ່າທໍານຽມຈາກການນໍາໃຊ້ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ຕ້ອງມີຄວາມເໝາະສົມເພື່ອໃຫ້ສອດຄ່ອງກັບມູນຄ່າຕົວຈິງຂອງການໃຫ້ບໍລິການ. ການທົບທວນ ແລະ ປະເມີນຜົນກະທົບຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີທີ່ຍັງເຫຼືອ ຕ້ອງເຮັດສໍາເລັດໃນປີ 2020 ແລະ ປະຕິບັດຕາມຂໍ້ແນະນໍາ ພາຍໃນປີ 2022. ຂະແໜງການທີ່ກ່ຽວຂ້ອງຕ້ອງໄດ້ກະກຽມແຜນງານແລ້ວສົ່ງໃຫ້ຫ້ອງການໜ່ວຍງານມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ໃນຕົ້ນປີ 2018.

ນອກຈາກການປະເມີນຜົນກະທົບຂອງບັນມາດຕະການທີ່ປະຕິບັດຜ່ານມາ, ໃນກໍລະນີ ທີ່ຂະແໜງການລັດຕ້ອງການອອກມາດຕະການໃໝ່ ທີ່ອາດສົ່ງຜົນກະທົບຕໍ່ການຄ້າລະຫວ່າງປະເທດ ກໍ່ຕ້ອງໄດ້ມີການປະເມີນຜົນກະທົບ ຢ່າງລະອຽດ ໂດຍຜ່ານເວທີການປຶກສາຫາລື ແລະ ແລກປ່ຽນຄໍາຄິດຄໍາເຫັນຢ່າງກວ້າງຂວາງ ເພື່ອຮັບປະກັນວ່າການສ້າງມາດຕະການໃໝ່ ທີ່ອາດຈະກາຍເປັນສິ່ງກີດຂວາງທາງດ້ານການຄ້າ.

### 6.1.6 ເຜີຍແຜ່ຂັ້ນຕອນການໃຫ້ບໍລິການທີ່ຕິດພັນກັບຂັ້ນຕອນນໍາເຂົ້າ-ສົ່ງອອກ

ຫ້ອງການ ກຂອຄ ຕ້ອງສົມທົບກັບຂະແໜງການກ່ຽວຂ້ອງ ເພີ່ມທະວີການສ້າງຄວາມໂປ່ງໃສໃນການຈັດຕັ້ງປະຕິບັດຂັ້ນຕອນການນໍາເຂົ້າ ແລະ ສົ່ງອອກ ໃຫ້ສອດຄ່ອງກັບນິຕິກໍາ ແລະ ໃຫ້ສາມາດຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍການເຜີຍແຜ່ຂໍ້ມູນລົງໃນເວັບໄຊ້ຂອງແຕ່ລະຂະແໜງການ ແລະ ຫຼື ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ; ຈັດພິມ; ສໍາມະນາ; ຝຶກອົບຮົມ; ຜ່ານສື່ຕ່າງໆ ແລະ ອື່ນໆ ກ່ຽວກັບ ນິຕິກໍາ ແລະ ຂັ້ນຕອນຕ່າງໆ ເຊັ່ນ: ການອອກອະນຸຍາດ, ການຢັ້ງຢືນສຸຂະນາໄມພືດ-ສັດ, ການຮັບຮອງຄຸນະພາບ, ຄ່າທໍານຽມ ແລະ ອື່ນໆ ໃຫ້ສາທາລະນະຊົນຮັບຊາບ.

### 6.1.7 ລົບລ້າງດ່ານກວດກາທີ່ບໍ່ຈໍາເປັນຕາມເສັ້ນທາງ

ກຂອຄ ຈໍາເປັນຕ້ອງແຕ່ງຕັ້ງຄະນະຮັບຜິດຊອບ ເພື່ອສຶກສາ ແລະ ກວດກາຄືນບັນດາດ່ານກວດກາຕາມເສັ້ນທາງ ເພື່ອກ້າວໄປເຖິງການລົບລ້າງບັນດາດ່ານກວດກາສິນຄ້າຕາມເສັ້ນທາງທີ່ບໍ່ຈໍາເປັນຂອງບັນດາໜ່ວຍງານ. ການກວດກາສິນຄ້ານໍາເຂົ້າ ແລະ ສົ່ງອອກຕົວຈິງ ຄວນດໍາເນີນໃນເຂດພາສີເທົ່ານັ້ນ. ບໍ່ຄວນອະນຸຍາດໃຫ້ມີການກວດກາເພີ່ມຕື່ມພາຍຫຼັງການແຈ້ງ/ປ່ອຍສິນຄ້າແລ້ວ ເວັ້ນເສຍແຕ່ກໍລະນີມີແຫຼ່ງຂໍ້ມູນຂ່າວສານທີ່ມີຄວາມຈໍາເປັນຕ້ອງກວດກາຕາມເສັ້ນທາງ. ບັນດາຂະແໜງການທີ່ກ່ຽວຂ້ອງ

ຕ້ອງປຶກສາຫາລືຮ່ວມກັນ ເພື່ອກຳນົດຈຸດກວດກາຕາມເສັ້ນທາງທີ່ຈຳເປັນ, ລຶບລ້າງຈຸດກວດກາຕາມເສັ້ນທາງທີ່ບໍ່ຈຳເປັນ ແລະ ກ້າວໄປເຖິງການອອກນິຕິກຳ ຫຼື ແຈ້ງການ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ ໃນປີ 2018.

### 6.1.8 ລວມສູນການຊຳລະຄ່າໃຊ້ຈ່າຍ ທີ່ຕິດພັນກັບຂັ້ນຕອນການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ຜ່ານທາງເອເລັກໂຕຣນິກ

ການຊຳລະຄ່າພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ ທີ່ກ່ຽວຂ້ອງກັບການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ຫຼື ຜ່ານແດນ ຕ້ອງລວມສູນຢູ່ຈຸດດຽວໃນບັນດາດ່ານສາກົນ ໂດຍຜ່ານລະບົບແຈ້ງພາສີປະຕູດຽວ ພາຍໃນປີ 2018. ພ້ອມດຽວກັນ, ຂະແໜງການທີ່ກ່ຽວຂ້ອງຈຳເປັນຕ້ອງສຶກສາຄວາມເປັນໄປໄດ້ໃນການສ້າງລະບົບຊຳລະຄ່າທຳນຽມຜ່ານທາງເອເລັກໂຕຣນິກ ຄືກັນກັບການຊຳລະພາສີ-ອາກອນ ແລະ ຄ່າທຳນຽມຜ່ານທາງເອເລັກໂຕຣນິກຢູ່ 18 ດ່ານຊາຍແດນໃນປະຈຸບັນ. ຂະແໜງພາສີສືບຕໍ່ຂະຫຍາຍສິ່ງອຳນວຍຄວາມສະດວກໃນການຊຳລະອາກອນຜ່ານທາງເອເລັກໂຕຣນິກ ເຂົ້າໃນທຸກດ່ານຊາຍແດນທີ່ເຫຼືອ ເຊັ່ນດຽວກັນ

### 6.1.9 ສ້າງນິຕິກຳວ່າດ້ວຍທຸລະກຳທາງດ້ານເອເລັກໂຕຣນິກ ແລະ ລາຍເຊັນເອເລັກໂຕຣນິກ

ກຊອຄ ຕ້ອງຕິດຕາມກັບຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ຂະແໜງການກ່ຽວຂ້ອງ ເພື່ອສ້າງບັນດານິຕິກຳລຸ່ມ ກົດໝາຍວ່າດ້ວຍທຸລະກຳທາງດ້ານເອເລັກໂຕຣນິກ (ປະກາດໃຊ້ໃນປີ 2013) ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ພາຍໃນປີ 2018 ຊຶ່ງຈະເປັນການຫັນໄປສູ່ການນຳໃຊ້ລາຍເຊັນດິຈິຕອນ ແລະ ຮັບຮູ້ທຸລະກຳທາງເອເລັກໂຕຣນິກອື່ນໆ. ສິ່ງເຫຼົ່ານີ້ ຈະຊ່ວຍສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ ແລະ ກ້າວໄປເຖິງການລົບລ້າງບັນດາເອກະສານທີ່ເປັນເຈ້ຍ ໂດຍສະເພາະການຫຼຸດຜ່ອນທາງດ້ານເວລາ ແລະ ຂັ້ນຕອນ, ການສ້າງຄວາມໂປ່ງໃສ ແລະ ຮັບປະກັນການເກັບລາຍຮັບເຂົ້າງົບປະມານ.

### 6.1.10 ສ້າງຕັ້ງລະບົບແຈ້ງພາສີປະຕູດຽວ (NSW)

ລະບົບການແຈ້ງພາສີປະຕູດຽວຄາດວ່າຈະສຳເລັດພາຍໃນປີ 2018. ອີງຕາມຜົນສຳເລັດຂອງການທົດລອງ ໃນເບື້ອງຕົ້ນ ໄລຍະຕໍ່ໄປຈະມີການຂະຫຍາຍການນຳໃຊ້ລະບົບການແຈ້ງພາສີປະຕູດຽວໂດຍກວມເອົາ 05 ຂະແໜງການທີ່ກ່ຽວຂ້ອງ (ກົມພາສີ, ກົມການນຳເຂົ້າ ແລະ ສົ່ງອອກ, ກົມຂົນສົ່ງ, ກົມອາຫານ ແລະ ຢາ ແລະ ກົມລ້ຽງສັດ ແລະ ການປະມົງ) ໃນປີ 2019, ແລະ ຂະແໜງການອື່ນໆໃນປີ 2020 ຕາມລຳດັບ. ນອກຈາກນັ້ນ, ເພື່ອຮັບປະກັນວ່າລະບົບການແຈ້ງພາສີປະຕູດຽວ ຈະເປັນສ່ວນໜຶ່ງໃນການສ້າງສິ່ງອຳນວຍຄວາມສະດວກໃຫ້ພາກທຸລະກິດ ແລະ ນຳໃຊ້ລະບົບດັ່ງກ່າວຢ່າງເຕັມສ່ວນ, ສະນັ້ນ ກຊອຄ ຕ້ອງເປັນເຈົ້າການເຂົ້າມາມີສ່ວນຮ່ວມ ໃນການຄຸ້ມຄອງການຈັດຕັ້ງປະຕິບັດລະບົບການແຈ້ງພາສີປະຕູດຽວ ໂດຍສະເພາະຂັ້ນຕອນການຮັບຮອງເອົາຂະບວນການ, ໂຄງສ້າງການດຳເນີນງານ, ການເຊື່ອມຕໍ່ ແລະ ອື່ນໆ.

### 6.1.11 ສ້າງຕັ້ງໂຄງການຜູ້ປະກອບການມາດຕະຖານເອອີໂອ (AEO)

ຂະແໜງພາສີ ໄດ້ມີການລິເລີ່ມທົດລອງໂຄງການຜູ້ປະກອບການມາດຕະຖານເອອີໂອ (AEOs). ໂຄງການດັ່ງກ່າວຄາດວ່າຕ້ອງຂະຫຍາຍໃຫ້ໄດ້ຢ່າງໜ້ອຍ 10 ບໍລິສັດ ພາຍໃນປີ 2018 ແລະ ໃຫ້ໄດ້ 20 ບໍລິສັດເຂົ້າຮ່ວມໂຄງການດັ່ງກ່າວໃນປີ 2020 ເພື່ອແນໃສ່ເຮັດໃຫ້ຜູ້ນຳເຂົ້າ ແລະ ສົ່ງອອກ ສາມາດໄດ້ຮັບການປະຕິບັດທີ່ເປັນບູລິມະສິດໃນການອະນຸຍາດນຳເຂົ້າ ແລະ ສົ່ງອອກສິນຄ້າໃຫ້ມີຄວາມສະດວກ ແລະ ວ່ອງໄວ. ເຖິງຢ່າງໃດກໍຕາມ, ຂີດຄວາມສາມາດຂອງພາກທຸລະກິດ ແລະ ຊັບພະຍາກອນຕາມເງື່ອນໄຂຄວາມຕ້ອງການໃນການຈັດຕັ້ງປະຕິບັດແຜນງານດັ່ງກ່າວ ຍັງມີຂີດຈຳກັດ. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງຍົກລະດັບຂີດຄວາມສາມາດໃຫ້ຜູ້ປະກອບການໄດ້ຮຽນຮູ້ ກ່ຽວກັບ ເງື່ອນໄຂທີ່ຈຳເປັນທາງດ້ານເອກະສານ ແລະ ຄວາມປອດໄພຂອງຕ່ອງໂສ້ການສະໜອງສິນຄ້າໃຫ້ໄດ້ຕາມເງື່ອນໄຂ ແລະ ມາດຖານໃນການຈັດຕັ້ງປະຕິບັດແຜນງານເອອີໂອ.

### 6.1.12 ຈັດຕັ້ງປະຕິບັດລະບົບແຈ້ງພາສີປະຕູດຽວອາຊຽນ

ພາຍຫຼັງລະບົບແຈ້ງພາສີປະຕູດຽວ ໄດ້ຮັບການສ້າງຕັ້ງຂຶ້ນ, ບາດກ້າວຕໍ່ໄປແມ່ນຕ້ອງເຊື່ອມຕໍ່ກັບລະບົບການແຈ້ງພາສີປະຕູດຽວອາຊຽນ ໂດຍເລີ່ມຈາກການແລກປ່ຽນຂໍ້ມູນ ກ່ຽວກັບ ການຢັ້ງຢືນແຫຼ່ງກຳເນີດສິນຄ້າໃນຂອບອາຊຽນ (ກັບປະເທດສະມາຊິກທີ່ນຳໃຊ້ FORM D) ເປັນໂຄງການທົດລອງ. ແຕ່ຕ້ອງໄດ້ດຳເນີນການພາຍໃນປີ 2018 ເພື່ອຮັບປະກັນການແລກປ່ຽນຂໍ້ມູນຂ່າວສານທາງດ້ານການຄ້າ ຕາມຮູບແບບທີ່ຕົກລົງກັນ ໃນຂອບສັນຍາຂອງອາຊຽນ.

### 6.1.13 ຈັດຕັ້ງປະຕິບັດມາດຕະການຂອງ ສັນຍາ ການອຳນວຍຄວາມສະດວກທາງດ້ານການຄ້າ ໃນຂອບອົງການການຄ້າໂລກ

ອີງຕາມບົດລາຍງານຂອງ OECD, ການຈັດຕັ້ງປະຕິບັດ ສັນຍາການອຳນວຍຄວາມສະດວກທາງດ້ານການຄ້າ ຢ່າງເຕັມສ່ວນ ຈະຊ່ວຍໃຫ້ ສປປ ລາວ ສາມາດຫຼຸດຜ່ອນຕົ້ນທຶນ/ຄ່າໃຊ້ຈ່າຍທາງດ້ານການຄ້າໄດ້ເຖິງ 19.7%[19], ຊຶ່ງເປັນທ່າແຮງໃຫຍ່ອັນດັບສອງ ໃນການຊ່ວຍຫຼຸດຜ່ອນຕົ້ນທຶນການຄ້າໃນກຸ່ມປະເທດສະມາຊິກອາຊຽນ. ບົດລາຍງານຍັງໄດ້ຊີ້ໃຫ້ເຫັນວ່າ ການປະຕິຮູບທີ່ໃຫ້ຜົນປະໂຫຍດຫຼາຍທີ່ສຸດໃນດ້ານການຫຼຸດຜ່ອນຕົ້ນທຶນ/ຄ່າໃຊ້ຈ່າຍທາງດ້ານການຄ້າສຳລັບອາຊຽນ ແມ່ນການຫຼຸດຜ່ອນຂັ້ນຂອດ (3.8%), ການນຳໃຊ້ລະບົບອັດຕະໂນມັດ (3.2%), ການສ້າງຄວາມງ່າຍດາຍ ແລະ ກົມກຽວທາງດ້ານເອກະສານ (3%), ການມີຂໍ້ມູນ (2.4%), ການຢັ້ງຢືນຮັບຮອງລ່ວງໜ້າ (2.1%), ແລະ ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ (1.1%). ແຜນປະຕິບັດງານ ກຳນົດເປົ້າໝາຍການຈັດຕັ້ງປະຕິບັດສັນຍາການອຳນວຍຄວາມສະດວກທາງດ້ານການຄ້າຢ່າງເຕັມສ່ວນພາຍໃນປີ 2020 (ຍົກເວັ້ນບັນດາມາດຕະການທີ່ນອນໃນໝວດ C). ມາດຕະການທີ່ນອນໃນໝວດ C ແມ່ນຕ້ອງການການຊ່ວຍເຫຼືອທາງດ້ານວິຊາການ ແລະ ການສ້າງຂີດຄວາມສາມາດ ຊຶ່ງຈະຕ້ອງຈັດຕັ້ງປະຕິບັດໃນປີ 2022 ທັງນີ້ແມ່ນອີງຕາມການປະກອບສ່ວນຂອງຜູ້ໃຫ້ທຶນໃນການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ. ບັນດາກິດຈະກຳທີ່ຕ້ອງໄດ້ຈັດຕັ້ງປະຕິບັດ ແລະ ກຳນົດເວລາໃນການຈັດຕັ້ງປະຕິບັດສັນຍາດັ່ງກ່າວ ແມ່ນລະບຸໄວ້ລຸ່ມນີ້:

#### *(ກ) ຈັດຕັ້ງປະຕິບັດທຸກມາດຕະການໃນໝວດ A*

ທຸກມາດຕະການທີ່ລະບຸໄວ້ໃນໝວດ A ຂອງສັນຍາການອຳນວຍຄວາມສະດວກທາງດ້ານການຄ້າ ແມ່ນຕ້ອງຈັດຕັ້ງປະຕິບັດພາຍໃນ ເດືອນກຸມພາ ປີ 2018 ຊຶ່ງປະກອບມີມາດຕະການ ດັ່ງລຸ່ມນີ້:

- (i) ການພິມເຜີຍແຜ່ຂໍ້ມູນຜ່ານສິ່ງພິມ (ມາດຕາ 1)
- (ii) ສະໜອງຂໍ້ມູນທາງດ້ານການຄ້າຜ່ານທາງອິນເຕີເນັດ (ມາດຕາ 1)
- (iii) ການກຳນົດຈຸດສອບຖາມ (ມາດຕາ 1)
- (iv) ການແຈ້ງການ (ມາດຕາ 1)
- (v) ຂັ້ນຕອນໃນການຂໍອຸທອນ ແລະ ການທົບທວນຄືນ (ມາດຕາ 4)
- (vi) ແຈ້ງການໃນການເພີ່ມຂັ້ນຕອນການຄວບຄຸມ ຫຼື ການກວດກາ (ມາດຕາ 5)
- (vii) ການກັກກັນສິນຄ້າ (ມາດຕາ 5)
- (viii) ລະບຽບ ກ່ຽວກັບ ການເກັບຄ່າທຳນຽມ ແລະ ຄ່າບໍລິການສຳລັບ ຫຼື ກ່ຽວຂ້ອງກັບການນຳເຂົ້າ ແລະ ສົ່ງອອກ (ມາດຕາ 6)
- (ix) ມາດຕະການອຳນວຍຄວາມສະດວກທາງດ້ານການຄ້າສຳລັບຜູ້ໄດ້ຮັບອະນຸຍາດກ່ອນສິນຄ້າມາເຖິງ (ມາດຕາ 7)
- (x) ການເຄື່ອນຍ້າຍສິນຄ້າພາຍໃຕ້ການຄຸ້ມຄອງຂອງພາສີທີ່ມີຈຸດປະສົງສຳລັບການນຳເຂົ້າ (ມາດຕາ 9)
- (xi) ບໍ່ບັງຄັບໃຫ້ມີການກວດກາກ່ອນການຈັດສົ່ງ (ມາດຕາ 10)
- (xii) ການນຳໃຊ້ບໍລິການ ຜູ້ບໍລິການແຈ້ງພາສີ (ມາດຕາ 10)
- (xiii) ການອະນຸຍາດນຳເຂົ້າສິນຄ້າຊົ່ວຄາວສຳລັບການຜະລິດປຸງແຕ່ງ ເພື່ອສົ່ງອອກ (ມາດຕາ 10)

#### *(ຂ) ຢືນຢັນມາດຕະການໝວດ B ແລະ C*

ບາງມາດຕະການຕ້ອງໄດ້ຮັບການຕ້ອງໄດ້ຮັບການຈັດຕັ້ງປະຕິບັດຢ່າງຮີບດ່ວນ ເຊັ່ນ: ການສ້າງຄວາມເປັນເອກະພາບ ແລະ ຄວາມສະດວກງ່າຍດາຍທາງດ້ານເອກະສານ ແມ່ນມີຜົນກະທົບຫຼາຍທີ່ສຸດຕໍ່ກັບການເພີ່ມຂຶ້ນຂອງປະລິມານການຄ້າໃນບັນດາປະເທດທີ່ມີລາຍໄດ້ຕ່ຳ[20]. ມາດຕະການອຳນວຍຄວາມສະດວກທາງດ້ານການຄ້າເຫຼົ່ານັ້ນ ຖືກກຳນົດໄວ້ໃນໝວດ C ໂດຍພິຈາ

---

[19] ບົດສຶກສາ "*ຕົວຊີ້ວັດດ້ານການອຳນວຍຄວາມສະດວກທາງດ້ານການຄ້າຂອງ OECD: ຂັບເຄື່ອນອາຊຽນກ້າວໄປຂ້າງໜ້າ*", OECD (2015).

[20] ບົດສຶກສາ "*ຕົວຊີ້ວັດດ້ານການອຳນວຍຄວາມສະດວກທາງດ້ານການຄ້າ: ທ່າແຮງຜົນກະທົບຂອງການອຳນວຍຄວາມສະດວກທາງດ້ານການຄ້າໃນບັນດາປະເທດກຳລັງພັດທະນາ*", OECD (2012).

ລະບາເຖິງຄວາມຕ້ອງການການຊ່ວຍເຫຼືອດ້ານເຕັກນິກວິຊາການ ແລະ ການສ້າງຂີດຄວາມສາມາດ ເພື່ອໃຫ້ທຸກຂະແໜງການສາມາດຈັດຕັ້ງປະຕິບັດໄດ້. ເຖິງຢ່າງໃດກໍຕາມ, ເນື່ອງຈາກຜົນກະທົບຕໍ່ກັບການຫຼຸດລົງຂອງຕົ້ນທຶນ/ຄ່າໃຊ້ຈ່າຍ ທາງດ້ານການຄ້າມີຄວາມສຳຄັນ, ຈຶ່ງຈຳເປັນຕ້ອງມີຢືນຢັນມາດຕະການໝວດ B ແລະ C ເພື່ອທີ່ຈະສາມາດແຈ້ງໃຫ້ກອງເລຂາອົງການການຄ້າໂລກ ໃນວັນທີ 21 ກຸມພາ 2018.

*(ຄ) ແຈ້ງແຜນຈັດຕັ້ງປະຕິບັດມາດຕະການໃນໝວດ B*

ອີງຕາມຜົນການປະເມີນຄວາມສາມາດຕົນເອງ ແລະ ການປຶກສາຫາລືຮ່ວມກັນ, ບັນດາຂະແໜງການກ່ຽວຂ້ອງຕ້ອງກຳນົດຂອບເຂດເວລາທີ່ຕ້ອງການ ໃນການຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ B ແລະ ແຈ້ງກຳນົດວັນເວລາໃນການຈັດຕັ້ງປະຕິບັດບັນດາມາດຕະການໃນໝວດດັ່ງກ່າວໃຫ້ອົງການການຄ້າໂລກ ຮັບຮູ້ພາຍໃນປີ 2018. ການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ ຄວນມີການຢັ້ງຢືນຮັບຮອງຈາກພາກລັດ ແລະ ພາກທຸລະກິດ. ມາດຕະການທີ່ນອນໃນໝວດ B ປະກອບມີດັ່ງລຸ່ມນີ້ :[21]

- (i) ໂອກາດໃນການປະກອບຄຳຄິດເຫັນ ແລະ ສະໜອງຂໍ້ມູນຕໍ່ກັບບັນດານິຕິກຳ ແລະ ລະບຽບການຕ່າງໆກ່ອນມີຜົນບັງຄັບໃຊ້ (ມາດຕາ 2)
- (ii) ການປຶກສາຫາລື ກັບພາກສ່ວນທີ່ກ່ຽວຂ້ອງ(ມາດຕາ 2)
- (iii) ລະບຽບການທົ່ວໄປ ກ່ຽວກັບ ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ (ມາດຕາ 6)
- (iv) ລະບຽບການປັບໄໝ (ມາດຕາ 6)
- (v) ການຊຳລະຜ່ານທາງເອເລັກໂຕຣນິກ (ມາດຕາ 7)
- (vi) ການແຍກຂັ້ນຕອນການກວດປ່ອຍສິນຄ້າອອກຈາກຂັ້ນຕອນການກຳນົດສຸດທ້າຍ ກ່ຽວກັບ ມູນຄ່າພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ (ມາດຕາ 7)
- (vii) ການອຳນວຍຄວາມສະດວກໃນການກວດປ່ອຍສິນຄ້າທີ່ເນົ່າເປື່ອຍໄວ (ມາດຕາ 7)

*(ງ) ຈັດຕັ້ງປະຕິບັດທຸກມາດຕະການໃນໝວດ C ພາຍໃນປີ 2022*

ຜ່ານການປະເມີນຕົນເອງ ແລະ ການປຶກສາຫາລືຮ່ວມກັນຂອງຂະແໜງການທີ່ກ່ຽວຂ້ອງ ຕໍ່ກັບຄວາມສາມາດໃນການຈັດຕັ້ງປະຕິບັດສັນຍາ ອຄ ສາມາດຮັບຮູ້ໄດ້ວ່າ ມີຄວາມຈຳເປັນຈະຕ້ອງການການຊ່ວຍເຫຼືອທາງດ້ານເຕັກນິກ ແລະ ການສ້າງຂີດຄວາມສາມາດທີ່ຈຳເປັນ ໂດຍການສະໜັບສະໜູນຈາກອົງການການຄ້າໂລກ ຫຼື ບັນດາຄູ່ຮ່ວມພັດທະນາ ເພື່ອຈັດຕັ້ງປະຕິບັດມາດຕະການໃນໝວດ C. ສະນັ້ນ, ມີຄວາມຈຳເປັນຕ້ອງກະກຽມແຜນດຳເນີນງານ ເພື່ອສະເໜີຂໍການຊ່ວຍເຫຼືອໂດຍໄວ ໂດຍການປຶກສາຫາລືກັບບັນດາຄູ່ຮ່ວມພັດທະນາໃຫ້ສຳເລັດພາຍໃນປີ 2018 ເພື່ອໃຫ້ໄດ້ການສະໜັບສະໜູນທີ່ຈຳເປັນ ແລະ ນຳສະເໜີຫາອົງການການຄ້າໂລກໃນວັນທີ 21 ກຸມພາ 2019 ແລະ ໃຫ້ສາມາດເລີ່ມຈັດຕັ້ງປະຕິບັດການຊ່ວຍເຫຼືອດັ່ງກ່າວ ໃຫ້ສຳເລັດພາຍໃນປີ 2022. ມາດຕະການທີ່ນອນໃນໝວດ C ປະກອບມີດັ່ງລຸ່ມນີ້:

- (i) ການຢັ້ງຢືນຮັບຮອງລ່ວງໜ້າ (ມາດຕາ 3)
- (ii) ໂອກາດໃນການທົດສອບຄັ້ງທີ່ 2 (ມາດຕາ 5)
- (iii) ການບໍລິຫານຄວາມສ່ຽງ (ມາດຕາ 7)
- (iv) ການກວດສອບພາຍຫຼັງການປ່ອຍສິນຄ້າ (ມາດຕາ 7)
- (v) ການສ້າງຕັ້ງ ແລະ ພິມເຜີຍແຜ່ກ່ຽວກັບໄລຍະເວລາສະເລ່ຍໃນການປ່ອຍສິນຄ້າ (ມາດຕາ 7)
- (vi) ການອຳນວຍຄວາມສະດວກທາງດ້ານການຄ້າ ສຳລັບຜູ້ປະກອບການມາດຕະຖານເອອີໂອ (AEO) (ມາດຕາ 7)
- (vii) ການຂົນສົ່ງທີ່ວ່ອງໄວ (ມາດຕາ 7)
- (viii) ການຮ່ວມມືຂອງໜ່ວຍງານປະຈຳດ່ານຊາຍແດນ (ມາດຕາ 8)
- (ix) ການທົບທວນຄືນຂໍ້ກຳນົດ ກ່ຽວກັບ ຂັ້ນຕອນ ແລະ ເອກະສານທີ່ຮຽກຮ້ອງຕ້ອງການ (ມາດຕາ 10)

[21] ຂະແໜງພາສີ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ເຫັນດີ ໃນການກຳນົດໝວດ B ແລະ C ໃນກອງປະຊຸມປຶກສາຫາລື ວັນທີ 14 ທັນວາ 2016.

(x) ການຍອມຮັບສຳເນົາເອກະສານ (ມາດຕາ 10)

(xi) ການນຳໃຊ້ມາດຕະຖານສາກົນ (ມາດຕາ 10)

(xii) ລະບົບແຈ້ງພາສີປະຕູດຽວ (ມາດຕາ 10)

(xiii) ຂັ້ນຕອນທີ່ດ່ານຊາຍແດນ ແລະ ຂໍ້ຮຽກຮ້ອງທາງດ້ານເອກະສານທີ່ເປັນເອກະພາບກັນ (ມາດຕາ 10)

(xiv) ຂໍ້ກຳນົດດຽວກັບການສົ່ງກັບສິນຄ້າທີ່ຖືກປະຕິເສດ (ມາດຕາ 10)

(xv) ເສລີພາບໃນການຜ່ານແດນ (ມາດຕາ 11)

(xvi) ການຮ່ວມມືຂອງຂະແໜງພາສີ (ມາດຕາ 12)

## 6.2 ຄາດຄະເນຜົນໄດ້ຮັບ

ຕົວຊີ້ວັດຜົນໄດ້ຮັບ ຈະເປັນສິ່ງວັດແທກໃນການປະເມີນຜົນກະທົບຂອງບັນດາມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ຈະເປັນປະໂຫຍດຢ່າງຍິ່ງໃນການທົບທວນຄືນເມື່ອໄດ້ຮັບການຈັດຕັ້ງປະຕິບັດໄປໄດ້ໄລຍະໜຶ່ງ ຖ້າຫາກວ່າ ຄາດໝາຍຂອງຜົນໄດ້ຮັບຍັງບໍ່ຈະແຈ້ງ. ຕົວຊີ້ວັດເຫຼົ່ານີ້ ຍັງຈະຖືກນຳມາໃຊ້ຢ່າງກວ້າງຂວາງໃນການວັດແທກ ເພື່ອປັບປຸງຄວາມສາມາດໃນການແຂ່ງຂັນທາງດ້ານການຄ້າ ຊຶ່ງຈະເປັນການທົດສອບການຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ. ການຄາດຄະເນຜົນໄດ້ຮັບ ແມ່ນໄດ້ຖືກກຳນົດຢ່າງລະອຽດໃນແຜນດຳເນີນງານສະບັບນີ້ ດັ່ງມີລາຍລະອຽດລຸ່ມນີ້:

### 6.2.1 ຫຼຸດຜ່ອນເວລາໃນການນຳເຂົ້າ ແລະ ສົ່ງອອກ

ອີງຕາມບົດລາຍງານປີ 2014 ກ່ຽວກັບ ດັດຊະນີທາງດ້ານການດຳເນີນການຄ້າ ໃນກອງປະຊຸມເສດຖະກິດໂລກ, ເວລາສະເລ່ຍທີ່ໃຊ້ໃນການສົ່ງອອກຂອງ ສປປ ລາວ ແມ່ນ 228 ຊົ່ວໂມງ[22], ຊຶ່ງລວມທັງເວລາທີ່ໃຊ້ໃນການດຳເນີນເອກະສານ. ສະນັ້ນ, ແຜນດຳເນີນງານສະບັບນີ້ຈຶ່ງໄດ້ກຳນົດເປົ້າໝາຍ ໃນການຫຼຸດຜ່ອນເວລາການສົ່ງອອກລົງໃຫ້ໄດ້ 50% (ມາເປັນ 114 ຊົ່ວໂມງ) ພາຍໃນປີ 2022. ເປົ້າໝາຍນີ້ ສາມາດບັນລຸໄດ້ ໂດຍການຫຼຸດຜ່ອນມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ທີ່ບໍ່ຈຳເປັນລົງ ແລະ ເຮັດໃຫ້ບັນດາມາດຕະການທີ່ຕິດພັນກັບຂັ້ນຕອນການສົ່ງອອກຕ່າງໆທີ່ຍັງຄົງເຫຼືອຢູ່ມີຄວາມກະທັດຮັດ ຄຽງຄູ່ກັບການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ. ພ້ອມນັ້ນ ກໍໄດ້ກຳນົດເປົ້າໝາຍຫຼຸດຜ່ອນເວລາທີ່ໃຊ້ໃນການດຳເນີນການນຳເຂົ້າໃຫ້ໄດ້ 50% ຈາກເວລາສະເລ່ຍທີ່ໃຊ້ໃນປະຈຸບັນແມ່ນ 230 ຊົ່ວໂມງ[23] ມາເປັນ 115 ຊົ່ວໂມງພາຍໃນປີ 2022.

### 6.2.2 ຫຼຸດຜ່ອນຕົ້ນທຶນໃນການນຳເຂົ້າ ແລະ ສົ່ງອອກ

ຕົ້ນທຶນໃນການດຳເນີນການນຳເຂົ້າ ແລະ ສົ່ງອອກຈະຕ້ອງຫຼຸດລົງໃຫ້ໄດ້ 30% ພາຍໃນປີ 2020 ຈາກລະດັບ ປະຈຸບັນ 308 ໂດລາສະຫາລັດ ສຳລັບການສົ່ງອອກ ແລະ 268 ໂດລາສະຫາລັດ ສຳລັບການນຳເຂົ້າ ຕໍ່ຕູ້ຄອນເທນເນີ[24]. ແຜນດຳເນີນງານດັ່ງກ່າວຕັ້ງເປົ້າໝາຍຈະເຮັດໃຫ້ຕົ້ນທຶນການສົ່ງອອກຫຼຸດລົງເຫຼືອ 216 ໂດລາສະຫາລັດ ແລະ ການນຳເຂົ້າຫຼຸດລົງເຫຼືອ 188 ໂດລາສະຫາລັດ ໃນປີ 2022 ໂດຍການຫລຸດຜ່ອນຂັ້ນຂອດ ແລະ ເຮັດໃຫ້ໂຄງສ້າງຄ່າທຳນຽມມີຄວາມສົມເຫດສົມຜົນ. ພ້ອມດຽວກັນ, ການສ້າງຕັ້ງລະບົບແຈ້ງພາສີປະຕູດຽວ ແລະ ການຫຼຸດຂັ້ນຂອດທີ່ເປັນມາດຕະການການຄ້າທີ່ບໍ່ແມ່ນພາສີ ທີ່ຕິດພັນກັບການສົ່ງອອກ ໂດຍສະເພາະຜະລິດຕະພັນກະສິກຳ ແລະ ແຮ່ທາດ ກໍ່ແມ່ນເຄື່ອງມືໜຶ່ງໃນການຈະຊ່ວຍຫຼຸດຕົ້ນທຶນ ໃນການສົ່ງອອກ.

### 6.2.3 ຫຼຸດຜ່ອນຈຳນວນເອກະສານໃນການນຳເຂົ້າ ແລະ ສົ່ງອອກ

ຈຳນວນເອກະສານທີ່ຮຽກຮ້ອງສຳລັບການນຳເຂົ້າ ແລະ ສົ່ງອອກ ຈະຕ້ອງຫຼຸດລົງໃຫ້ໄດ້ 30% ພາຍໃນປີ 2022. ເປົ້າໝາຍນີ້ສາມາດບັນລຸໄດ້ ໂດຍການຫຼຸດຜ່ອນບັນດາຂັ້ນຂອດຂອງບັນດາຂະແໜງການ ແລະ ການສ້າງຕັ້ງລະບົບປະຕູດຽວ, ຊຶ່ງຂໍ້ມູນແມ່ນຖືກຮອບຮອມຕາມມາດຕະຖານດຽວກັນ ແລະ ສາມາດແລກປ່ຽນຂໍ້ມູນຜ່ານທາງເອເລັກໂຕຣນິກກັບບັນດາຂະແໜງການທີ່ກ່ຽວຂ້ອງ ໂດຍບໍ່ຈຳເປັນອອກເອກະສານທີ່ຊ້ຳຊ້ອນກັນ. ນອກຈາກນັ້ນ ລະບົບການແຈ້ງພາສີປະຕູດຽວອາຊຽນ ຍັງຊ່ວຍໃນການແລກປ່ຽນຂໍ້ມູນຂ່າວສານກັບປະເທດເພື່ອນບ້ານ.

---

[22] ອີງຕາມບົດລາຍງານຄວາມງ່າຍດາຍທາງດ້ານການດຳເນີນທຸລະກິດຂອງທະນາຄານໂລກ ປີ 2016

[23] ອີງຕາມບົດລາຍງານຄວາມງ່າຍດາຍທາງດ້ານການດຳເນີນທຸລະກິດຂອງທະນາຄານໂລກ ປີ 2016

[24] ອີງຕາມບົດລາຍງານຄວາມງ່າຍດາຍທາງດ້ານການດຳເນີນທຸລະກິດຂອງທະນາຄານໂລກ ປີ 2016

### 6.2.4 ປັບປຸງການຈັດລຳດັບຂອງ ສປປ ລາວ ໃນຕົວຊີ້ວັດການຄ້າຂ້າມແດນ

ການດຳເນີນການປັບປຸງບັນດາຂັ້ນຕອນໃນການຫຼຸດເວລາ ແລະ ຄ່າໃຊ້ຈ່າຍທີ່ຕິດພັນກັບການນຳເຂົ້າ ແລະ ສົ່ງອອກ ຕາມທີ່ໄດ້ກຳນົດໃນແຜນດຳເນີນງານວຽກງານ ອຄ ຄາດວ່າຈະສາມາດຍົກລຳດັບຂອງ ສປປ ລາວ ໃນການຈັດລຳດັບຂອງທະນາຄານໂລກທາງດ້ານການຄ້າຂ້າມແດນໃຫ້ມາຢູ່ໃນລະດັບ 2 ຕົວເລກ ຫຼື ລະດັບ 100 ລົງມາ ຫຼື ຢ່າງໜ້ອຍໃຫ້ໃກ້ຄຽງກັບລຳດັບຂອງປະເທດເພື່ອນບ້ານເຊັ່ນ: ສປ ຈີນ, ສສ ຫວຽດນາມ ແລະ ກຳປູເຈຍ.

## VII. ໄລຍະການຈັດຕັ້ງປະຕິບັດ

ແຜນດຳເນີນງານວຽກງານ ອຄ ປີ 2017-2022 ຈະຈັດຕັ້ງປະຕິບັດໃນ 4 ໄລຍະຕໍ່ໄປນີ້:

### 7.1 ໄລຍະເລີ່ມຕົ້ນ (ສິງຫາ 2017-ກຸມພາ 2018)

ໄລຍະທຳອິດ ຈະຮັບຮອງເອົາແຜນດຳເນີນງານວຽກງານ ອຄ ປີ 2017-2022. ພາຍຫຼັງການຮັບຮອງເອົາແຜນວຽກງານ ດັ່ງກ່າວ, ຈະເລີ່ມດຳເນີນການສ້າງຕັ້ງໜ່ວຍງານຈັດຕັ້ງປະຕິບັດແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ, ແລະ ກະກຽມແຜນປະຕິບັດງານຂອງຂະແໜງການ ເພື່ອຈັດຕັ້ງປະຕິບັດວຽກງານ ອຄ ໃນບັນດາຂະແໜງການທີ່ກ່ຽວຂ້ອງໃຫ້ສອດຄ່ອງກັບເວລາທີ່ກຳນົດໄວ້ໃນແຜນດຳເນີນງານ ແລະ ສ້າງຕັ້ງກົນໄກການປະສານງານ/ຈຸດປະສານງານ ຂັ້ນແຂວງ/ນະຄອນຫຼວງ.

ໂດຍລວມແລ້ວ, ໄລຍະນີ້ ຈະເລີ່ມຕົ້ນຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ ຂັ້ນພື້ນຖານ ຊຶ່ງລວມມີການສ້າງຕັ້ງກົນໄກການບໍລິຫານທີ່ສຳຄັນ ເຊັ່ນ: ສ້າງຕັ້ງໜ່ວຍງານຈັດຕັ້ງປະຕິບັດແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານ ອຄ ໃນບັນດາຂະແໜງການທີ່ກ່ຽວຂ້ອງ ໂດຍສະເພາະການກຳນົດການຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ B ແລະ C ຊຶ່ງລວມມີການສ້າງກົນໄກການປະສານງານກັບກອງປະຊຸມທຸລະກິດລາວ ເພື່ອໃຫ້ພາກທຸລະກິດ ເຂົ້າມາມີສ່ວນຮ່ວມໃນການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ.

ນອກນັ້ນ, ທຸກຂະແໜງການກ່ຽວຂ້ອງຕ້ອງມີການກະກຽມມາດຖານການໃຫ້ບໍລິການ ແລະ ມີການເຜີຍແຜ່ໃນເວັບໄຊ້ ໃນສູນຂໍ້ມູນຂ່າວສານທາງດ້ານການຄ້າ ແລະ ຂອງຂະແໜງການຕົນເອງ. ໃນໄລຍະນີ້, ຈະມີການຈັດຕັ້ງປະຕິບັດມາດຕະການ ອຄ ທີ່ນອນໃນໝວດ A ຂອງສັນຍາການອຳນວຍຄວາມສະດວກທາງດ້ານການຄ້າ ໃນຂອບອົງການການຄ້າໂລກ.

### 7.2 ໄລຍະສັ້ນ (ມີນາ-ທັນວາ 2018)

ໄລຍະນີ້, ຈະຈັດຕັ້ງປະຕິບັດກິດຈະກຳອັນຮີບດ່ວນ ເຊັ່ນ: ການທົບທວນ 11 ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ແລະ ການຈັດຕັ້ງປະຕິບັດຕາມຄຳແນະນຳຂອງການທົບທວນດັ່ງກ່າວ. ພ້ອມດຽວກັນ, ໄລຍະນີ້ຈະຈັດຕັ້ງປະຕິບັດບັນດາມາດຕະການທີ່ເປັນບູລິມະສິດອື່ນໆ ທີ່ລະບຸໄວ້ໃນແຜນດຳເນີນງານ ເຊັ່ນ: ການອອກນິຕິກຳ ກ່ຽວກັບ ການກວດກາຕາມເສັ້ນທາງທີ່ບໍ່ຈຳເປັນ , ການຊຳລະເງິນຈຸດດຽວ, ການກວດກາຈຸດດຽວ ທີ່ດ່ານຊາຍແດນສະຫວັນນະເຂດ-ມຸກດາຫານ ແລະ ການຮັບຮອງນິຕິກຳເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທຸລະກຳທາງດ້ານເອເລັກໂຕຣນິກ ແລະ ອື່ນໆ. ພ້ອມດຽວກັນ, ໃນໄລຍະດັ່ງກ່າວນີ້ ຍັງຕ້ອງໄດ້ແຈ້ງກຳນົດເວລາໃນການຈັດຕັ້ງປະຕິບັດມາດຕະການໃນໝວດ B ແລະ ມາດຕະການທີ່ກຳນົດໃນໝວດ C ໃຫ້ກອງເລຂາອົງການການຄ້າໂລກ ພາຍໃນວັນທີ 21 ກຸມພາ 2018.

ນອກນັ້ນ, ໄລຍະນີ້ຍັງຈະມີການກະກຽມຮ່າງບົດສະເໜີ ເພື່ອຊອກຫາທຶນຈາກຄູ່ຮ່ວມພັດທະນາ ແລະ ແຈ້ງຫາອົງການການຄ້າໂລກ ກ່ຽວກັບ ການກະກຽມການຈັດຕັ້ງປະຕິບັດ ເພື່ອຂໍການຊ່ວຍເຫຼືອທາງດ້ານວິຊາການ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດມາດຕະການໃນໝວດ C.

### 7.3 ໄລຍະກາງ (ມັງກອນ-ທັນວາ 2019)

ໜ້າວຽກຕົ້ນຕໍຂອງໄລຍະນີ້ ລວມມີ ການຢັ້ງຢືນຮັບຮອງທັງພາກລັດ ແລະ ພາກທຸລະກິດໃນການຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ B ແລະ ການຈັດຕັ້ງປະຕິບັດບາງມາດຕະການບູລິມະສິດໃນໝວດ C ເຊັ່ນ: ການຄັດເລືອກບັນດາຜູ້ສົ່ງອອກເຂົ້າໃນໂຄງການຜູ້ປະກອບການມາດຕະຖານເອອີໂອ (AEO), ການຈັດຕັ້ງປະຕິບັດລະບົບແຈ້ງພາສີປະຕູດຽວຂອງ ສປປ ລາວ ແລະ ອາຊຽນ, ແລະ ຫຼຸດຂັ້ນຂອດຂອງຂັ້ນຕອນທີ່ດ່ານຊາຍແດນ ດ້ວຍການສ້າງຄວາມໂປ່ງໃສດ້ານລະບຽບການ. ພ້ອມນັ້ນ, ຍັງຈະທົບທວນ ແລະ ປະເມີນຜົນກະທົບບັນດາມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ທີ່ຍັງມີຢູ່, ຊຶ່ງຈະເປັນການລົບລ້າງຫຼາຍມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ເພື່ອແນໃສ່ຫຼຸດຂັ້ນຂອດ ແລະ ການເກັບຄ່າທຳນຽມທີ່ສົມເຫດສົມຜົນ. ສິ່ງເຫຼົ່ານີ້ຈະສົ່ງຜົນກະທົບທາງບວກໂດຍກົງຕໍ່ກັບເວລາ, ຄ່າໃຊ້ຈ່າຍ ແລະ ຈະຊ່ວຍປັບປຸງການຈັດລຳດັບຂອງປະເທດພາຍໃຕ້ຕົວຊີ້ວັດດ້ານການອຳນວຍຄວາມສະດວກທາງດ້ານການຄ້າ.

ນອກຈາກນັ້ນ, ຈະເນັ້ນໃສ່ການຈັດຝຶກອົບຮົບ ເພື່ອສ້າງຄວາມເຂັ້ມແຂງຂອງບັນດາຂະແໜງການທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດມາດຕະການ ອຄ ຕ່າງໆ ໃນແຜນດຳເນີນງານວຽກ ອຄ. ວຽກນີ້ຈະລວມມີການຈັດກອງປະຊຸມປຶກສາຫາລື ແລະ ການຝຶກອົບຮົບສ້າງຂີດຄວາມສາມາດໃຫ້ແກ່ພາກທຸລະກິດ ເພື່ອຊຸກຍູ້ການມີສ່ວນຮ່ວມຂອງພາກທຸລະກິດໃນການຈັດຕັ້ງປະຕິບັດແຜນດຳເນີນງານນີ້.

## 7.4 ໄລຍະຍາວ (ມັງກອນ 2020 - ທັນວາ 2022)

ໄລຍະນີ້ ຈະເປັນການຈັດຕັ້ງປະຕິບັດທຸກມາດຕະການທີ່ຍັງເຫຼືອຂອງໝວດ C ເພື່ອໃຫ້ສຳເລັດຊ້າສຸດພາຍໃນປີ 2022 ໂດຍມີການຢັ້ງຢືນຮັບຮອງຈາກພາກລັດ ແລະ ພາກທຸລະກິດ ແລະ ບັນດາຜູ້ໃຫ້ທຶນ, ແຕ່ຖ້າສຳເລັດກ່ອນກໍ່ຍິ່ງເປັນການດີ. ເນື່ອງຈາກມາດຕະການໃນໝວດ C ຮຽກຮ້ອງການຊ່ວຍເຫຼືອທາງດ້ານວິຊາການ ແລະ ການສ້າງຂີດຄວາມສາມາດໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງຈາກບັນດາຄູ່ຮ່ວມພັດທະນາ, ສະນັ້ນ ຈຳເປັນຕ້ອງໄດ້ມີການຕິດຕາມກວດກາຢ່າງຕໍ່ເນື່ອງ ເພື່ອຮັບປະກັນວ່າມາດຕະການດັ່ງກ່າວ ຈະຖືກຈັດຕັ້ງປະຕິບັດທັນຕາມຂອບເວລາທີ່ກຳນົດ.

ແຜນວຽກໃນໄລຍະຍາວນີ້ຍັງລວມເອົາການປະເມີນໄລຍະກາງ ແລະ ໄລຍະສຸດທ້າຍຂອງການສິ້ນສຸດການຈັດຕັ້ງປະຕິບັດແຜນດຳເນີນງານສະບັບນີ້ ພ້ອມທັງກະກຽມຄວາມພ້ອມ ໃນການສ້າງແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າໃນອານະຄົດ. ການປະເມີນຜົນແຜນດຳເນີນງານວຽກງານ ອຄ ໄລຍະກາງ ຈະເລີ່ມຕັ້ງແຕ່ຕົ້ນປີ 2020 ເພື່ອໃຫ້ມີເວລາພຽງພໍໃນການສັງລວມຂໍ້ມູນ ເພື່ອປະເມີນຜົນງານທີ່ເຮັດສຳເລັດ ແລະ ກະກຽມບົດສະເໜີ ເພື່ອທົບທວນຄືນດ້ານຂອບເຂດເວລາ ແລະ ອາດມີການເພີ່ມຕື່ມບາງໜ້າວຽກທີ່ຈຳເປັນຕາມຜົນການປະເມີນ.

ການປະເມີນໄລຍະສຸດທ້າຍຕ້ອງເລີ່ມຕົ້ນໃນທ້າຍປີ 2021 ເພື່ອໃຫ້ຜົນຂອງການປະເມີນສຳເລັດຊ້າສຸດພາຍໃນເດືອນມີນາ ປີ 2022 ເຊິ່ງຈະເຮັດໃຫ້ມີເວລາພຽງພໍໃນການຮ່າງແຜນຍຸດທະສາດອຳນວຍຄວາມສະດວກທາງດ້ານການຄ້າໃນອະນາຄົດ ເຊັ່ນ ປີ 2023-2027. ຊ່ຽວຊານວຽກງານດ້ານການອຳນວຍຄວາມສະດວກທາງດ້ານການຄ້າ ຕ້ອງມີສ່ວນຮ່ວມໃນການຊ່ວຍເຮັດບົດປະເມີນຜົນຂອງແຜນດຳເນີນງານ ແລະ ຮ່າງແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ສະບັບໃໝ່.

# VIII. ແຜນການຈັດຕັ້ງປະຕິບັດແຜນດຳເນີນງານອຽກງານ ອຄ ປີ 2017-2022

| ມາດຕະການຍຸດທະສາດ | ລ/ດ | ໜ້າວຽກ | ກຳນົດເວລາ | ໜ່ວຍງານຮັບຜິດຊອບ |
|---|---|---|---|---|
| ວຽກງານການກະກຽມ | 1 | ຮັບຮອງແຜນດຳເນີນງານອຽກງານ ອຄ ປີ 2017-2022 | ກໍລະກົດ - ສິງຫາ 2017 | ກົມການນຳເຂົ້າ ແລະ ສົ່ງອອກ (ກຂອ) |
| ປັບປຸງກົນໄກການຈັດຕັ້ງ ເພື່ອເຮັດໃຫ້ການປະສານງານລະຫວ່າງຂະແໜງການການກ່ຽວຂ້ອງໃຫ້ມີປະສິດທິຜົນ | 2 | ຈັດກອງປະຊຸມ ກອງເລຂາ ອຄ ເປັນໄຕມາດລະຄັ້ງ | ທັນວາ 2017 | ກຂອຄ |
| | 3 | ສ້າງຕັ້ງໜ່ວຍງານຈັດຕັ້ງປະຕິບັດແຜນດຳເນີນງານອຽກງານອຳນວຍຄວາມສະດວກທາງດ້ານການຄ້າໃນແຕ່ລະຂະແໜງການທີ່ກ່ຽວຂ້ອງ | ມັງກອນ 2018 | ທຸກຂະແໜງການທີ່ກ່ຽວຂ້ອງ |
| | 4 | ກະກຽມແຜນປະຕິບັດງານອຽກງານ ອຄ ໂດຍແຕ່ລະຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດແຜນດຳເນີນງານ | 2018 | ທຸກຂະແໜງການທີ່ກ່ຽວຂ້ອງ |
| ສ້າງຄວາມເຂັ້ມແຂງໃຫ້ແກ່ກົນໄກການຈັດຕັ້ງຂັ້ນທ້ອງຖິ່ນ ເພື່ອເພີ່ມທະວີການປະສານງານ, ການຕິດຕາມກວດກາ ແລະ ການຈັດຕັ້ງປະຕິບັດບັນດາມາດຕະການອຽກງານ ອຄ | 5 | ສ້າງຄວາມເຂັ້ມແຂງ ໃຫ້ພາກລັດ ແລະ ທຸລະກິດຂັ້ນແຂວງ/ນະຄອນຫຼວງ ຕໍ່ກັບການຈັດຕັ້ງປະຕິບັດແຜນດຳເນີນງານອຽກງານ ອຄ | ມັງກອນ 2018 | ກຂອຄ ໂດຍມີການປຶກສາຫາລືກັບ ແຂວງທີ່ກ່ຽວຂ້ອງ |
| | 6 | ແຕ່ງຕັ້ງຈຸດປະສານງານອຽກງານ ອຄ ຂັ້ນນະຄອນຫຼວງ/ແຂວງ ຂອງແຕ່ລະຂະແໜງການ (ຈຸດປະສານງານ ຫຼື ກອງເລຂາ ອຄ) | ກຸມພາ 2018 | ກຂອຄ ໂດຍມີການປຶກສາຫາລືກັບແຂວງທີ່ກ່ຽວຂ້ອງ |
| ມາດຕະການບູລິມະສິດ ເພື່ອປັບປຸງມາດຖານການບໍລິການການສ້າງຄວາມງ່າຍດາຍຕໍ່ກັບຂັ້ນຕອນທີ່ດ່ານຊາຍແດນ ເຊັ່ນ: ການຂະຫຍາຍເວລາໃຫ້ບໍລິການ, ກວດກາຈຸດດຽວ, ຊຳລະເງິນບ່ອນດຽວ, ແລະ ສ້າງຕັ້ງລະບົບແຈ້ງພາສີປະຕູດຽວ | 7 | ຈັດພິມເຜີຍແຜ່ກ່ຽວກັບຂັ້ນຕອນ, ເອກະສານທີ່ຕ້ອງການ ແລະ ມາດຖານ ແລະ ຂອບເຂດເວລາໃນການໃຫ້ບໍລິການ ລົງໃນສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ແລະ ເວັບໄຊ້ຂອງຂະແໜງການທີ່ກ່ຽວຂ້ອງ. | 2017 | ທຸກຂະແໜງການທີ່ກ່ຽວຂ້ອງ |
| | 8 | ສຶກສາຄວາມເປັນໄປໄດ້ໃນການຂະຫຍາຍຊົ່ວໂມງໃຫ້ບໍລິການ ແລະ ການກວດປ່ອຍສິນຄ້າຢູ່ດ່ານທ່ານາແລ້ງເປັນການທົດລອງ ແລະ ຢູ່ດ່ານຊາຍແດນອື່ນໆ ເພື່ອສຶກສາບໍລິມາດການຈໍລະຈອນສິນຄ້າວ່າມີປະລິມານສິນຄ້າຫຼາຍ ແລະ ຄຸ້ມຄ່າກັບການຂະຫຍາຍເວລາ ຫຼື ບໍ່ | 2018 | ກົມພາສີ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |
| | 9 | ທົບທວນຄືນນິຕິກຳການກວດກາສິນຄ້າຕາມເສັ້ນທາງ ແລະ ຖ້າຈຳເປັນກໍ່ອອກນິຕິກຳ ເພື່ອຢຸດການກວດກາ ແລະ ກວດສອບຕາມເສັ້ນທາງທີ່ບໍ່ຈຳເປັນ ແລະ ການກວດການອກອານາເຂດພາສີ. | 2018 | ກົມພາສີ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |
| | 10 | ລວມສູນການຈ່າຍເງິນຄ່າພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ ທີ່ກ່ຽວຂ້ອງກັບການນຳເຂົ້າ ແລະ ສົ່ງອອກ ທີ່ຈຸດຜ່ານແດນ ແລະ ຂະຫຍາຍການນຳໃຊ້ສິ່ງອຳນວຍຄວາມສະດວກໃນການຈ່າຍເງິນ (ບັດສະມາດແທັກ)/ການຈ່າຍເງິນຜ່ານທາງເອເລັກໂຕຣນິກ. | 2018 | ກົມພາສີ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |
| | 11 | ຈັດຕັ້ງປະຕິບັດ ລວມເອົາຢ່າງໜ້ອຍ 10 ບໍລິສັດ ໃນໂຄງການຜູ້ປະກອບການມາດຕະຖານເອອີໂອ (AEO) ແລະ ຊຸກຍູ້ໃຫ້ຜູ້ປະກອບການເຂົ້າຮ່ວມຢ່າງໜ້ອຍ 20 ບໍລິສັດພາຍໃນປີ 2020. | 2018 | ກົມພາສີ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |
| | 12 | ສ້າງຕັ້ງລະບົບແຈ້ງພາສີປະຕູດຽວຮ່ວມກັບ 5 ຂະແໜງການຫຼັກ ພາຍໃນປີ 2019; ຮ່ວມກັບ 10 ກົມ ພາຍໃນປີ 2020; ແລະ ກັບກົມອື່ນໆທີ່ເຫຼືອ ພາຍໃນປີ 2022 | 2019 | ກົມພາສີ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |
| | 13 | ທົບທວນ ແລະ ປະເມີນຜົນກະທົບຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ 22 ມາດຕະການ | ກັນຍາ 2018 | ກຂອຄ ແລະ 4 ຂະແໜງການທີ່ກ່ຽວຂ້ອງ |

| | | | | |
|---|---|---|---|---|
| **ລົບລ້າງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ທີ່ບໍ່ຈຳເປັນ** | 14 | ລົບລ້າງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີທີ່ບໍ່ຈຳເປັນ ແລະ ຫຼຸດຜ່ອນຂັ້ນຂອດຂອງຂັ້ນຕອນຕ່າງໆ ແລະ ປັບປຸງໂຄງສ້າງດ້ານຄ່າທຳນຽມໃຫ້ສົມເຫດສົມຜົນສຳລັບ 10 ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີຕາມຜົນຂອງການທົບທວນ ແລະ ການປະເມີນຜົນກະທົບຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ | ທັນວາ 2018 | ທຸກຂະແໜງການທີ່ກ່ຽວຂ້ອງ |
| | 15 | ທົບທວນ ແລະ ປະເມີນຜົນກະທົບມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ສຳລັບມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ທີ່ຍັງມີຢູ່ | 2020 | ກຂອຄ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |
| | 16 | ສືບຕໍ່ດຳເນີນການທົບທວນ ແລະ ປະເມີນຜົນກະທົບຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ເພີ່ມຕື່ມ ເພື່ອຫຼຸດຜ່ອນມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ທີ່ບໍ່ຈຳເປັນ ຫຼື ເຮັດໃຫ້ຂັ້ນຂອດ ຫຼຸດລົງຕື່ມ | 2022 | ກຂອຄ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |
| **ການເຊື່ອມໂຍງກັບພາກພື້ນ-ສາກົນ ແລະ ຮ່ວມມືກັບປະເທດທີ່ມີຊາຍແດນຕິດຈອດກັນ** | 17 | ຈັດຕັ້ງປະຕິບັດການສ້າງສິ່ງອຳນວຍຄວາມສະດວກທີ່ເປັນການກວດກາ ແລະ ແຈ້ງເອກະສານຈຸດດຽວທີ່ດ່ານຊາຍແດນ (SWI & SSI) ສະຫວັນນະເຂດ-ມຸກດາຫານ | 2018 | ກະຊວງ ໂຍທາທິການ ແລະ ຂົນສົ່ງ (ກົມຂົນສົ່ງ) ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |
| | 18 | ສ້າງນິຕິກຳລຸ່ມກົດໝາຍ ເພື່ອຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທຸລະກຳເອເລັກໂຕຣນິກ | 2018 | ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |
| | 19 | ຈັດຕັ້ງປະຕິບັດ ລະບົບແຈ້ງພາສີປະຕູດຽວອາຊຽນ | 2018 | ກົມພາສີ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |
| **ການຮ່ວມມືປະສານງານ ກັບພາກທຸລະກິດ** | 20 | ຈັດກອງປະຊຸມປົກກະຕິກັບຄູ່ຮ່ວມມືພາກທຸລະກິດ, ລວມທັງ ສຄອ, ຢ່າງໜ້ອຍ ທຸກໄຕມາດ | 2017-22 | ກຂອຄ |
| | 21 | ຈັດກອງປະຊຸມວິຊາການ ແລະ ການຝຶກອົບຮົມ ເພື່ອສ້າງຂີດຄວາມສາມາດ ກ່ຽວກັບ ວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ ສຳລັບພາກທຸລະກິດໃນນະຄອນຫຼວງ ແລະ ແຂວງຕ່າງໆ. | 2017-22 | ກຂອຄ |
| | 22 | ເປີດກ້ວາງປຶກສາຫາລື ເປັນປະຈຳ ເພື່ອໃຫ້ພາກທຸລະກິດມີສ່ວນຮ່ວມໃນການປະກອບຄຳຄິດຄຳເຫັນ ຕໍ່ກັບການຈັດຕັ້ງປະຕິບັດບັນດາມາດຕະການພາຍໃຕ້ແຜນດຳເນີນງານວຽກງານ ອຄ | 2017-22 | ທຸກຂະແໜງການທີ່ກ່ຽວຂ້ອງ |
| **ການຈັດຕັ້ງປະຕິບັດ ສັນຍາອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ ຢ່າງເຕັມສ່ວນ** | 23 | ສຳເລັດການປະເມີນ ການຈັດຕັ້ງປະຕິບັດ ແລະ ຈັດໝວດບັນດາມາດຕະການໃນ ໝວດ B ແລະ C | 2017 | ກຂອ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |
| | 24 | ຢັ້ງຢືນ ແລະ ຮັບຮອງບັນດາມາດຕະການໃນໝວດ B ແລະ C ແລະ ແຈ້ງໃຫ້ອົງການການຄ້າໂລກ | ກຸມພາ 2018 | ທຸກຂະແໜງການທີ່ກ່ຽວຂ້ອງ |
| | 25 | ເລີ່ມຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ A ຢ່າງເຕັມສ່ວນ | ກຸມພາ 2018 | ທຸກຂະແໜງການທີ່ກ່ຽວຂ້ອງ |
| | 26 | ກຳນົດເວລາເບື້ອງຕົ້ນໃນການຈັດຕັ້ງປະຕິບັດໝວດ B ແລະ C | 2018 | ກຂອ ໂດຍປຶກສາຫາລືກັບທຸກຂະແໜງການທີ່ກ່ຽວຂ້ອງ |
| | 27 | ສ້າງແຜນດຳເນີນງານ ເພື່ອກຳນົດຄວາມຕ້ອງການການຊ່ວຍເຫຼືອອັນຈຳເປັນດ້ານເຕັກນິກ ແລະ ການສ້າງຂີດຄວາມສາມາດ ເພື່ອຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ C | 2018 | ກຂອ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |
| | 28 | ກະກຽມບົດສະເໜີ ແລະ ການປຶກສາຫາລືກັບ ບັນດາຄູ່ຮ່ວມພັດທະນາ ເພື່ອຊອກຫາການສະໜັບສະໜູນ ທາງດ້ານເຕັກນິກ | 2018 | ກຂອ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |

| | | | | |
|---|---|---|---|---|
| | | ແລະ ການສ້າງຂີດຄວາມສາມາດ ເພື່ອຈັດຕັ້ງປະຕິບັດບັນດາມາດຕະການໃນ ໝວດ C | | |
| | 29 | ແຈ້ງອົງການການຄ້າໂລກ ກ່ຽວກັບ ການຕົກລົງດ້ານການຊ່ວຍເຫຼືອທາງດ້ານເຕັກນິກ ແລະ ການສ້າງຂີດຄວາມສາມາດເພື່ອຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ C ກັບບັນດາຄູ່ຮ່ວມພັດທະນາ | 2018 | ກຂອ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ |
| | 30 | ຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ B ຢ່າງເຕັມສ່ວນ ໂດຍການຢັ້ງຢືນຮັບຮອງການຈັດຕັ້ງປະຕິບັດຈາກຂະແໜງການທີ່ກ່ຽວຂ້ອງ | ເວລາຈະກຳນົດພາຍຫຼັງປຶກສາຫາລືກັບຂະແໜງການກ່ຽວຂ້ອງ | ທຸກຂະແໜງການທີ່ກ່ຽວຂ້ອງ |
| | 31 | ຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ C ຢ່າງເຕັມສ່ວນ ໂດຍການຢັ້ງຢືນຮັບຮອງການຈັດຕັ້ງປະຕິບັດຈາກຂະແໜງການທີ່ກ່ຽວຂ້ອງ | 2022 | ທຸກຂະແໜງການທີ່ກ່ຽວຂ້ອງ |
| **ການປະເມີນຜົນ ແລະ ການສ້າງແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າສຳລັບໄລຍະ ຕໍ່ໄປ** | 32 | ປະເມີນຜົນການຈັດຕັ້ງປະຕິບັດແຜນດຳເນີນງານວຽກ ອຄ ໄລຍະກາງ | ມິຖຸນາ 2020 | ກຂອ ໂດຍປຶກສາຫາລືກັບທຸກຂະແໜງການທີ່ກ່ຽວຂ້ອງ |
| | 33 | ກອງປະຊຸມປຶກສາຫາລື ປຶກລາຍງານຜົນການປະເມີນແຜນດຳເນີນງານວຽກ ອຄ ໄລຍະກາງ | ກໍລະກົດ 2020 | ທຸກຂະແໜງການທີ່ກ່ຽວຂ້ອງ |
| | 34 | ປະເມີນຜົນການຈັດຕັ້ງປະຕິບັດແຜນດຳເນີນງານວຽກ ອຄ ໄລຍະສຸດທ້າຍ | ມີນາ 2022 | ກຂອ ໂດຍປຶກສາຫາລືກັບທຸກຂະແໜງການທີ່ກ່ຽວຂ້ອງ |
| | 35 | ກະກຽມ ແລະ ຮັບຮອງແຜນດຳເນີນງານວຽກງານ ອຄ ສຳລັບໄລຍະຕໍ່ໄປ | 2022 | ກຂອ ໂດຍປຶກສາຫາລືກັບທຸກຂະແໜງການທີ່ກ່ຽວຂ້ອງ |

# IX. ການຕິດຕາມກວດກາ ການຈັດຕັ້ງປະຕິບັດ

ປັດໄຈທີ່ສຳຄັນໃນການເຮັດໃຫ້ແຜນດຳເນີນງານໃດໜຶ່ງສຳເລັດ ແມ່ນຕ້ອງມີລະບົບການຕິດຕາມກວດກາ, ລາຍງານ ແລະ ປະເມີນຜົນຢ່າງໃກ້ຊິດ ເພື່ອໃຫ້ສາມາດຕິດຕາມຄວາມຄືບໜ້າຂອງແຜນງານ, ມີການປັບປຸງ ແລະ ແກ້ໄຂບັນຫາຖ້າຫາກມີຄວາມຈຳເປັນ. ພ້ອມນັ້ນ, ເພື່ອເຮັດໃຫ້ການປະເມີນຜົນການຈັດຕັ້ງປະຕິບັດແຜນດຳເນີນງານປະກົດຜົນເປັນຈິງ ບັນດາຕົວຊີ້ວັດທີ່ຄັດເລືອກມານຳໃຊ້ຕ້ອງມີຄວາມໜ້າເຊື່ອຖື ແລະ ສາມາດວັດແທກຜົນສຳເລັດໄດ້ຢ່າງມີປະສິດທິພາບ. ຕົວຊີ້ວັດທີ່ຈະນຳໃຊ້ເຂົ້າໃນການວັດແທກຜົນສຳເລັດໃນການຈັດຕັ້ງປະຕິບັດແຜນດຳເນີນງານ ອຄ ນີ້ ແມ່ນເປັນຕົວຊີ້ວັດທີ່ຖືກນຳໃຊ້ໃນສາກົນ ເພື່ອວັດແທກວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ພ້ອມທັງກຳນົດກົນໄກຕິດຕາມກວດກາ, ລາຍງານ ແລະ ປະເມີນຜົນ.

## 9.1 ການຕິດຕາມກວດກາ

ຫຼາຍຕົວຊີ້ວັດແມ່ນຖືກນຳໃຊ້ຢ່າງກວ້າງຂວາງໂດຍອີງການສາກົນ ເພື່ອຕິດຕາມຄວາມຄືບໜ້າຂອງວຽກງານ ອຄ ແລະ ຊີ້ໃຫ້ເຫັນຊ່ອງວ່າງ ໃຫ້ບັນດາປະເທດຕ່າງໆສາມາດແກ້ໄຂບັນຫາເຫຼົ່ານັ້ນ. ບາງຕົວຊີ້ວັດທີ່ພົ້ນເດັ່ນທີ່ນຳໃຊ້ຢ່າງກ້ວາງຂວາງ ເພື່ອວັດແທກຜົນກະທົບຂອງການປັບປຸງວຽກງານ ອຄ ແມ່ນຕົວຊີ້ວັດ "ການຄ້າຂ້າມແດນລະຫວ່າງປະເທດ" (Trading Across Borders: TAB) ຊຶ່ງໄດ້ຖືກນຳໃຊ້ໃນບົດສຶກສາຄວາມງ່າຍດ່າຍໃນການດຳເນີນທຸລະກິດ (Ease of Doing Business: EDB) ຂອງທະນາຄານໂລກ ແລະ ອີກຕົວຊີ້ວັດໜຶ່ງທີ່ຈະນຳໃຊ້ເຂົ້າໃນການວັດແທກ ແມ່ນຕົວຊີ້ວັດດ້ານການອຳນວຍຄວາມສະດວກທາງດ້ານການຄ້າ (Trade Facilitation Indicator: TFI) ຂອງອົງການດ້ານການຮ່ວມມື ແລະ ການພັດທະນາທາງດ້ານເສດຖະກິດ (Organization for Ecomomic Coorperation & Development: OECD). ແຜນດຳເນີນງານວຽກງານ ອຄ ປີ 2017-2022 ສະບັບນີ້ຈະນຳໃຊ້ 2 ຕົວຊີ້ວັດທີ່ກ່າວມາຂ້າງເທິງນັ້ນເຂົ້າໃນການວັດແທກຜົນການຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າຂອງປະເທດ. ແຜນດຳເນີນງານດັ່ງກ່າວ ຍັງຈະໄດ້ເຊື່ອມໂຍງບັນດາຕົວຊີ້ວັດການອຳນວຍຄວາມສະດວກທາງດ້ານການຄ້າທີ່ກຳລັງສ້າງ ໂດຍອາຊຽນເຂົ້າໃນການຕິດຕາມກວດກາພາຍຫຼັງທີ່ໄດ້ມີການຮັບຮອງເອົາໂດຍບັນດາປະເທດສາມະຊິກອາຊຽນ[25]. ບັນດາຕົວຊີ້ວັດສະເພາະການວັດແທກຄວາມຄືບໜ້າການຈັດຕັ້ງປະຕິບັດແຜນດຳເນີນງານ ມີດັ່ງລຸ່ມນີ້[26]:

### ກ. ຕົວຊີ້ວັດການຄ້າຂ້າມແດນ (TAB) ພາຍໃຕ້ບົດລາຍງານຄວາມງ່າຍໃນການດຳເນີນທຸລະກິດ (EDB)

ຕົວຊີ້ວັດການຄ້າຂ້າມແດນທີ່ກ່ຽວຂ້ອງ ລວມທັງເວລາ ແລະ ຄ່າໃຊ້ຈ່າຍ ສຳລັບ (1) ການປະກອບເອກະສານ ແລະ (2) ການປະຕິບັດລະບຽບການການນຳເຂົ້າ ແລະ ສົ່ງອອກ ຢູ່ດ່ານຊາຍແດນ ທີ່ປະກອບເປັນຕົວຊີ້ວັດສຳລັບການປະເມີນຜົນການຈັດຕັ້ງມາດຕະການ ອຄ ໃນແຜນດຳເນີນງານວຽກງານ ອຄ ຊຶ່ງໄດ້ຖືກນຳໃຊ້ໃນບົດສຶກສາຄວາມງ່າຍດ່າຍໃນການດຳເນີນທຸລະກິດ (Ease of Doing Business: EDB) ຂອງທະນາຄານໂລກ ໃນແຕ່ລະປີ. ການກວດກາດັ່ງກ່າວຈະອີງໃສ່ຜົນຂອງຕົວຊີ້ວັດເຊັ່ນ: ເວລາ ແລະ ຄ່າໃຊ້ຈ່າຍຂອງການນຳເຂົ້າ ແລະ ສົ່ງອອກ ຕາມຜົນການສຶກສາຈາກ "ບົດສຶກສາຄວາມງ່າຍດາຍໃນການດຳເນີນທຸລະກິດ" ທຸກໆປີ. ຂໍ້ມູນໃນບົດສຶກສາປີ 2016[27] ຈະນຳເອົາມາເປັນຂໍ້ມູນພື້ນຖານໃນການລິເລີ່ມການວັດແທກການຈັດຕັ້ງປະຕິບັດແຜນດຳເນີນງານວຽກ ອຄ. ນອກຈາກນັ້ນ, ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງດ້ານການຄ້າຈະສາມາດກຳນົດໄດ້ໂດຍກົງ ຈາກຜົນກະທົບຂອງມາດຕະການດັ່ງກ່າວ ຕໍ່ກັບເວລາທີ່ໃຊ້ໃນການກວດປ່ອຍສິນຄ້າຜ່ານລະບົບບັນທຶກອາຊິກູດາ (ASYCUDA) ເຂົ້າໃນບົດລາຍງານຄວາມຄືບໜ້າປະຈຳໄຕມາດ ເພື່ອການຕິດຕາມຢ່າງເປັນປົກກະຕິ.

[25] ອາຊຽນ ກຳລັງຢູ່ໃນຂັ້ນຕອນການສ້າງຕົວຊີ້ວັດສຳລັບການປະເມີນຄວາມຄືບໜ້າຂອງວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ພາຍໃນປະເທດສະມາຊິກອາຊຽນ. ບັນດາຕົວຊີ້ວັດເຫຼົ່ານີ້ມີຊື່ວ່າ Seamless Trade Facilitation indicators (STFIs) ແລະ ບໍ່ທັນໄດ້ຖືກຮັບຮອງ.

[26] ລາຍລະອຽດຕົວຊີ້ວັດໃນເອກະສານຊ້ອນທ້າຍ IV

[27] ບົດລາຍງານປະຈຳປີ 2017, ແຕ່ເຜີຍແຜ່ ເດືອນ ຕຸລາ 2016.

**ຂ. ຕົວຊີ້ວັດການອຳນວຍຄວາມສະດວກທາງດ້ານການຄ້າຂອງ ອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ**

ອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ (OECD) ໄດ້ສ້າງຕົວຊີ້ວັດການອຳນວຍຄວາມສະດວກທາງດ້ານການຄ້າຂຶ້ນມາສະເພາະ ເພື່ອວັດແທກການຈັດຕັ້ງປະຕິບັດກິດຈະກຳຂອງວຽກງານອຳນວຍຄວາມສະດວກທາງດ້ານການຄ້າ. ຕົວຊີ້ວັດດັ່ງກ່າວ ຈະຖືກນຳໃຊ້ເຂົ້າໃນການຕິດຕາມກວດກາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດມາດຕະການຕ່າງໆ ໃນພາກທີ I ຂອງສັນຍາການອຳນວຍຄວາມສະດວກທາງດ້ານການຄ້າໃນທຸກໆ 02 ປີ ບົນພື້ນຖານຂໍ້ມູນທີ່ມີທົ່ວໄປ ແລະ ຂໍ້ມູນທີ່ສາມາດເກັບກຳໄດ້ໃນແບບສອບຖາມຈາກພາກລັດ ແລະ ທຸລະກິດ ແລະ ຜົນຂອງກອງປະຊຸມຂອງອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ ແລະ ອົງການການຄ້າໂລກ. ການຕິດຕາມກວດກາແມ່ນຈະດຳເນີນໃນຮູບແບບການເລືອກຄຳຕອບຂອງແຕ່ລະມາດຕະການ ຊຶ່ງມີຄວາມສະດວກໃນການຕິດຕາມກວດກາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນດຳ ເນີນງານໃນແຕ່ລະໄລຍະ. ເຄື່ອງມືການວັດແທກທີ່ນຳໃຊ້ໃນເວັບໄຊ້ ທີ່ເປັນຕົວຊີ້ວັດການອຳນວຍຄວາມສະດວກທາງດ້ານການຄ້າ (OECD's web based interactive TFI simulators) ເປັນເຄື່ອງມືທີ່ດີເລີດໃນການວິເຄາະນະໂຍບາຍອຳນວຍຄວາມສະດວກທາງດ້ານການຄ້າ ສຳລັບມາດຕະການທີ່ເປັນບູລິມາສິດ. ອີງຕາມການສຳຫຼວດລ້າສຸດ, ຄະແນນຂອງຕົວຊີ້ວັດການອຳນວຍຄວາມສະດວກທາງດ້ານການຄ້າຂອງອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາຈະເປັນຂໍ້ມູນພື້ນຖານສຳລັບການປຽບທຽບ ແລະ ການຕິດຕາມກວດກາຄວາມຄືບໜ້າການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ ປີ 2017-2022 ສະບັບນີ້. ນອກນັ້ນ, ຍັງຈະໄດ້ນຳໃຊ້ເຂົ້າໃນການປຽບທຽບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດສັນຍາ ອຄ ໃນຂອບອົງການການຄ້າໂລກ ໃນພາກພື້ນອີກດ້ວຍ. ບົດສຶກສາຕົວຊີ້ວັດ TFI ປຽບທຽບກັບບັນດາປະເທດໃນພາກພື້ນຊີ້ໃຫ້ເຫັນວ່າ ສປປ ລາວ ໄດ້ຄະແນນພຽງແຕ່ 7.436 ເມື່ອປຽບທຽບກັບປະເທດໄທ 17.757, ຫວຽດນາມ 14.392 ແລະ ອິນໂດເນເຊຍ 14.31 ບົນພື້ນຖານການຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ຂອງປະເທດດັ່ງກ່າວ. ບົດສຶກສາດັ່ງກ່າວ ຍັງສະແດງໃຫ້ເຫັນວ່າ ສປປ ລາວ ຕ້ອງໄດ້ເພີ່ມທະວີຄວາມພະຍາຍາມ ເພື່ອບັນລຸໃນລະດັບດຽວກັນກັບປະເທດຕ່າງໆໃນພາກພື້ນ[28]. ດັ່ງນັ້ນ, ຕົວຊີ້ວັດການອຳນວຍຄວາມສະດວກທາງດ້ານການຄ້າ ຂອງອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ ຈຶ່ງເປັນເຄື່ອງມືທີ່ເໝາະສົມທີ່ສຸດໃນການຕິດຕາມການຈັດຕັ້ງປະຕິບັດບັນດາກິດຈະກຳຂອງວຽກງານອຳນວຍຄວາມສະດວກທາງດ້ານການຄ້າ. ຕົວຊີ້ວັດການອຳນວຍຄວາມສະດວກທາງດ້ານການຄ້າ ແມ່ນແນໃສ່ວັດແທກການຈັດຕັ້ງປະຕິບັດບັນດາມາດຕະການທີ່ກຳນົດໃນ ສັນຍາ ອຄ ແລະ ຈະສາມາດຕິດຕາມການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ ໄດ້ຢ່າງມີປະສິດທິຜົນ. ຫ້ອງການ ກຂອຄ ຈະເກັບກຳຂໍ້ມູນທີ່ຈຳເປັນສຳລັບການປະເມີນໂດຍນຳໃຊ້ຕົວຊີ້ວັດການອຳນວຍຄວາມສະດວກທາງດ້ານການຄ້າຈາກຂະແໜງການທີ່ກ່ຽວຂ້ອງ ຜ່ານບົດລາຍງານປະຈຳໄຕມາດ ແລະ ປ້ອນຂໍ້ມູນດັ່ງກ່າວເຂົ້າໃນລະບົບຈຳລອງຂອງອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ ເພື່ອຄິດໄລ່ຄະແນນລວມຂອງປະເທດ, ຊຶ່ງຈະສະແດງໃຫ້ເຫັນພາບລວມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ.

### 9.2 ການລາຍງານ

ນອກຈາກ ບັນດາຕົວຊີ້ວັດພາຍນອກທີ່ກ່າວມາຂ້າງເທິງນັ້ນ ຕ້ອງມີການສ້າງບົດລາຍງານ ຢ່າງຕ່ຳໜຶ່ງຄັ້ງຕໍ່ປີ. ບົດລາຍງານປະຈຳໄຕມາດຈາກບັນດາຂະແໜງການກ່ຽວຂ້ອງ ແມ່ນຈຳເປັນມີໄວ້ເພື່ອການຕິດຕາມກວດກາພາຍໃນ ຢ່າງເປັນປົກກະຕິ. ສະນັ້ນ, ກົມການນຳເຂົ້າ ແລະ ສົ່ງອອກ ໃນນາມເປັນຫ້ອງການ ກຂອຄ ຈະກຳນົດຮູບແບບ ແລະ ວິທີການລາຍງານປະຈຳໄຕມາດ ກ່ຽວກັບ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ ໃຫ້ແຕ່ລະຂະແໜງການທີ່ກ່ຽວຂ້ອງ ແລະ ຈຸດປະສານງານໃນການຮັບຜິດຊອບເກັບກຳຂໍ້ມູນ ເພື່ອລວບລວມເປັນບົດລາຍງານປະຈຳໄຕມາດໃຫ້ ກຂອຄ. ຮູບແບບຂອງບົດລາຍງານດັ່ງກ່າວຈະອີງໃສ່ຂໍ້ມູນພື້ນຖານຂອງຕົວຊີ້ວັດ (Key Performance Indicators: KPIs) ທີ່ຄັດເລືອກໄວ້ຂ້າງເທິງສຳລັບ ການຕິດຕາມກວດກາແຜນດຳເນີນງານວຽກງານ ອຄ. ພ້ອມດຽວກັນ, ບົດລາຍງານດັ່ງກ່າວ ກໍ່ຈະນຳໃຊ້ຂໍ້ມູນທີ່ຕິດພັນກັບເວລາການປ່ອຍສິນຄ້າ (Time Release Study: TRS) ຈາກລະບົບ ASYCUDA ເພື່ອປະເມີນຜົນການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ ກ່ຽວກັບ ເວລາໃນການກວດປ່ອຍສິນຄ້າ.

ພ້ອມນັ້ນ, ຫ້ອງການ ກຂອຄ ຈະຮັບຜິດຊອບໃນການລາຍງານບັນຫາຕ່າງໆ ກ່ຽວກັບ ຄວາມລ່າຊ້າ ຫຼື ການເລື່ອນເວລາຈັດຕັ້ງປະຕິບັດທີ່ກຳນົດໄວ້ໃນແຜນດຳເນີນງານວຽກງານ ອຄ ທັງນີ້ກໍ່ເພື່ອສ້າງຄວາມໂປ່ງໃສ ແລະ ຮັບຮູ້ໃຫ້ກວ້າງຂວາງຫຼາຍຂຶ້ນ. ສຳ

[28] OECD's TFI Simulator; http://sim.oecd.org/Simulator.ashx?lang=En&ds=TFI&d1c=lmi_a&d2c=lao&mc=12:1

ເນື້ອຂອງບົດລາຍງານປະຈຳໄຕມາດເຫຼົ່ານີ້ ຕ້ອງໄດ້ສົ່ງໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ພາກທຸລະກິດ ລວມທັງອັບໂຫຼດໄວ້ໃນເວັບໄຊ້ຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ເພື່ອເປັນການອ້າງອີງ ກ່ຽວກັບ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

### 9.3 ການປະເມີນຜົນ

ການທົບທວນ ແລະ ປະເມີນຜົນແຜນດຳເນີນງານວຽກງານ ອຄ ໃນໄລຍະກາງ ຕ້ອງໃຫ້ສຳເລັດພາຍໃນກາງປີ 2020 ເພື່ອຕີລາຄາຄືນຜົນການຈັດຕັ້ງປະຕິບັດແຜນດຳເນີນງານດັ່ງກ່າວ ແລະ ຖ້າມີຄວາມຈຳເປັນກໍ່ຕ້ອງມີການປັບປຸງໜ້າວຽກ ແລະ ເວລາໃນການຈັດຕັ້ງປະຕິບັດບັນດາກິດຈະກຳ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ.

ການປະເມີນຜົນໃນໄລຍະສຸດທ້າຍຂອງແຜນດຳເນີນງານສະບັບນີ້ ຕ້ອງໃຫ້ສຳເລັດພາຍໃນກາງປີ 2022 ເພື່ອໃຫ້ມີເວລາພຽງພໍສຳລັບການກະກຽມ ແລະ ການອະນຸມັດແຜນຍຸດທະສາດສະບັບໃໝ່ຈາກປີ 2023 ເປັນຕົ້ນໄປ. ການປະເມີນແຜນດຳເນີນງານນີ້ຈະນຳໃຊ້ຕົວຊີ້ວັດຕ່າງໆທີ່ລະບຸໄວ້ຂ້າງເທິງ ທັງວິທີການຈັດຕັ້ງປະຕິບັດ ແລະ ຜົນທີ່ໄດ້ຮັບຕ່າງໆ ເພື່ອວັດແທກຜົນສຳເລັດຂອງແຜນດັ່ງກ່າວ. ສະນັ້ນ, ການທົບທວນ ແລະ ການປະເມີນຜົນໄລຍະກາງ ແລະ ໄລຍະສຸດທ້າຍ ຈະຕ້ອງຈັດຕັ້ງປະຕິບັດຕາມການກຳນົດເວລາ ແລະ ມີການປະສານງານຢ່າງໃກ້ຊິດກັບ ຈຸດປະສານງານ ແລະ ບັນດາສະມາຊິກ ກຂອຄ ແລະ ຜູ້ມີສ່ວນຮ່ວມອື່ນໆ.

## X. ກົນໄກການຈັດຕັ້ງປະຕິບັດແຜນດໍາເນີນງານວຽກງານອໍານວຍຄວາມສະດວກທາງດ້ານການຄ້າ

ກຂອຄ ຖືກສ້າງຕັ້ງຂຶ້ນໃນເດືອນຕຸລາ 2010 ຕາມແຜນຍຸດທະສາດ ອຄ ປີ 2011-2015 ຊຶ່ງແມ່ນ ທ່ານ ລັດຖະມົນຕີ ກະຊວງ ອຸດສາຫະກໍາ ແລະ ການຄ້າ ເປັນປະທານ ແລະ ມີບັນດາສະມາຊິກຈາກພາກລັດ ແລະ ເອກະຊົນ ໃນຕໍາແໜ່ງລະດັບຄະນະກົມຈາກຂະແໜງການທີ່ປົ່ນອ້ອມວຽກງານ ອຄ ແລະ ເລຂາທິການສະພາການຄ້າ ແລະ ອຸດສະຫາກໍາແຫ່ງຊາດ ແລະ ມີຫ້ອງການກອງເລຂາ ຂອງ ກຂອຄ ປະຈໍາຢູ່ກົມການນໍາເຂົ້າ ແລະ ສົ່ງອອກ. ກຂອຄ ດັ່ງກ່າວມີພາລະບົດບາດຮັບຜິດຊອບໃນການຂັບເຄື່ອນວຽກງານອໍານວຍຄວາມສະດວກທາງດ້ານການຄ້າ ແລະ ແຜນຍຸດທະສາດ ອຄ ປີ 2011-2015 ຊຶ່ງໃນໄລຍະຜ່ານມາ ແລະ ກຂອຄ ກໍ່ໄດ້ປະຕິບັດສໍາເລັດຫຼາຍໜ້າວຽກ. ສະນັ້ນ, ແຜນດໍາເນີນງານວຽກງານ ອຄ ປີ 2017-2022 ຈະນໍາໃຊ້ກົນໄກຂອງ ກຂອຄ ທີ່ມີຢູ່ໃນປະຈຸບັນ ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດແຜນດໍາເນີນງານດັ່ງກ່າວ ແລະ ຈະສືບຕໍ່ຮັບຜິດຊອບຂັບເຄື່ອນວຽກງານອໍານວຍຄວາມສະດວກທາງດ້ານການຄ້າອື່ນໆ.

ປະຈຸບັນ, ກໍາລັງຢູ່ໃນຂັ້ນຕອນພິຈາລະນາສະເໜີການສ້າງຕັ້ງກົນໄກໃໝ່ໃນການຈັດຕັ້ງປະຕິບັດວຽກງານ ອຄ ເພື່ອໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ. ກົນໄກດັ່ງກ່າວຄາດວ່າຈະ ລວມມີການສ້າງຕັ້ງຄະນະກໍາມະການແຫ່ງຊາດ ວ່າດ້ວຍການພັດທະນາການຄ້າ ແລະ ພາກທຸລະກິດ ຊຶ່ງກົນໄກ ກຂອຄ ປະຈຸບັນ ໄດ້ຖືກນໍາສະເໜີປ່ຽນຊື່ເປັນອະນຸກໍາມະການອໍານວຍຄວາມສະດວກທາງດ້ານການຄ້າແຫ່ງຊາດ ໂດຍມີ ທ່ານ ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນປະທານ ແລະ ປະກອບມີບັນດາສະມາຊິກຈາກພາກລັດຕໍາແໜ່ງລະດັບຄະນະກົມ ຈາກພາກສ່ວນທີ່ປົ່ນອ້ອມວຽກງານ ອຄ ແລະ ຜູ້ຕາງໜ້າຈາກພາກທຸລະກິດ ເຊັ່ນ: ກົມການນໍາເຂົ້າ ແລະ ສົ່ງອອກ, ກົມພາສີ, ກົມຂົນສົ່ງ ແລະ ກົມປູກຝັງ (ຂະແໜງກັກກັນພືດ ແລະ ສັດ) ເປັນຮອງປະທານ ແລະ ບັນດາຄະນະກົມອື່ນໆທີ່ກ່ຽວຂ້ອງ ເປັນສະມາຊິກ. ກົມການນໍາເຂົ້າ ແລະ ສົ່ງອອກ ຈະເປັນຫ້ອງການກອງເລຂາຂອງຄະນະກໍາມະການ ເພື່ອສືບຕໍ່ປະສານງານກັບທຸກຂະແໜງການທີ່ກ່ຽວຂ້ອງ, ສັງລວມຂໍ້ມູນ ແລະ ລາຍງານສະພາບການຕ່າງໆ.

ຄະນະກໍາມະການ ວ່າດ້ວຍ ການພັດທະນາການຄ້າ ແລະ ພາກທຸລະກິດ ແລະ ອະນຸກໍາມະການ ອຄ ຈະມີການປະຊຸມພົບປະກັນທຸກໆ 6 ເດືອນ ເພື່ອທົບທວນການຈັດຕັ້ງປະຕິບັດແຜນດໍາເນີນງານວຽກງານ ອຄ. ເຖິງຢ່າງໃດກໍ່ຕາມ ສໍາລັບອະນຸກໍາມະການ ອຄ ຕ້ອງມີການປະຊຸມທຸກໄຕມາດ ເພື່ອການຕິດຕາມກວດກາການຈັດຕັ້ງປະຕິບັດຂອງທຸກພາກສ່ວນທີ່ກ່ຽວຂ້ອງ ຊຶ່ງໄດ້ກໍານົດໄວ້ໃນແຜນດໍາເນີນງານວຽກງານ ອຄ.

ໃນໄລຍະຜ່ານມາ ເຫັນວ່າກົນໄກການປະສານງານໃນການຈັດຕັ້ງປະຕິບັດແຜນຍຸດທະສາດ ອຄ ປີ 2011-2015 ນໍາໃຊ້ພຽງແຕ່ບັນດາສະມາຊິກທີ່ຖືກແຕ່ງຕັ້ງເທົ່ານັ້ນ. ແຕ່ບັນດາສະມາຊິກເຫຼົ່ານີ້ແມ່ນຢູ່ໃນລະດັບຕໍາແໜ່ງຂັ້ນຄະນະກົມ ແລະ ບໍ່ມີເວລາພຽງພໍໃນການປະຕິບັດໜ້າວຽກລະອຽດຂອງແຜນຍຸດທະສາດດັ່ງກ່າວໄດ້ຢ່າງເຕັມສ່ວນ. ສະນັ້ນ, ຈາກບົດຮຽນໃນການຈັດຕັ້ງແຜນຍຸດທະສາດ ດັ່ງກ່າວ, ກົນໄກໃໝ່ນີ້ຈຶ່ງມີຄວາມຈໍາເປັນໃນການແຕ່ງຕັ້ງໜ່ວຍງານຈັດຕັ້ງປະຕິບັດແຜນດໍາເນີນງານວຽກງານອໍານວຍຄວາມສະດວກທາງດ້ານການຄ້າເປັນຜູ້ຂັບເຄື່ອນການຈັດຕັ້ງປະຕິບັດວຽກງານ ອຄ ພາຍໃຕ້ການຊີ້ນໍາຂອງກົມຜູ້ທີ່ຖືກມອບໝາຍ ເພື່ອໃຫ້ມີການຕິດຕາມກວດກາການ ຈັດຕັ້ງປະຕິບັດແຜນດໍາເນີນງານວຽກງານ ອຄ ຢ່າງຕໍ່ເນື່ອງ. ໜ່ວຍງານທີ່ຖືກແຕ່ງຕັ້ງນີ້ ອາດຈະປະກອບດ້ວຍວິຊາການ 2-3 ທ່ານ ໃນລະດັບຕໍາແໜ່ງຄະນະພະແນກ ຊຶ່ງຈະລາຍງານໂດຍກົງຫາຄະນະກົມຜູ້ທີ່ຖືກແຕ່ງຕັ້ງເປັນສາມະຊິກ.

ໜ່ວຍງານທີ່ຖືກແຕ່ງຕັ້ງ ຈະຖືກມອບໝາຍໃຫ້ລິເລີ່ມປະຕິບັດກິດຈະກໍາ ແລະ ປະສານງານ ເພື່ອຈັດຕັ້ງປະຕິບັດແຜນດໍາເນີນງານວຽກງານ ອຄ ພາຍໃນຂະແໜງຂອງຕົນ. ໜ່ວຍງານທີ່ຖືກແຕ່ງຕັ້ງດັ່ງກ່າວ ຍັງຕ້ອງກະກຽມແຜນປະຕິບັດງານສະເພາະຕາມຂອບເວລາທີ່ລະບຸໄວ້ໃນແຜນດໍາເນີນງານ ເພື່ອຈັດຕັ້ງປະຕິບັດບັນດາມາດຕະການຕ່າງໆ. ແຜນປະຕິບັດງານຂອງແຕ່ລະຂະແໜງການຕ້ອງໄດ້ຖືກຮັບຮອງຈາກຂະແໜງການຂອງຕົນ ເພື່ອຮັບປະກັນໃຫ້ມີຄວາມສອດຄ່ອງກັບແຜນດໍາເນີນງານວຽກງານ ອຄ ແລະຖືກຂັບເຄື່ອນໃຫ້ບັນລຸເປົ້າໝາຍທີ່ກໍານົດໄວ້. ນອກນັ້ນ, ກຂອຄ ຈະເປັນຜູ້ໃຫ້ ການຊ່ວຍເຫຼືອທາງດ້ານເຕັກນິກທີ່ຈໍາເປັນໃນການກະກຽມແຜນປະຕິບັດງານ ໃນແຕ່ລະຂະແໜງການດັ່ງກ່າວ.

ພ້ອມນັ້ນ, ທຸກຂະແໜງການທີ່ກ່ຽວຂ້ອງ ຄວນມີຈຸດປະສານງານຂັ້ນແຂວງ ເພື່ອຮັບປະກັນວ່າ ແຜນປະຕິບັດງານຢູ່ໃນບັນດາຂະແໜງການຂັ້ນສູນກາງ ສອດຄ່ອງກັບຂັ້ນທ້ອງຖິ່ນ ແລະ ໄປຕາມຂອບເວລາທີ່ລະບຸໄວ້. ຈຸດປະສານງານຂັ້ນແຂວງ/ນະຄອນຫຼວງ

ອາດເປັນຄະນະພະແນກຂອງຂະແໜງການຕົນ. ຈຸດປະສານງານຂັ້ນແຂວງນີ້ ຈະສົ່ງບົດລາຍງານຄວາມຄືບໜ້າຂອງວຽກງານ ອຄ ໃຫ້ ໜ່ວຍງານຈັດຕັ້ງປະຕິບັດແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າຂັ້ນກົມ ທີ່ຖືກແຕ່ງຕັ້ງຂັ້ນສູນກາງທຸກໄຕມາດ ເພື່ອຮວບຮວມ ແລະ ລາຍງານໃຫ້ກົມທີ່ກ່ຽວຂ້ອງຂອງຕົນ ແລະ ຫ້ອງການອະນຸກຳມະການ ອຄ.

ແຜນດຳເນີນງານວຽກ ອຄ ສະເໜີ ສ້າງຕັ້ງກົນໄກການປະສານງານ/ຈຸດປະສານງານຂັ້ນແຂວງ/ນະຄອນຫຼວງ ຊຶ່ງປະກອບມີທັງພາກລັດ ແລະ ພາກທຸລະກິດໃນແຂວງ ໂດຍມີຄະນະນຳຂອງແຂວງ/ນະຄອນຫຼວງ ຫຼື ຄະນະພະແນກອຸດສາຫະກຳ ແລະ ການຄ້າແຂວງ ເປັນຫົວໜ້າກົນໄກດັ່ງກ່າວ ພາຍໃຕ້ການຊີ້ນຳຢ່າງໃກ້ຊິດຈາກຫ້ອງການອະນຸກຳມະການ ອຄ. ສ່ວນງົບປະມານໃນການສະໜັບສະໜູນການຈັດຕັ້ງປະຕິບັດ ແມ່ນມາຈາກທຶນການຊ່ວຍເຫຼືອຂອງລັດຖະບານ, ທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນ.

ເພື່ອໃຫ້ພາກທຸລະກິດມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ສັນຍາ ອຄ ໃນຂອບອົງການການຄ້າໂລກ ສິ່ງສຳຄັນຕ້ອງມີກອງປະຊຸມພົບປະປົກກະຕິ ໂດຍມີພາກທຸລະກິດເຂົ້າຮ່ວມທັງຂັ້ນສູນກາງ ແລະ ຂັ້ນແຂວງ/ນະຄອນຫຼວງ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບບັນດາມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ໂດຍສະເພາະໃນຂັ້ນແຂວງ/ນະຄອນຫຼວງ. ພ້ອມນັ້ນ, ກໍຄວນຈັດໃຫ້ມີກອງປະຊຸມວິຊາການເຊັ່ນດຽວກັນໃນຂັ້ນແຂວງ/ນະຄອນຫຼວງ ເພື່ອໃຫ້ພາກທຸລະກິດເຂົ້າມາມີສ່ວນຮ່ວມໃນວຽກງານນີ້ ຢ່າງເຕັມສ່ວນ. ກອງປະຊຸມແຕ່ລະໄລຍະຂອງກົນໄກການປະສານງານຂອງ ຂັ້ນແຂວງ/ນະຄອນຫຼວງ ຕ້ອງຈັດຂຶ້ນຢ່າງໜ້ອຍທຸກໆ 6 ເດືອນ ໂດຍມີຜູ້ເຂົ້າຮ່ວມທັງໝົດຈາກບັນດາຂະແໜງການກ່ຽວຂ້ອງ ແລະ ພາກທຸລະກິດໃນຂັ້ນແຂວງ/ນະຄອນຫຼວງ ເພື່ອທົບທວນຄືນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງດ້ານການຄ້າໃນໄລຍະຜ່ານມາ ເພື່ອຕິດຕາມເປົ້າໝາຍທີ່ກຳນົດໄວ້ໃນແຜນດຳເນີນງານວຽກງານ ອຄ.

ອະນຸກຳມະການ ອຄ ຄວນເພີ່ມທະວີການປະສານງານກັບກອງປະຊຸມທຸລະກິດລາວ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນດຳເນີນງານ ອຄ ແລະ ກິດຈະກຳໃນກອງປະຊຸມທຸລະກິດລາວ ໄປລວງດຽວກັນ ໂດຍຜ່ານຮູບແບບການຈັດຕັ້ງປະຕິບັດ ແລກປ່ຽນຂໍ້ມູນຂ່າວສານ, ກຳນົດທິດທາງ ແລະ ແກ້ໄຂບັນຫາຮ່ວມກັນຢ່າງມີປະສິດທິພາບ.

***<u>ໝາຍເຫດ:</u> ໃນໄລຍະລໍຖ້າການປັບປຸງ ໂຄງຮ່າງການຈັດຕັ້ງທີ່ຈະປ່ຽນແປງຊື່ຈາກ "ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ" ມາເປັນ "ອະນຸກຳມະການອຳນວຍຄວາມສະດວກທາງດ້ານການຄ້າ" ພາຍໃຕ້ການຊີ້ນຳຂອງ ຄະນະກຳມະການແຫ່ງຊາດເພື່ອການພັດທະນາການຄ້າ ແລະ ພາກທຸລະກິດ ແມ່ນຍັງຈະນຳໃຊ້ "ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ" ເປັນກົນໄກຂັບເຄື່ອນການຈັດຕັ້ງປະຕິບັດແຜນດຳເນີນວຽກງານ ອຄ 2017-2022***

(ຮ່າງ) ໂຄງຮ່າງການຈັດຕັ້ງເພື່ອຈັດຕັ້ງປະຕິບັດວຽກອຳນວຍຄວາມສະດວກທາງດ້ານການຄ້າ



## XI. ງົບປະມານ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ

ຜົນສຳເລັດຂອງແຜນດຳເນີນງານວຽກງານ ອຄ ແມ່ນຂຶ້ນກັບການສະໜັບສະໜູນຢ່າງຕໍ່ເນື່ອງຈາກລັດຖະບານ ຊຶ່ງປະກອບມີຊັບພະຍາກອນ, ອຸປະກອນ ແລະ ພື້ນຖານໂຄງລ່າງທີ່ຈຳເປັນ. ລັດຖະບານຈະຕ້ອງຊ່ວຍສະໜອງ ຫຼື ຈັດຫາແຫຼ່ງທຶນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ແກ່ຫ້ອງການປະຈຳ ອະນຸກຳມະການ ຫຼື ກຂອຄ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ ຢ່າງຕໍ່ເນື່ອງ.

ພ້ອມດຽວກັນ, ກໍ່ຕ້ອງໄດ້ຮັບການຮ່ວມມືຈາກພາກທຸລະກິດຢ່າງເຕັມສ່ວນ ໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດບັນດາມາດຕະການຕ່າງໆ ເພື່ອຮັບປະກັນໄດ້ວ່າພາກທຸລະກິດເອງ ຈະໄດ້ຮັບຜົນປະໂຫຍດ ໃນການຈັດຕັ້ງປະຕິບັດມາດຕະການຕ່າງໆຢ່າງສູງ. ຄຽງຄູ່ກັນນັ້ນ, ກໍ່ຕ້ອງມີຄວາມຈຳເປັນໃນການສ້າງຂີດຄວາມສາມາດໃຫ້ພາກລັດ ແລະ ພາກທຸລະກິດ ເພື່ອໃຫ້ມີຄວາມສາມາດໃນການຈັດຕັ້ງປະຕິບັດມາດຕະການໃນໝວດ C ຂອງສັນຍາ ອຄ ໃນຂອບອົງການການຄ້າໂລກ ຕາມກຳນົດເວລາ. ການຈັດຕັ້ງປະຕິບັດມາດຕະການໃນໝວດ C ທີ່ສະເໜີ ຈຶ່ງຂຶ້ນກັບການສະໜອງທຶນຊ່ວຍເຫຼືອ ແລະ ການສະໜັບສະໜູນທາງດ້ານວິຊາການ ຈາກຄູ່ຮ່ວມພັດທະນາ.

ການຊ່ວຍເຫຼືອ ຈາກກອງທຶນການຊ່ວຍເຫຼືອລ້າຫຼາຍຝ່າຍ ເພື່ອການພັດທະນາ (TDF-2) ແມ່ນສຳຄັນຍິ່ງເພື່ອຈັດຕັ້ງປະຕິບັດວຽກງານການອຳນວຍຄວາມສະດວກທາງດ້ານການຄ້າໃນໄລຍະຕົ້ນຂອງການຈັດຕັ້ງປະຕິບັດ. ສະນັ້ນ, ຄະນະກຳມະການ ອຄ ຫຼື ກຂອຄ ຈະຕ້ອງໄດ້ຂົນຂວາຍຊອກແຫຼ່ງທຶນເພີ່ມຕື່ມ ເພື່ອຈັດຕັ້ງປະຕິບັດແຜນດຳເນີນງານວຽກ ອຄ 5 ປີຂ້າງໜ້າ ລວມທັງການຊອກຫາທຶນຊ່ວຍເຫຼືອໃນການຈັດຕັ້ງປະຕິບັດມາດຕະການໃນໝວດ C. ແຕ່ໃນເບື້ອງຕົ້ນ ງົບປະມານສະໜັບສະໜູນໃນການລິເລີ່ມການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ ປີ 2017-2022 ອາດນຳໃຊ້ກອງທຶນການຊ່ວຍເຫຼືອລ້າຫຼາຍຝ່າຍ ເພື່ອການພັດທະນາທີ່ມີຢູ່ໃນປະຈຸບັນ (TDF-2) ຈົນກວ່າຈະມີການຈັດສັນງົບປະມານໃໝ່ສະເພາະ.

## XII. ສະຫຼຸບ

ແຜນດຳເນີນງານວຽກງານ ອຄ ປີ 2017-2022 ແມ່ນການສືບຕໍ່ການຈັດຕັ້ງປະຕິບັດແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ສະບັບກ່ອນ (2011-2015) ເນື່ອງຈາກ ເປັນການປະຕິບັດຕາມແນວທາງ ແລະ ວັດຖຸປະສົງດຽວກັນ. ເຖິງແມ່ນວ່າ, ແຜນດຳເນີນງານດັ່ງກ່າວນີ້ ຈະສືບຕໍ່ການຈັດຕັ້ງປະຕິບັດແຜນຍຸດທະສາດສະບັບກ່ອນ ແລະ ຈັດຕັ້ງປະຕິບັດມາດຕະການໃນສັນຍາ ອຄ ໃນຂອບອົງການການຄ້າໂລກ ເພື່ອແນໃສ່ເຮັດໃຫ້ຂັ້ນຕອນການຄ້າມີຄວາມສະດວກ ແລະ ວ່ອງໄວ, ແຜນດຳເນີນງານວຽກງານ ອຄ ຍັງໄດ້ສຸມໃສ່ການປັບປຸງກົນໄກການປະສານງານ ເພື່ອໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດມາດຕະການ ອຄ ຢ່າງເປັນເອກະພາບກັນທົ່ວປະເທດ ແລະ ຮັບປະກັນວ່າພາກທຸລະກິດໄດ້ຜົນປະໂຫຍດຈາກຄາດໝາຍທີ່ວາງໄວ້. ການສ້າງຕັ້ງໜ່ວຍງານຈັດຕັ້ງປະຕິບັດແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າໃນແຕ່ລະຂະແໜງການທັງສູນກາງ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ຄາດວ່າຈະຮັບປະກັນວ່າແຜນດຳເນີນງານນີ້ໄດ້ຮັບການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາເພື່ອໃຫ້ແຜນດຳເນີນງານດັ່ງກ່າວສຳເລັດຕາມເວລາ ທີ່ກຳນົດໄວ້.

ແຜນດຳເນີນງານດັ່ງກ່າວ ແມ່ນປະຕິບັດຕາມໄລຍະເວລາ ທີ່ໄດ້ກຳນົດໄວ້ຢ່າງຊັດເຈນໃນການຈັດຕັ້ງປະຕິບັດແຕ່ລະໜ້າວຽກ. ເຖິງຢ່າງໃດກໍ່ຕາມ, ບາງມາດຕະການທີ່ກຳນົດໄວ້ໃນແຜນດຳເນີນງານ ເຊັ່ນ: ການຫຼຸດການກວດກາຕາມເສັ້ນທາງ ແລະ ການຊຳລະສະສາງຈຸດດຽວ ສຳລັບ ຄ່າພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ ໂດຍນຳໃຊ້ບັດສະມາດແທັກ ຈະຖືເປັນບູລິມະສິດ ເພື່ອຫຼຸດຜ່ອນການສໍ້ລາດບັງຫຼວງ ແລະ ຄວາມບໍ່ແນ່ນອນໃນຂັ້ນຕອນທີ່ດ່ານຊາຍແດນ. ການແກ້ໄຂບັນຫາເຫຼົ່ານີ້ໂດຍໄວ ຈະເປັນການຫຼຸດຄ່າໃຊ້ຈ່າຍ/ຕົ້ນທຶນທາງດ້ານການຄ້າ ແລະ ປັບປຸງຄວາມໂປ່ງໃສຂອງຂັ້ນຕອນທີ່ດ່ານຊາຍແດນ ເພື່ອຍົກລະດັບຂອງ ສປປ ລາວ ໃນເວທີສາກົນ ຕໍ່ກັບຕົວຊີ້ວັດວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ.

ເນື່ອງຈາກວ່າ ໂດຍສ່ວນໃຫຍ່ແລ້ວ ຄ່າໃຊ້ຈ່າຍ ແລະ ເວລາ ທີ່ໃຊ້ໃນການປະກອບເອກະສານແມ່ນກ່ຽວຂ້ອງຕໍ່ກັບມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ. ສະນັ້ນ, ແຜນດຳເນີນງານນີ້ຈະເນັ້ນໃສ່ການປະເມີນ ແລະ ທົບທວນຜົນກະທົບຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ເປັນຕົ້ນຕໍ ເພື່ອກ້າວໄປເຖິງການລຶບລ້າງມາດຕະການເຫຼົ່ານັ້ນ ເຮັດໃຫ້ຫຼຸດຜ່ອນຂັ້ນຂອດທີ່ບໍ່ຈຳເປັນ ໂດຍໃຫ້ມີໂຄງສ້າງຄ່າທຳນຽມທີ່ສົມເຫດສົມຜົນ ແລະ ຈະຮັກສາໄວ້ສະເພາະໃນສ່ວນທີ່ຈຳເປັນເທົ່ານັ້ນ.

ແຜນດຳເນີນງານດັ່ງກ່າວ ຍັງຈະເນັ້ນໃສ່ການໃຫ້ການຮ່ວມມືຈາກພາກທຸລະກິດໃນການຈັດຕັ້ງປະຕິບັດ ແລະ ຢັ້ງຢືນຮັບຮອງເອົາບັນດາມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອຮັບປະກັນວ່າພາກທຸລະກິດເອງ ຈະໄດ້ຮັບຜົນປະໂຫຍດໃນການຈັດຕັ້ງປະຕິບັດມາດຕະການຕ່າງໆຢ່າງສູງ. ພ້ອມນັ້ນ, ແຜນດຳເນີນງານນີ້ ຍັງໄດ້ເປີດໂອກາດໃຫ້ພາກທຸລະກິດມີສ່ວນຮ່ວມຫຼາຍຂື້ນໃນການສະເໜີ ແລະ ແກ້ໄຂບັນຫາ ທີ່ຕິດພັນກັບການຈັດຕັ້ງບັນດາມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ເປັນແຕ່ລະໄລຍະ. ການມີສ່ວນຮ່ວມຢ່າງຕັ້ງໜ້າຂອງພາກທຸລະກິດ ຍັງຈະຊ່ວຍໃຫ້ພວກເຂົາໄດ້ຮັບຜົນປະໂຫຍດໃນການຈັດຕັ້ງປະຕິບັດມາດຕະການ ອຄ ອີກດ້ວຍ.

ພ້ອມນັ້ນ, ການປັບປຸງການຮ່ວມມືກັບບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ ໃນການກວດກາຮ່ວມກັນຈຸດດຽວ ແລະ ເຮັດໃຫ້ການຄ້າຜ່ານແດນດຳເນີນໄປຢ່າງສະດວກ ຊຶ່ງຈະຊ່ວຍອຳນວຍຄວາມສະດວກແກ່ການເຄື່ອນຍ້າຍສິນຄ້າຂ້າມແດນ ແລະ ເຮັດໃຫ້ຫຼຸດຕົ້ນທຶນ/ຄ່າໃຊ້ຈ່າຍ ແລະ ເວລາຂອງການກວດປ່ອຍສິນຄ້າ. ການສ້າງຕັ້ງລະບົບແຈ້ງພາສີປະຕູດຽວ ທັງໃນລະດັບຊາດ ແລະ ອາຊຽນ ຊຶ່ງອາດຈະຫຼຸດຜ່ອນການນຳໃຊ້ເອກະສານຕ່າງໆ ແລະ ຈະເປັນສ່ວນໜຶ່ງໃນການຊ່ວຍປະກອບສ່ວນເຂົ້າໃນການຫຼຸດຕົ້ນທຶນ/ຄ່າໃຊ້ຈ່າຍ ແລະ ເວລາ ໃນການນຳເຂົ້າ ແລະ ສົ່ງອອກ.

ສະຫຼຸບແລ້ວ, ການຈັດຕັ້ງປະຕິບັດສັນຍາການອຳນວຍຄວາມສະດວກທາງດ້ານການຄ້າ ຢ່າງເຕັມສ່ວນ ໂດຍມີການເລັ່ງລັດໃຫ້ສຳເລັດກ່ອນກຳນົດເວລາ ພາຍໃຕ້ແຜນດຳເນີນງານນີ້ ຈະເຮັດໃຫ້ ສປປ ລາວ ສາມາດປັບປຸງຄວາມສາມາດໃນການແຂ່ງຂັນທາງດ້ານການຄ້າຂອງປະເທດ ເພື່ອດຶງດູດການລົງທຶນໃຫ້ເພີ່ມຂຶ້ນ ແລະ ຈະເປັນສ່ວນໜຶ່ງໃນການປະກອບສ່ວນເຂົ້າໃນການຫຼຸດພົ້ນອອກຈາກສະຖານະພາບຄວາມເປັນປະເທດດ້ອຍພັດທະນາ ດັ່ງທີ່ໄດ້ວາງເປົ້າໝາຍໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ່ 8 ຂອງ ສປປ ລາວ.

ເອກະສານຊ້ອນທ້າຍ I: ຕາຕະລາງ ສະແດງ ກ່ຽວກັບ ມູນຄ່າການສົ່ງອອກຂອງ ສປປ ລາວ (ໂດລາສະຫະລັດ) ໃນລະຫວ່າງ ປີ 2010-2016

| ສົກປີ | 2010-2011 | 2011-2012 | 2012-2013 | 2013-2014 | 2014-2015 | 2015-2016 |
| --- | --- | --- | --- | --- | --- | --- |
| ການສົ່ງອອກ (ລວມທັງ ໄຟຟ້າ) | 2,027,145,360 | 2,241,996,377 | 3,645,857,415 | 3,433,709,669 | 3,422,276,996 | *4,191,258,528* |
| ການສົ່ງອອກ ສິນຄ້າ | 1,846,853,770 | 1,442,361,388 | 3,052,534,506 | 2,850,285,968 | 2,911,208,704 | 3,250,519,131 |



## ເອກະສານຊ້ອນທ້າຍ II: ສະຫຼຸບຂໍ້ມູນການຄ້າຂ້າມແດນ (ຄວາມງ່າຍດາຍໃນການດຳເນີນທຸລະກິດ) ຂອງ ສປປ ລາວ ປີ 2016







*Source: Doing Business* database.

**ເອກະສານຊ້ອນທ້າຍ III: ສັນຍາການອໍານວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ**

ການໃຫ້ສັດຕະຍາບັນສັນຍາ ອຄ ໃນຂອບອົງການການຄ້າໂລກ ຂອງ ສປປ ລາວ ໃນເດືອນ ກັນຍາ ປີ 2015 ເປັນບາດກ້າວສໍາຄັນດ້ານການຮ່ວມມື ແລະ ການເຊື່ອມໂຍງເສດຖະກິດກັບສາກົນ. ສັນຍາດັ່ງກ່າວ ໄດ້ກໍານົດແຜນງານລະອຽດກ່ຽວກັບ ວຽກງານ ອຄ ແລະ ເປັນພັນທະຂອງປະເທດສະມາຊິກ ເພື່ອດໍາເນີນມາດຕະການສະເພາະດ້ານການອໍານວຍຄວາມສະດວກທາງດ້ານການຄ້າໃນຂອບກໍານົດເວລາ. ເຖິງຢ່າງໃດກໍຕາມ, ອີງຕາມຂໍ້ຈໍາກັດດ້ານຂີດຄວາມສາມາດ ແລະ ຊັບພະຍາກອນ, ກໍານົດເວລາຈັດຕັ້ງປະຕິບັດສັນຍາ ອຄ ໃນຂອບອົງການການຄ້າໂລກ ມີການໂຍະຍານໃຫ້ແກ່ບັນດາປະເທດດ້ອຍພັດທະນາ. ພາກທີ II ຂອງສັນຍາແມ່ນ ກ່ຽວກັບ ການປະຕິບັດທີ່ພິເສດ ແລະ ແຕກຕ່າງ (Special and Difference Treatment) ສໍາລັບປະເທດກໍາລັງພັດທະນາ ແລະ ປະເທດດ້ອຍພັດທະນາ. ບົດບັນຍັດການປະຕິບັດທີ່ພິເສດ ແລະ ແຕກຕ່າງ ສໍາລັບປະເທດດ້ອຍພັດທະນາແມ່ນໃຫ້ສິດທິໜຶ່ງປີເຕັມເພື່ອຈັດຕັ້ງປະຕິບັດມາດຕະການໃນໝວດ A ຈາກມື້ທີ່ສັນຍາມີຜົນບັງຄັບໃຊ້. ພ້ອມນັ້ນ, ກໍ່ຍັງມີໄລຍະຂ້າມຜ່ານເພີ່ມຕື່ມສໍາລັບພັນທະສັນຍາທີ່ເປັນມາດຕະການໃນໝວດ B ແລະ C. ສັນຍາມີຜົນບັງຄັບໃຊ້ໃນວັນທີ 22 ກຸມພາ 2017 ພາຍຫຼັງ 2/3 ຂອງສະມາຊິກອົງການການຄ້າໂລກທັງໝົດໄດ້ໃຫ້ສັດຕະຍາບັນແກ່ສັນຍາດັ່ງກ່າວ.

ສັນຍາດັ່ງກ່າວ ປະກອບມີບົດບັນຍັດເລັ່ງລັດການເຄື່ອນຍ້າຍ, ການປ່ອຍ ແລະ ການແຈ້ງພາສີຂອງສິນຄ້າ, ລວມທັງສິນຄ້າຜ່ານແດນ. ສັນຍາໄດ້ກໍານົດມາດຕະການຕ່າງໆເພື່ອໃຫ້ມີການຮ່ວມມືຢ່າງມີປະສິດທິຜົນລະຫວ່າງຂະແໜງພາສີ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ແລະ ປະຕິບັດໃຫ້ສອດຄ່ອງກັບລະບຽບການພາສີ. ພ້ອມນັ້ນ, ສັນຍານີ້ຍັງມີບົດບັນຍັດ ກ່ຽວກັບ ການໃຫ້ຄວາມຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະ ການສ້າງຂີດຄວາມສາມາດທີ່ຕ້ອງການເພື່ອຈຸດປະສົງດັ່ງກ່າວ. ອີງຕາມບົດລາຍງານຂອງອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ (OECD)[29], ການຈັດຕັ້ງປະຕິບັດສັນຍາຢ່າງເຕັມສ່ວນຈະຊ່ວຍຫຼຸດຜ່ອນຕົ້ນທຶນ/ຄ່າໃຊ້ຈ່າຍໃຫ້ແກ່ ສປປ ລາວ ເຖິງ 19.7%, ຊຶ່ງເປັນການຫຼຸດຜ່ອນຕົ້ນທຶນການຄ້າທີ່ມີທ່າແຮງຫລາຍອັນດັບສອງ ສໍາລັບບັນດາປະເທດສະມາຊິກອາຊຽນ. ບົດລາຍງານໄດ້ຊີ້ໃຫ້ເຫັນວ່າການປະຕິຮູບໂດຍລວມທີ່ເປັນຜົນປະໂຫຍດຢ່າງຫຼວງຫຼາຍດ້ານການຫຼຸດຜ່ອນຕົ້ນທຶນ/ຄ່າໃຊ້ຈ່າຍທາງດ້ານການຄ້າ ແກ່ບັນດາປະເທດສະມາຊິກອາຊຽນ ແມ່ນການຫຼຸດຜ່ອນຂັ້ນຂອດ (3.8%), ລະບົບອັດຕະໂນມັດ (3.2%), ການສ້າງຄວາມງ່າຍດາຍ ແລະ ກົມກຽວທາງດ້ານເອກະສານ (3%), ການມີຂໍ້ມູນ (2.4%), ການຢັ້ງຢືນຮັບຮອງລ່ວງໜ້າ (2.1%) ຄ່າທໍານຽມ ແລະ ຄ່າບໍລິການ (1.1%).

ອີງໃສ່ຂໍ້ຈໍາກັດທາງດ້ານຂີດຄວາມສາມາດ ແລະ ຊັບພະຍາກອນ, ສັນຍາ ອຄ ໄດ້ໃຫ້ຄວາມໂຍະຍານແກ່ບັນດາປະເທດກໍາລັງພັດທະນາ ແລະ ດ້ອຍພັດທະນາ ທາງດ້ານກໍານົດເວລາໃນການຈັດຕັ້ງປະຕິບັດມາດຕະການເຫຼົ່ານີ້. ສັນຍາ ໄດ້ອະນຸຍາດໃຫ້ປະເທດດ້ອຍພັດທະນາ ຈັດໝວດຂອງມາດຕະການ ອຄ ໃນສາມໝວດ ຄື: ໝວດ A, B ແລະ C ໂດຍອີງຕາມຄວາມພ້ອມຂອງປະເທດ ແລະ ຂີດຄວາມສາມາດໃນການຈັດຕັ້ງປະຕິບັດ. ການກໍານົດມາດຕະການເຫຼົ່ານີ້ ພາຍໃຕ້ໝວດທີ່ແຕກຕ່າງກັນນັ້ນແມ່ນອະນຸຍາດໃຫ້ປະເທດເຫຼົ່ານີ້ກໍານົດດ້ວຍຕົວເອງ. ໃນຂະນະທີ່ມາດຕະການພາຍໃຕ້ໝວດ A ແມ່ນຮຽກຮ້ອງໃຫ້ຈັດຕັ້ງປະຕິບັດພາຍໃນໜຶ່ງປີ ພາຍຫຼັງທີ່ສັນຍາມີຜົນບັງຄັບໃຊ້ (21 ກຸມພາ 2018), ເວລາຂ້າມຜ່ານ ແມ່ນມີໃຫ້ສໍາລັບການຈັດຕັ້ງປະຕິບັດມາດຕະການອື່ນໆທີ່ກໍານົດໄວ້ໃນໝວດ B ແລະ C. ໃນນີ້, ກໍານົດຂອບເຂດເວລາສໍາລັບການຈັດຕັ້ງປະຕິບັດມາດຕະການໃນໝວດ B ຕ້ອງໄດ້ແຈ້ງໃຫ້ກັບອົງການການຄ້າໂລກຊາບພາຍໃນໜຶ່ງປີທີ່ສັນຍາມີຜົນບັງຄັບໃຊ້ ຄື 21 ກຸມພາ 2018. ເວລາທີ່ແນ່ນອນໃນການຈັດຕັ້ງປະຕິບັດຕ້ອງໄດ້ຢືນຢັນຕື່ມໃນສອງປີຕໍ່ມາ.

ສໍາລັບມາດຕະການໃນໝວດ C, ປະເທດດ້ອຍພັດທະນາອາດຕ້ອງການການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ຫຼື ການຊ່ວຍເຫຼືອດ້ານການສ້າງຂີດຄວາມສາມາດ. ສັນຍາ ອຄ ໄດ້ໃຫ້ເວລາຫຼາຍກວ່າໃນການການຈັດຕັ້ງປະຕິບັດ. ອີງຕາມບົດບັນຍັດຂອງສັນຍາ ສະມາຊິກທີ່ເປັນປະເທດດ້ອຍພັດທະນາ ຕ້ອງແຈ້ງໃຫ້ອົງການການຄ້າໂລກຊາບ ກ່ຽວກັບ ມາດຕະການ ອຄ ຕ່າງໆທີ່ກໍານົດໄວ້ໃນໝວດ C ພາຍຫຼັງໜຶ່ງປີທີ່ສັນຍາມີຜົນບັງຄັບໃຊ້ ຄື 21 ກຸມພາ 2018 ແລະ ພາຍໃນໜຶ່ງປີຂອງການແຈ້ງ

[29] ບົດສຶກສາ "*ຕົວຊີ້ວັດດ້ານການອໍານວຍຄວາມສະດວກທາງດ້ານການຄ້າຂອງ OECD: ຂັບເຄື່ອນອາຊຽນກ້າວໄປຂ້າງໜ້າ*", OECD(2015).

ດັ່ງກ່າວນີ້ ຕ້ອງໄດ້ແຈ້ງລາຍລະອຽດ ກ່ຽວກັບ ຄວາມຕ້ອງການການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະ ການສ້າງຂີດຄວາມສາມາດ ເພື່ອຈັດຕັ້ງປະຕິບັດມາດຕະການເຫຼົ່ານີ້. ການກຳນົດເວລາທີ່ແນ່ນອນ ສຳລັບການຈັດຕັ້ງປະຕິບັດມາດຕະການໃນໝວດນີ້ ຕ້ອງແຈ້ງໃຫ້ກັບອົງການການຄ້າໂລກ ພາຍໃນສອງປີ ພາຍຫຼັງທີ່ໄດ້ສະເໜີແຜນຂໍການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະ ການສະໜັບສະໜູນທີ່ຈຳເປັນຈາກອົງການການຄ້າໂລກ ແລະ ຄູ່ຮ່ວມມືສາກົນອື່ນໆ. ການກຳນົດເວລານີ້ອາດຂະຫຍາຍຕໍ່ໄດ້ ໂດຍການຮ້ອງຂໍຂອງປະເທດດ້ອຍພັດທະນາ ຖ້າຫາກພົບວ່າມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດມາດຕະການຕ່າງໆໃນໝວດນີ້.

ສປປ ລາວ ໄດ້ແຈ້ງ 13 ມາດຕະການທີ່ຈັດໃນໝວດ A ໃຫ້ກັບອົງການການຄ້າໂລກ ຊຶ່ງກຳນົດເວລາຈັດຕັ້ງປະຕິບັດ ນັບຕັ້ງແຕ່ວັນທີ່ 21 ກຸມພາ 2018. ພ້ອມນັ້ນ, 7 ມາດຕະການໄດ້ຖືກລະບຸໄວ້ໃນໝວດ B ແລະ 16 ມາດຕະການໃນໝວດ C (ລາຍການມາດຕະການພາຍໃຕ້ໝວດຕ່າງໆແມ່ນລະບຸໄວ້ໃນເອກະສານຊ້ອນທ້າຍ-V). ລັດຖະບານຕ້ອງໄດ້ເອົາໃຈໃສ່ ເພື່ອຮັບປະກັນວ່າບັນດາມາດຕະການໃນໝວດ A ໄດ້ຖືກຈັດຕັ້ງປະຕິບັດຢ່າງວ່ອງໄວ ພ້ອມທັງສຸມໃສ່ການຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ B ແລະ C ຊຶ່ງເປັນບັນຫາທີ່ໜ້າເປັນຫວ່ງ ແລະ ຮຽກຮ້ອງໃຫ້ມີຄວາມພະຍາຍາມຫຼາຍຂຶ້ນ.

ບັນດາມາດຕະການໃນໝວດ A ທີ່ ສປປ ລາວ ກຳນົດໄວ້ ແມ່ນບັນດາມາດຕະການ ອຄ ຊຶ່ງຄວນມີຄວາມພ້ອມໃນການບັງຄັບໃຊ້ ແລະ ຄາດວ່າຈະຈັດຕັ້ງປະຕິບັດໃນໄວໆນີ້ ໂດຍບໍ່ມີບັນຫາຫຍຸ້ງຍາກຫຼາຍ. ການທົບທວນຄືນບັນດາມາດຕະການເຫຼົ່ານີ້ ໃນບໍ່ດົນມານີ້ຮ່ວມກັບບັນດາຂະແໜງການກ່ຽວຂ້ອງ ແລະ ສາມາດຮັບຮູ້ໄດ້ວ່າ ຍັງບໍ່ທັນສາມາດຈັດຕັ້ງປະຕິບັດບາງມາດຕະການເຫຼົ່ານີ້ໄດ້ຢ່າງສົມບູນ. ຕົວຢ່າງ: ຂໍ້ມູນຂ່າວສານທາງດ້ານການຄ້າ ຂອງຂະແໜງການກ່ຽວຂ້ອງ ບໍ່ໄດ້ເຜີຍແຜ່ລົງໃນເວັບໄຊ້ ຢ່າງຄົບຖ້ວນ ແລະ ເຮັດໃຫ້ເກີດການປະຕິບັດທີ່ແຕກຕ່າງກັນໃນຂັ້ນທ້ອງຖິ່ນ. ພ້ອມດຽວກັນນັ້ນ, ການກຳນົດຈຸດສອບຖາມຂອງບັນດາຂະແໜງການກ່ຽວຂ້ອງ ແມ່ນສຳເລັດແຕ່ໃນຂັ້ນສູນກາງ, ແຕ່ການເຜີຍແຜ່ຂໍ້ມູນຍັງບໍ່ທັນກວ້າງຂວາງໃນເວັບໄຊ້ ຂອງຂະແໜງການ ແລະ ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ເທື່ອ.

ການຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ B ແມ່ນບູລິມະສິດຕໍ່ມາ ຊຶ່ງອະນຸຍາດໃຫ້ມີການກຳນົດເວລາເພີ່ມຕື່ມໃນການຈັດຕັ້ງປະຕິບັດ. ເຖິງຢ່າງໃດກໍ່ຕາມ, ຕ້ອງໄດ້ແຈ້ງໃຫ້ກັບອົງການການຄ້າໂລກຊາບພາຍໃນວັນທີ່ 21 ກຸມພາ 2018, ມາດຕະການເຫຼົ່ານີ້ຈະຖືກຈັດຕັ້ງປະຕິບັດຕາມຂອບເຂດເວລາທີ່ກຳນົດນັ້ນ. ການກຳນົດຂອບເຂດເວລາການຈັດຕັ້ງປະຕິບັດຈະຂຶ້ນກັບການປະເມີນຕົນເອງທີ່ດຳເນີນ ໂດຍບັນດາຂະແໜງການກ່ຽວຂ້ອງ. ບັນດາຂະແໜງການກ່ຽວຂ້ອງຕ້ອງສຳເລັດການປະເມີນຜົນໂດຍໄວ ແລະ ແຈ້ງຂອບເຂດເວລາໃນການຈັດຕັ້ງປະຕິບັດ ເພື່ອແຈ້ງໃຫ້ກັບອົງການການຄ້າໂລກ.

ການປະເມີນ ຂອງບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອກຳນົດບັນດາມາດຕະການໃນໝວດ C ຕໍ່ກັບຄວາມຕ້ອງການການຊ່ວຍເຫຼືອດ້ານເຕັກນິກວິຊາການ ແລະ ຂີດຄວາມສາມາດໃນການຈັດຕັ້ງປະຕິບັດແມ່ນຍັງບໍ່ທັນໄດ້ດຳເນີນການເທື່ອ. ບາງຂະແໜງການອາດຕ້ອງການອຸປະກອນ, ພື້ນຖານໂຄງລ່າງ, ພະນັກງານ ຫຼື ການສ້າງຂີດຄວາມສາມາດເພີ່ມຕື່ມ. ສິ່ງເຫຼົ່ານີ້ ອາດຕ້ອງການຊັບພະຍາກອນເພີ່ມຕື່ມ ແລະ ການສະໜັບສະໜູນຈາກບັນດາຄູ່ຮ່ວມພັດທະນາ. ສັນຍາ ອຄ ໄດ້ຮັບປະກັນດ້ານການສະໜັບສະໜູນຊ່ວຍເຫລືອທາງດ້ານເຕັກນິກວິຊາການ ແລະ ການພັດທະນາຂີດຄວາມສາມາດທີ່ຕ້ອງການໃຫ້ແກ່ປະເທດດ້ອຍພັດທະນາ ເພື່ອຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ C. ຄວາມຕ້ອງການດັ່ງກ່າວ ຕ້ອງໄດ້ມີການປຶກສາຫາລືກັນຕື່ມກັບບັນດາຄູ່ຮ່ວມພັດທະນາ ເພື່ອຈັດສັນການຊ່ວຍເຫຼືອດັ່ງກ່າວ ແລ້ວແຈ້ງໃຫ້ກັບອົງການການຄ້າໂລກ ພ້ອມກັບການກຳນົດເວລາເບື້ອງຕົ້ນ. ຂອບເຂດເວລາໃນການຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ C ຕ້ອງແຈ້ງໃຫ້ກັບອົງການການຄ້າໂລກ ໜຶ່ງປີ ພາຍຫຼັງທີ່ສັນຍາມີຜົນບັງຄັບໃຊ້. ເຖິງຢ່າງໃດກໍ່ຕາມ, ສັນຍາ ກໍ່ໄດ້ໃຫ້ເວລາອີກໜຶ່ງປີເພື່ອແຈ້ງຂໍ້ມູນ ກ່ຽວກັບ ການສະເໜີຂໍຄວາມຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ. ໃນຄວາມເປັນຈິງແລ້ວ, ການປະເມີນຜົນນີ້ຈະຍັງໄດ້ກຳນົດຕື່ມວ່າທຸກມາດຕະການໃນໝວດ C ທີ່ສາມາດຈັດຕັ້ງປະຕິບັດໄດ້ໂດຍຕົນເອງໂດຍປາສະຈາກການຊ່ວຍເຫຼືອຂອງຜູ້ໃຫ້ທຶນ ຫຼື ຕ້ອງການການຊ່ວຍ ເຫຼືອຈາກຄູ່ຮ່ວມພັດທະນາທາງດ້ານເຕັກນິກວິຊາການ ແລະ ການສ້າງຂີດຄວາມສາມາດ, ສາມາດພິຈາລະນາຍ້າຍໄປໝວດ B. ເຖິງຢ່າງນັ້ນກໍຕາມ, ຂອບເຂດກຳນົດເວລາທີ່ຂະຫຍາຍໃຫ້ ເພື່ອຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ B ແລະ C ຄວນດຳເນີນການໃຫ້ສຳເລັດໂດຍໄວ.

## ເອກະສານຊ້ອນທ້າຍ IV:  ລາຍລະອຽດໂຕຊີ້ວັດການຈັດຕັ້ງປະຕິບັດແຜນດຳເນີນງານວຽກງານ ອຄ

### (ກ) ຕົວຊີ້ວັດການຄ້າຂ້າມແດນ ພາຍໃຕ້ບົດລາຍງານຄວາມງ່າຍດາຍໃນການດຳເນີນທຸລະກິດ

ທະນາຄານໂລກ ໄດ້ດຳເນີນການສຶກສາຄວາມງ່າຍດາຍໃນການດຳເນີນທຸລະກິດທຸກປີ ໂດຍນຳໃຊ້ຕົວຊີ້ວັດທາງດ້ານປະລິມານທີ່ແນ່ນອນຕໍ່ກັບລະບຽບການ ກ່ຽວກັບ ການດຳເນີນທຸລະກິດ ຊຶ່ງສະແດງໃຫ້ເຫັນຜົນກະທົບຈາກມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ຢ່າງຊັດເຈນ ແລະ ໃຫ້ຄຳແນະນຳທີ່ຂ້ອນຂ້າງໜ້າເຊື່ອຖືໃນການວັດແທກຄວາມຄືບໜ້າ ທຽບກັບປະເທດອື່ນໆ. ບົດສຶກສານີ້ປະກອບດ້ວຍຫຼາຍຕົວເລກຊີ້ວັດ ລວມທັງຕົວຊີ້ວັດດ້ານການຄ້າຂ້າມແດນ ຊຶ່ງວັດແທກເວລາ ແລະ ຕົ້ນທຶນ/ຄ່າໃຊ້ຈ່າຍສຳລັບ: (1) ການປະຕິບັດລະບຽບການໃຫ້ສອດຄ່ອງທາງດ້ານເອກະສານ, (2) ການປະຕິບັດໃຫ້ສອດຄ່ອງດ້ານລະບຽບການຂອງດ່ານຊາຍແດນ, ແລະ (3) ການຂົນສົ່ງພາຍໃນປະເທດ. ໃນຂະນະທີ່ການວັດແທກຂັ້ນຕອນການສົ່ງອອກມີການຄຳນວນບົນພື້ນຖານການເກັບກຳຂໍ້ມູນຕົວເລກ ກ່ຽວກັບ ຜະລິດຕະພັນທີ່ໄດ້ປຽບໃນການແຂ່ງຂັນຂອງແຕ່ລະປະເທດ (ສິນຄ້າປະເພດແຮ່ທອງໃນກໍລະນີຂອງ ສປປ ລາວ), ໃນຂະນະທີ່ຂັ້ນຕອນການນຳເຂົ້າແມ່ນ ກ່ຽວກັບ ອາໄຫຼ່ລົດ ຊຶ່ງເປັນຜະລິດຕະພັນທົ່ວໄປໃນການນຳເຂົ້າທົ່ວໂລກ.

ໃນນີ້, ການສຶກສາປຽບທຽບ ໂດຍການຈັດລຳດັບ ແລະ ຄະແນນຂອງປະເທດ ຕາມຕົວເລກຊີ້ວັດການຄ້າຂ້າມແດນ ໄດ້ສະແດງໃຫ້ເຫັນສະພາບແວດລ້ອມດ້ານການຄ້າໃນປະເທດ ແລະ ຂົງເຂດສະເພາະທີ່ມີຄະແນນຕໍ່າ ຊຶ່ງຕ້ອງໄດ້ມີການປັບປຸງ. ອີງຕາມບົດລາຍງານການຄ້າຂ້າມແດນ ຂອງປີ 2016, ການຈັດລຳດັບຂອງ ສປປ ລາວ ເມື່ອທຽບກັບປະເທດອື່ນໆໃນພາກພື້ນ ແມ່ນສະແດງໃນຕາຕະລາງລຸ່ມນີ້:

***ການຈັດລຳດັບປີ 2016[30]***

| ປະເທດ | ລຳດັບ TAB (ຈາກ 190) | ຄະແນນ TAB | ຈຳນວນ ເອກະສານສົ່ງອອກ | ເວລາໃນ ການສົ່ງອອກ (ວັນ) | ຄ່າໃຊ້ຈ່າຍ ໃນການສົ່ງອອກ (USD) | ຈຳນວນ ເອກະສານນຳເຂົ້າ | ເວລາໃນ ການນຳເຂົ້າ (ວັນ)* | ຄ່າໃຊ້ຈ່າຍ ໃນການນຳເຂົ້າ (USD) |
|---|---|---|---|---|---|---|---|---|
| ໄທ | 56 | 84.1 | n/a | 62 | 320 | n/a | 54 | 276 |
| ມາເລເຊຍ | 60 | 82.38 | n/a | 58 | 366 | n/a | 82 | 381 |
| ຫວຽດນາມ | 93 | 69.92 | n/a | 108 | 448 | n/a | 138 | 575 |
| ສປ ຈີນ | 96 | 69.13 | n/a | 47.1 | 607 | n/a | 158 | 948 |
| ກຳປູເຈຍ | 102 | 67.28 | n/a | 180 | 475 | n/a | 140 | 360 |
| ອິນໂດເນເຊຍ | 108 | 65.87 | n/a | 114.6 | 393 | n/a | 232.3 | 547 |
| ສປປ ລາວ | 120 | 62.98 | 8 | 228 | 308 | 8 | 230 | 268 |
| ຄ່າສະເລ່ຍຂອງພາກພື້ນ | (ອາຊີ & ປາຊີຟິກ) | 68.08 | n/a | 128 | 534 | n/a | 144 | 564 |

ຄະແນນໄລຍະຫ່າງຂອງລຳດັບປະເທດທຽບກັບປະເທດທີ່ຈັດຕັ້ງປະຕິບັດໄດ້ດີທີ່ສຸດ ໃນຕົວຊີ້ວັດການຄ້າຂ້າມແດນຂອງ ສປປ ລາວ ປະຈຸບັນແມ່ນ 62.98 ຊຶ່ງອາດຈະນຳໃຊ້ເປັນພື້ນຖານ ເພື່ອຕັດສິນຄວາມຄືບໜ້າໃນອະນາຄົດຂອງການປຽບທຽບ. ສປປ ລາວ ຄວນຕັ້ງເປົ້າໝາຍໃຫ້ບັນລຸລະດັບສະເລ່ຍຂອງພາກພື້ນປະມານ 68.08 ພາຍໃນເວລາສອງປີ ຊຶ່ງອາດເຄື່ອນຍ້າຍໄປຢູ່ລຳດັບທີ 100 ໃນເກນມາດຖານຂອງການຄ້າຂ້າມແດນ. ເຖິງຢ່າງໃດກໍ່ຕາມ, ພາຍໃນປີ 2020, ຄວນມຸ່ງໝັ້ນເພື່ອໃຫ້ກ້າວໄປສູ່ລຳດັບດຽວກັນກັບປະເທດໄທ ແລະ ມາເລເຊຍ, ເຊັ່ນ ຄະແນນການຄ້າຂ້າມແດນ ເລື່ອນມາຢູ່ລຳດັບທີ່ 80. ບັນທັດຖານເຫຼົ່ານີ້

[30] ບົດລາຍງານຫຍໍ້ ຂອງການຄ້າຂ້າມແດນ ພາຍໃຕ້ບົດລາຍງານຄວາມງ່າຍໃນການດຳເນີນທຸລະກິດຂອງປີ 2017

ຕ້ອງໄດ້ມີການຕີຄວາມໝາຍຄຽງຄູ່ກັບການຫຼຸດຜ່ອນເວລາ ແລະ ຕົ້ນທຶນ/ຄ່າໃຊ້ຈ່າຍທາງດ້ານການຄ້າ ໂດຍສະເພາະການສົ່ງອອກ. ການໃຊ້ເວລາໃນການສົ່ງອອກແມ່ນ 228 ຊົ່ວໂມງ ໃນນັ້ນ, ການປະຕິບັດໃຫ້ສອດຄ່ອງກັບລະບຽບການທີ່ດ່ານຊາຍແດນ (ຊຶ່ງລວມທັງການແຈ້ງພາສີ ແລະ ອື່ນໆ) ໃຊ້ເວລາພຽງແຕ່ 12 ຊົ່ວໂມງ, ໃນຂະນະທີ່ເວລາທີ່ຍັງເຫຼືອ (ເຊັ່ນ 216 ຊົ່ວໂມງ) ແມ່ນໃນການດຳເນີນກັບດ້ານເອກະສານໃຫ້ສອດຄ່ອງເພື່ອການສົ່ງອອກ ຊຶ່ງພົວພັນກັບເອກະສານຕ່າງໆ ເຊັ່ນ: ໃບຢັ້ງຢືນສຸຂະນາໄມພືດ ແລະ ສັດ, ໃບອະນຸຍາດ, ການຮັບຮອງທາງດ້ານຄຸນະພາບ ແລະ ອື່ນໆ. ສະນັ້ນ, ຂົງເຂດຈຸດສຸມຂອງວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ ແມ່ນຕ້ອງຫຼຸດຜ່ອນເວລາ ແລະ ຕົ້ນທຶນ/ຄ່າໃຊ້ຈ່າຍ ທີ່ກ່ຽວຂ້ອງກັບການປະກອບເອກະສານ ຊຶ່ງສາມາດບັນລຸໄດ້ ໂດຍການຫຼຸດຜ່ອນມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ຜ່ານການນຳໃຊ້ລະບົບແຈ້ງພາສີປະຕູດຽວ ແລະ ການຫຼຸດຜ່ອນຂັ້ນຂອດ ແລະ ການສ້າງມາດຕະຖານໃນການດຳເນີນເອກະສານ. ຖ້າເວລາໃນການສົ່ງອອກ ແລະ ນຳເຂົ້າຖືກຫຼຸດລົງຈາກລະດັບ ປະຈຸບັນ 228-230 ຊົ່ວໂມງ ໄດ້ 50%, ລຳດັບຂອງ ສປປ ລາວ ໃນການຄ້າຂ້າມແດນ ຈະຫຼຸດລົງຕ່ຳກວ່າລຳດັບທີ 100, ໂດຍໃກ້ຄຽງກັບ ສປ ຈີນ ແລະ ກຳປູເຈຍ.

**(ຂ) ຕົວຊີ້ວັດດ້ານການອຳນວຍຄວາມສະດວກທາງດ້ານການຄ້າ ຂອງອົງການດ້ານການຮ່ວມມື ແລະ ການພັດທະນາທາງດ້ານເສດຖະກິດ**

ຕົວຊີ້ວັດດ້ານການອຳນວຍຄວາມສະດວກທາງດ້ານການຄ້າ ຂອງອົງອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາສະເພາະເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດສັນຍາການອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ ແລະ ກໍ່ມີປະສິດທິຜົນຫຼາຍໃນການຕິດຕາມການຈັດຕັ້ງປະຕິບັດບັນດາມາດຕະການສະເພາະ. ໃນນີ້, ໄດ້ນຳໃຊ້ 97 ຕົວແປທີ່ຈັດກຸ່ມພາຍໃຕ້ 16 ຕົວຊີ້ວັດ ຊຶ່ງສອດຄ່ອງກັບມາດຕາຕ່າງໆໃນສັນຍາດັ່ງກ່າວ. ບັນດາຕົວຊີ້ວັດ ແມ່ນປະຕິບັດຕາມລະບົບຄູນສອງຂອງຂອບເຂດຄະແນນ ຈາກ 0-2. ໃນນີ້ ເລກສູນແມ່ນໝາຍເຖິງບໍ່ມີຄວາມຄືບໜ້າ ແລະ ເລກສອງແມ່ນການປະຕິບັດໄດ້ສູງກວ່າຄາດໝາຍທີ່ກຳນົດໄວ້[31]. ຕົວຊີ້ວັດດ້ານການອຳນວຍຄວາມສະດວກທາງດ້ານການຄ້າ ຈະມີປະສິດທິຜົນສະເພາະໃນການຕິດຕາມກວດກາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດສັນຍາ ອຄ ເນື່ອງຈາກວ່າ ໄດ້ກວມເອົາທັງໝົດຂົງເຂດຂອງມາດຕະການຕ່າງໆ ດ້ານການອຳນວຍຄວາມສະດວກທາງດ້ານການຄ້າ, ລວມທັງການມີຂໍ້ມູນ, ການເກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ, ການຫຼຸດຂັ້ນຂອດຂອງຂັ້ນຕອນທີ່ດ່ານຊາຍແດນ, ການນຳໃຊ້ລະບົບອັດຕະໂນມັດ, ການຮ່ວມມືສອງຝ່າຍ ແລະ ການນຳໃຊ້ການຄຸ້ມຄອງບໍລິຫານຄວາມສ່ຽງ, ການຢັ້ງຢືນຮັບຮອງລ່ວງໜ້າ, ຂັ້ນຕອນການອຸທອນ ແລະ ການຄ້ຳປະກັນດ້ານການຜ່ານແດນ ແລະ ອື່ນໆ. ໂດຍອີງໃສ່ການຄາດເດົາຂອງຕົວຊີ້ວັດດ້ານການອຳນວຍຄວາມສະດວກທາງດ້ານການຄ້າ ໂດຍອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ, ລັດຖະບານສາມາດກຳນົດບູລິມະສິດຂອງການຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ຊອກຫາການສະໜັບສະໜູນທີ່ຈຳເປັນ ຈາກອົງການການຄ້າໂລກ ຕໍ່ກັບການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະ ການສ້າງຂີດຄວາມສາມາດໃນຂົງເຂດທີ່ເປັນຊ່ອງວ່າງ.

[31] ບົດລາຍງານອົງການການຄ້າໂລກ 2015 "ເພີ່ມຄວາມໄວໃຫ້ກັບການຄ້າ: ຜົນປະໂຫຍດ ແລະ ບັນຫາທ້າທາຍ ຂອງການຈັດຕັ້ງປະຕິບັດສັນຍາວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າໃນຂອບອົງການການຄ້າໂລກ". ອົງການການຄ້າໂລກ.

## ເອກະສານຊ້ອນທ້າຍ V: ບັນດາມາດຕະການໃນສັນຍາການອຳນວຍຄວາມສະດວກທາງດ້ານການຄ້າຂອງ ສປປ ລາວ

| ການຈັດໝວດມາດຕະການ ພາຍໃຕ້ສັນຍາການອຳນວຍຄວາມສະດວກທາງດ້ານການຄ້າຂອງ ສປປ ລາວ | | | | | | | | |
|---|---|---|---|---|---|---|---|---|
| ໝວດ A | | | ໝວດ B | | | ໝວດ C | | |
| ລ.ດ. | ມາດຕາ | ມາດຕະການ | ລ.ດ. | ມາດຕາ | ມາດຕະການ | ລ.ດ | ມາດຕາ | ມາດຕະການ |
| 1 | 1.1 | ການພິມເຜີຍແຜ່ຂໍ້ມູນຜ່ານສິ່ງພິມ | 1 | 2.1 | ໂອກາດໃນການປະກອບຄຳຄິດເຫັນ ແລະ ຂໍ້ມູນກ່ອນມີຜົນບັງຄັບໃຊ້ | 1 | 3 | ການຢັ້ງຢືນຮັບຮອງລ່ວງໜ້າ |
| 2 | 1.2 | ສະໜອງຂໍ້ມູນທາງດ້ານການຄ້າ ຜ່ານທາງອິນເຕີເນັດ | 2 | 2.2 | ການປຶກສາຫາລື ກັບພາກສ່ວນທີ່ກ່ຽວຂ້ອງ | 2 | 5.3 | ໂອກາດໃນການທົດສອບຄັ້ງທີ່ 2 |
| 3 | 1.3 | ການກຳນົດຈຸດສອບຖາມ | 3 | 6.1 | ລະບຽບການທົ່ວໄປກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ | 3 | 7.4 | ການບໍລິຫານຄວາມສ່ຽງ |
| 4 | 1.4 | ການແຈ້ງການໃຫ້ອົງການການຄ້າໂລກ | 4 | 6.3 | ລະບຽບໃນການປັບໃໝ | 4 | 7.5 | ການກວດສອບພາຍຫຼັງການປ່ອຍສິນຄ້າ |
| 5 | 4 | ຂັ້ນຕອນການອຸທອນ ຫຼື ທົບທວນຄືນ | 5 | 7.2 | ການຊຳລະຜ່ານທາງເອເລັກໂຕຣນິກ | 5 | 7.6 | ການສ້າງຕັ້ງ ແລະ ພິມເຜີຍແຜ່ກ່ຽວກັບໄລຍະເວລາສະເລ່ຍໃນການປ່ອຍສິນຄ້າ |
| 6 | 5.1 | ແຈ້ງການໃນການເພີ່ມຂັ້ນຕອນການຄວບຄຸມ ຫຼື ການກວດກາ | 6 | 7.3 | ການແຍກການປ່ອຍສິນຄ້າອອກຈາກ ການກຳນົດສຸດທ້າຍ ກ່ຽວກັບພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ | 6 | 7.7 | ການອຳນວຍຄວາມສະດວກທາງດ້ານການຄ້າສຳລັບຜູ້ປະກອບການມາດຕະຖານເອອີໂອ (AEO) |
| 7 | 5.2 | ການກັກກັນສິນຄ້າ | 7 | 7.9 | ການອຳນວຍຄວາມສະດວກໃນການກວດປ່ອຍ ສິນຄ້າເນົ່າເປື່ອຍງ່າຍ | 7 | 7.8 | ການຂົນສົ່ງທີ່ວ່ອງໄວ |
| 8 | 6.2 | ລະບຽບ ກ່ຽວກັບການເກັບຄ່າທຳນຽມ ແລະ ຄ່າບໍລິການສຳລັບຂັ້ນຕອນພາສີ ຫຼື ການນຳເຂົ້າ ແລະ ສົ່ງອອກ | | | | 8 | 8 | ການຮ່ວມມືຂອງໜ່ວຍງານທີ່ດ່ານຊາຍແດນ |
| 9 | 7.1 | ມາດຕະການອຳນວຍຄວາມສະດວກທາງດ້ານການຄ້າສຳລັບຜູ້ໄດ້ຮັບອະນຸຍາດກ່ອນສິນຄ້າຮອດກ່ານ | | | | 9 | 10.1 | ການທົບທວນຄືນຂໍ້ກຳນົດກ່ຽວກັບ ຂັ້ນຕອນ ແລະ ເອກະສານທີ່ຮຽກຮ້ອງຕ້ອງການ |
| 10 | 9 | ການເຄື່ອນຍ້າຍສິນຄ້ານຳເຂົ້າພາຍໃນປະເທດພາຍໃຕ້ການຄຸ້ມຄອງຂອງພາສີ | | | | 10 | 10.2 | ການຍອມຮັບສຳເນົາເອກະສານ |
| 11 | 10.5 | ບໍ່ບັງຄັບໃຫ້ມີການກວດກາກ່ອນການຈັດສົ່ງ | | | | 11 | 10.3 | ການນຳໃຊ້ມາດຕະຖານສາກົນ |
| 12 | 10.6 | ການນຳໃຊ້ບໍລິການ ຜູ້ບໍລິການແຈ້ງພາສີ | | | | 12 | 10.4 | ລະບົບແຈ້ງພາສີປະຕູດຽວ |
| 13 | 10.9 | ການອະນຸຍາດນຳເຂົ້າສິນຄ້າຊົ່ວຄາວສຳລັບການຜະລິດປຸງແຕ່ງເພື່ອສົ່ງອອກ | | | | 13 | 10.7 | ມາດຖານການຮຽກຮ້ອງດ້ານເອກະສານ ທີ່ດ່ານສາກົນ |
| | | | | | | 14 | 10.8 | ຂໍ້ກຳນົດກ່ຽວກັບການສົ່ງກັບສິນຄ້າທີ່ຖືກປະຕິເສດ |
| | | | | | | 15 | 11 | ເສລີພາບໃນການຜ່ານແດນ |
| | | | | | | 16 | 12 | ການຮ່ວມມືຂອງ ຂະແໜງພາສີ |